# ພາກທີ 1 ຄຳນຳ

## 1.1. ສະພາບທົ່ວໄປ

ບົດລາຍງານນີ້ ໄດ້ສະເໜີຜົນຂອງການສຶກສາ "ການສຶກສາແຜນແມ່ບົດ ເພື່ອພັດທະນາກະສິກຳ ຮອບດ້ານ ຢູ່ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ". ການສຶກສາແມ່ນອີງຕາມ ກອບຂອງວຽກສຳລັບການສຶກສາ ທີ່ໄດ້ຕົກລົງລະຫວ່າງ ຄະນະກະກຽມການສຶກສາ ຈັດຕັ້ງໂດຍ ອົງການຮ່ວມມືກັບສາກົນຂອງຍີ່ປຸ່ນ (JICA) ແລະ ກະຊວງກະສິກຳ ແລະ ປ່າໄມ້ (MAF), ຂອງ ລັດຖະບານແຫ່ງ ສປປລາວ ລົງວັນທີ 30 ມິຖຸນາ 2000.

## 1.2 ພື້ນຖານ ແລະ ຈຸດປະສົງ

### 1.2.1 ພື້ນຖານຂອງການສຶກສາ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປລາວ) ມີເນື້ອທີ່ 26.68 ລ້ານເຮັກຕາ ແລະ ມີພົນລະເມືອງປະມານ 5.23 ລ້ານຄົນ ໃນປີ 2000. ເນື້ອທີ່ສ່ວນໃຫຍ່ປະກອບດ້ວຍ ພູດອຍ ແລະ ເນີນສູງ ມີເນື້ອທີ່ກະສິກຳ ປະມານ 10%. ເຖິງຢ່າງໄດ້ກໍຕາມ, ເສດຖະກິດຂອງປະເທດກໍຍັງພົ້ນເດັ່ນດ້ວຍ ຂະແໜງການກະສິກຳ, ທີ່ ມີສ່ວນແບ່ງ52%ຂອງ GDP ແລະ ກວມເອົາແຮງງານ 80% ຂອງປະເທດ. GDP ຕໍ່ຫົວຄົນ ໃນປີ 1997ເທົ່າປະມານ 400 ໂດລາສະຫະລັດເ ປາກອບດ້ວຍຈຳນວນຄອບຄົວທີ່ຂຶ້ນກັບກະສິກຳພໍລ້ຽງກຸ້ມຕົນເອງ. ນັບແຕ່ກົນໄກເສດຖະກິດໃໝ່ ທີ່ນຳໃຊ້ ໃນປີ 1996, ສປປ ລາວໄດ້ປ່ຽນຈາກການວາງແຜນແບບ ລວມສູນ ໄປເປັນແບບເສດຖະກິດທັນສູ່ຕະຫຼາດ. ໃນຂະແໜງການກະສິກຳ, ດ້ວຍການລົບລ້າງ ລະບົບສະຫະກອນກະສິກຳ ແລະ ນຳໃຊ້ສິດການປູກຝັງ ຂອງຊາວກະສິກອນ ໃນປີ 1989, ຊາວກະສິກອນໄດ້ຮັບສິດຕໍ່ດິນກະສິກຳ ຂອງເຂົາເຈົ້າເອງ. ປະກົດການອີກອັນນຶ່ງ ທີ່ສະທ້ອນຕໍ່ການກະສິກຳ ກໍຄື ການເຂົ້າຮ່ວມ ASEAN ຂອງ ສປປລາວ ໃນປີ 1997. ຄາດຄະເນວ່າ ອັດຕາພາສີສິນຄ້າ ຈາກກະສິກຳ, ປ່າໄມ້ ແລະ ການປະມົງ ຈະຫຼຸດລົງຫຼາຍ ໃນປີ 2015.

ການຜະລິດກະສິກຳ ມີລະບົບ ສາມລັກສະນະໃຫຍ່: ການຜະລິດເຂົ້າ-ແລ້ງ ດ້ວຍການເຮັດໄຮ່ ໃນເຂດພູດອຍພາກເໜືອ ແລະ ເຂດຕາວັນອອກ; ການເຮັດນາປູກເຂົ້າ ຍາວຕາມລຳແມ່ນ້ຳຂອງ ແລະ ການປູກພືດສິນຄ້າ ໃນເຂດເນີນສູງພາກໃຕ້. ເຂົ້າ ແມ່ນພືດອາຫານຈຳເປັນ, ແຕ່ວ່າ ການຜະລິດສ່ວນຫຼາຍຍັງຂຶ້ນກັບທຳມະຊາດ (ຝົນ), ແລະ ຈຶ່ງເຮັດໃຫ້ຜະລິດຕະພາບບໍ່ຄົງທີ່. ຍິ່ງໄປກວ່ານັ້ນ, ຍ້ອນການກະຈາຍ ຂອງລັກສະນະພູມສາດ ຂອງດິນກະສິກຳ ແລະ ຜົນຜະລິດເຂົ້າຕ່ຳ ໃນເຂດພູດອຍ ໄດ້ເຮັດໃຫ້ຊຸມຊົນເຂດເນີນສູງ ຂາດອາຫານ

[1] Country Assistance Strategy for Lao PDR, World Bank, March 30, 1999

ເຮື້ອຮັງ. ເຖິງແມ່ນວ່າພາຍໃນປະເທດຈະມີ ຊັບພະຍາກອນທຳມະຊາດຫຼາຍ ທີ່ ສາມາດສະໜອງຕາມຄວາມຕ້ອງການ ດ້ານອາຫານໃນທົ່ວປະເທດກໍຕາມ, ການສະໜອງເຂົ້າສ່ວນທີ່ບໍ່ພຽງພໍຢ່າງຄົງທີ່ ແມ່ນມີຄວາມຫຍຸ້ງຍາກ ຍ້ອນເຕັກນິກການປູກຝັງບໍ່ເໝາະສົມ, ໂຄງລ່າງບໍ່ມີພຽງພໍ ແລະ ລະບົບການຕະຫຼາດເຮັດໜ້າທີ່ບໍ່ໄດ້ດີ ເກືອບທັງໝົດ.

ຜະລິດຕະພັນໄມ້ສົ່ງອອກ ຮວມທັງໄມ້ ທ່ອນປະກອບເປັນປະມານ 30% ຂອງການສົ່ງອອກທັງໝົດ. ຄາດຄະເນການປົກຫຸ້ມຂອງປ່າໄມ້ ລົດລົງ 4% ໃນຊ່ວງໄລຍະຊຸມ 20 ປີທ້າຍມານີ້ ຍ້ອນການຂະຫຍາຍ ເນື້ອທີ່ປູກຝັງຢູ່ທົ່ງພຽງ ແລະ ການເຮັດໄຮ່. ເນື້ອທີ່ປ່າໄມ້ໄດ້ລົດລົງ ຍ້ອນການຕັດໄມ້ຫຼາຍເກີນຄວນ ແລະ ການຄຸ້ມຄອງປ່າໄມ້ບໍ່ດີ. ພວກຊາວໄຮ່ມີປະມານ 38% ຂອງຈຳນວນຄອບຄົວທັງໝົດ.

ຂະແໜງການກະສິກຳ ໄດ້ສະແດງໃຫ້ເຫັນວ່າ ມີການເຕີບໂຕຊ້າ, ຈຶ່ງເຮັດໃຫ້ ລັດເນັ້ນ ການພັດທະນາເພີ່ມຂຶ້ນ ໃນແຜນພັດທະນາເສດຖະກິດສັງຄົມຄັ້ງທີ ສີ່ (1996-2000). ການເລີ່ມຕົ້ນນີ້ ດ້ວຍການລິງມື ພັດທະນານະໂຍບາຍ ໂດຍເນັ້ນ ສາມແຜນງານ: ຮັບປະກັນດ້ານສະບຽງອາຫານ; ສົ່ງເສີມການຜະລິດກະສິກຳ ແລະ ຜະລິດຕະພັນສັດເປັນສິນຄ້າ; ແລະ ຢຸດຕິການຖາງປ່າເຮັດໄຮ່. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສ້າງນະໂຍບາຍພັດທະນາພື້ນຖານກັບບັນຫາດັ່ງກ່າວຂ້າງເທິງເປັນຫົວຂໍ້ສຳຄັນ. ນະໂຍບາຍນີ້ໄດ້ອະທິບາຍໄວ້ ໃນ "ວິໄສທັດການພັດທະນາກະສິກຳ ແລະ ປ່າໄມ້ ຮອດປີ 2020". ນອກຈາກນັ້ນ, "ຍຸດທະສາດວິໄສທັດຂອງລັດຖະບານ ສຳລັບຂະແໜງກະສິກຳ ແລະ ປ່າໄມ້" "ຍຸດທະສາດວິໄສທັດ" ຮ່າງຂຶ້ນໂດຍກະຊວງກະສິກຳ ແລະ ປ່າໄມ້ ດ້ວຍການຊ່ວຍເຫຼືອ ຈາກ ທະນາຄານພັດທະນາອາຊີ (ADB), ໄດ້ກຳນົດ ຍຸດທະສາດການພັດທະນາປະກອບດ້ວຍ ເຈັດວິທີການ. ມີຄືດັ່ງນີ້: (i) ສ້າງຄວາມເຂັ້ມແຂງ ແກ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ສະຖາບັນການຈັດຕັ້ງທ້ອງຖິ່ນ; (ii) ພັດທະນາຊັບພະຍາກອນມະນຸດ; (iii) ຈັດວາງກົດລະບຽບທຸລະກິດ ພາຍໃນ ແລະ ພາຍນອກ; (iv) ສ້າງເງື່ອນໄຂສຳລັບເປີດການຄ້າເສລີ; (v) ຮັບປະກັນ ຄວາມປອດໄພດ້ານອາຫານ; (vi) ຊຸກຍູ້ການພັດທະນາສະພາບແວດລ້ອມ ແບບຍືນຍົງ ໃນເຂດດິນຄ້ອຍຊັນລວມທັງການຢຸດຕິການເຮັດໄຮ່ເລື່ອນລອຍ; (vi) ຊຸກຍູ້ການຄຸ້ມຄອງຊົນລະປະທານ.

ຍຸດທະສາດ ແລະ ວິໄສທັດ ໄດ້ໃຫ້ທິດທາງ ແລະ ໂຄງປະກອບສຳລັບພັດທະນາກະສິກຳ ຢູ່ ສປປລາວ. ເຖິງຢ່າງໃດກໍຕາມ, ທັງໝົດເຫຼົ່ານັ້ນ ບໍ່ໄດ້ສະແດງໃຫ້ເຫັນ ແຜນພັດທະນາສະເພາະ ຫຼື ແຜນປະຕິບັດ ສຳລັບເປົ້າໝາຍ ໃຫ້ເກີດເປັນຈິງ. ສະນັ້ນ, ແຜນສຳລັບກິດຈະກຳທີ່ກ່ຽວຂ້ອງ ເພື່ອໃຫ້ບັນລຸວິໄສທັດ, ຜ່ານຍຸດທະສາດເຫຼົ່ານີ້ ແມ່ນມີຄວາມຕ້ອງການສ້າງຂຶ້ນຢ່າງຮີບດ່ວນ.

ຈຶ່ງໄດ້ພິຈາລະນາວ່າ ພື້ນຖານຂ້າງເທິງ ແລະ ພື້ນຖານຜົນ ຂອງໂຄງການຮ່າງສຶກສາ ສ້າງຂຶ້ນໃນເດືອນ ມີນາ 1999, ລັດຖະບານລາວໄດ້ຮ້ອງຂໍໃຫ້ລັດຖະບານຍີ່ປຸ່ນ ໃນເດືອນ ພະຈິກ 1999, ເພື່ອໃຫ້ການຊ່ວຍເຫຼືອ ແກ່ ການສຶກສາແຜນແມ່ບົດເພື່ອພັດທະນາກະສິກຳຮອບດ້ານ. ໃນການຕອບຮັບການຮ້ອງຂໍດັ່ງກ່າວ, ລັດຖະບານຍີ່ປຸ່ນໄດ້ສົ່ງຄະນະກະກຽມຄະນະສຶກສາ ມາ ສປປລາວ ໃນເດືອນ ມິຖຸນາ-ກໍລະກົດ 2000. ຄະນະສຶກສາໄດ້ກວດສອບພື້ນຖານ ຂອງການຮ້ອງຂໍ ຮວມທັງກອບ ແລະ ເນື້ອໃນຂອງຄວາມຕ້ອງການຄວາມຊ່ວຍເຫຼືອ. ຈຶ່ງເປັນຜົນຕົກລົງ ໃນກອງປະຊຸມ ກອບຂອງວຽກ ສຳລັບສຶກສາ ທີ່ໄດ້ເຮັດຂຶ້ນລະຫວ່າງຄະນະສຶກສາ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຂອງສປປລາວ, ໃນວັນທີ 30 ມິຖຸນາ 2000.

### 1.2.2 **ຈຸດປະສົງຂອງການສຶກສາ**

**ຈຸດປະສົງຂອງການສຶກສາມີຄື:**

(1). ຮ່າງແຜນປະຕິບັດການ (A/P) ແລະ ແຜນງານການປະຕິບັດ ທີ່ຊ່ວຍຊຸກຍູ້ ໃຫ້ມີປະສິດທິຜົນຂຶ້ນກວ່າເກົ່າ ຂອງການພັດທະນາກະສິກຳ, ບົນພື້ນຖານ ໂຄງສ້າງຂອງ ຍຸດທະສາດວິໄສທັດ ເປັນຍຸດທະສາດພັດທະນາ ສຳລັບຂະແໜງກະສິກຳ ຂອງ ສປປລາວ, ແລະ ວິໄສທັດ 2020 ໄດ້ເປັນ ພື້ນຖານນະໂຍບາຍພັດທະນາ.

(2). ກຳນົດແຜນງານ ແລະ ໂຄງການ ບູລິມະສິດ ເພື່ອອີງການຜູ້ໃຫ້ທຶນຊ່ວຍເຫຼືອ ຮວມທັງລັດຖະບານຍີ່ປຸ່ນ, ດ້ວຍການກວດສອບ ແຜນປະຕິບັດການ ແລະ ສືບຕໍ່ສຶກສາຮ່າງເພີ່ມເຕີມ ແລະ ແຜນງານປະຕິບັດ ດ້ວຍການ ເບິ່ງອົງການທີ່ຮັບຜິດຊອບຄຸ້ມຄອງ ໃນການປະຕິບັດ;

(3). ຖ່າຍທອດເຕັກໂນໂລຊີ ໃຫ້ແກ່ຜູ້ຮ່ວມວຽກ ດ້ານວິທີການການຄົ້ນຫາ, ຂັ້ນຕອນການວາງແຜນ ແລະ ວິທີການຮ່າງ ໃນວິຊາທີ່ກ່ຽວຂ້ອງ.

## 1.3. **ຂັ້ນຕອນການສຶກສາ ແລະ ຄວາມກ້າວໜ້າຂອງວຽກ**

### 1.3.1 **ຂັ້ນຕອນການສຶກສາ**

ການສຶກສາກວມໝົດ ສປປລາວ, ໄດ້ດຳເນີນການເປັນສອງໄລຍະ ຂອງສອງປີງົບປະມານຍີ່ປຸ່ນ ໄລຍະທີ ນຶ່ງ, ແຜນປະຕິບັດການໄດ້ຮ່າງຂຶ້ນ ເປັນລັກສະນະທົ່ວໄປ ເຖິງປີ 2020 ໃນໂຄງສ້າງຂອງວິໄສທັດ ສຳລັບ 2020 ແລະ ຍຸດທະສາດວິໄສທັດ ສຳລັບຂະແໜງການກະສິກຳ. ການສຶກສາໄດ້ກວດສອບ ແຜນງານພັດທະນາປະຕິບັດໂດຍລັດຖະບານ ພ້ອມດ້ວຍ ແລະ ນອກຈາກ ການຊ່ວຍເຫຼືອສາກົນ, ຂັ້ນຕອນ ແລະ ການປະຕິບັດຂອງການແບ່ງຂັ້ນຄຸ້ມຄອງ, ນະໂຍບາຍການຫັນເຂົ້າສູ່ເສດຖະກິດຕະຫຼາດ, ຖານະການພັດທະນາຊົນນະບົດໃນ

ປັດຈຸບັນ, ເງື່ອນໄຂຂອງການກະສິກຳ ແລະ ການເຮັດຟາມ ຮວມທັງການເຮັດໄຮ່, ເງື່ອນໄຂ ໂຄງລ່າງຊົນນະບົດ, ໃນແງ່ຂອງສິ່ງແວດລ້ອມ ແລະ ໃນແງ່ຂອງສັງຄົມ ແລະ ວັດທະນະທຳ. ແຜນປະຕິບັດງານ ໄດ້ຮ່າງຂຶ້ນບົນພື້ນຖານ ການກວດສອບ ແຜນງານ/ນະໂຍບາຍຂ້າງເທິງ ແລະ ຈາກຄຳເຫັນຂອງການຈັດສຳມະນາຄັ້ງທີ ນຶ່ງ ກັບຕົວແທນຈາກ ອົງການຈັດຕັ້ງພາຍ ໃນ ແລະ ພາຍນອກ. ໄລຍະທີສອງ, ຂໍ້ມູນ ແລະ ຂ່າວສານ ເພີ່ມເຕີມທີ່ຈຳເປັນ ໄດ້ລົງເກັບ ກຳເອົາ ບົນພື້ນຖານ ຮ່າງແຜນປະຕິບັດງານໃນໄລຍະທີ ນຶ່ງ. ສືບຕໍ່ແຜນງານ ການຈັດຕັ້ງ ປະຕິບັດນີ້, ແນວຄວາມຄິດລິເລີ່ມ ແລະ ໂຄງການທີ່ໄດ້ຄັດເລືອກ ຈະນຳມາ ຮ່າງແຜນເຖິງ ປີ 2010. ແຜນດັ່ງກ່າວ ສາມາດສະໜັບສະໜູນໂດຍ ອົງການຜູ້ໃຫ້ທຶນ ລວມທັງລັດຖະ ບານຍີ່ປຸ່ນ. ໝາກຜົນຂອງການຮ່າງຈະໄດ້ນຳສະເໜີ ໃນຮ່າງບົດລາຍງານສຸດທ້າຍ ແກ່ກອງ ປະຊຸມສຳມະນາຄັ້ງທີສອງ. ບົດລາຍງານສຸດທ້າຍ ຈະໄດ້ກະກຽມບົນພື້ນຖານການໃຫ້ຄຳ ເຫັນ ແລະ ຜົນຂອງກອງປະຊຸມສຳມະນາຄັ້ງທີສອງ.

**ລາຍການການສຶກສາ ໃນແຕ່ລະໄລຍະປີງົບປະມານມີ ດັ່ງນີ້:**

**(1) ໄລຍະຂອງປີທີ່ນຶ່ງ (ງົບປະມານການເງິນປີ 2000)**

**(a) ວຽກສະໜາມ ເທື່ອທີນຶ່ງ**

- ປຶກສາຫາລືບົດລາຍງານເບື້ອງຕົ້ນ
- ສຳເລັດແຜນສຳລັບ ຖ່າຍທອດເຕັກໂນໂລຊີ
- ເກັບກຳຂ່າວສານ ແລະ ຂໍ້ມູນ ດ້ານເງື່ອນໄຂສັງຄົມ-ເສດຖະກິດ ແລະ ທຳມະຊາດ
- ເກັບກຳຂ່າວສານ ແລະ ຂໍ້ມູນສຳລັບຮ່າງ ແຜນປະຕິບັດງານ ຮອດ 2020 ພ້ອມດ້ວຍ ການວິເຄາະ
- ຂຽນຮ່າງແຜນປະຕິບັດງານ ຮອດປີ 2020

**(b) ວຽກບ້ານຄັ້ງທີ ນຶ່ງ**

- ສົນທະນາ ຮ່າງແຜນປະຕິບັດການ ແລະ ສຶກສາວິທີການຈັດລຳດັບ ກັບໃຈກາຍູ່ ໂຕກຽວ

**(c) ລົງພາກສະໜາມຄັ້ງທີ ສອງ**

- ສົນທະນາ ຮ່າງແຜນປະຕິບັດງານ ແລະ ແຜນງານ ສຳລັບການສຳມະນາຄັ້ງທີນຶ່ງ ກັບລັດ ຖະບານ
- ຈັດສະເມນາຄັ້ງທີ ນຶ່ງ.
- ຮ່າງແຜນປະຕິບັດງານ ບົນພື້ນຖານຄຳເຫັນ ແລະ ການແນະນຳ ໃນການສຳມະນາຄັ້ງທີ ນຶ່ງ.
- ກະກຽມບົດລາຍງານຄວາມກ້າວໜ້າ (1) ແລະ ສົນທະນາກັບກະຊວງ ກປ.

(d) ວຽກບ້ານຄັ້ງທີສອງ

- ອະທິບາຍບົດລາຍງານຄວາມກ້າວໜ້າຂອງວຽກ
- ກະກຽມບົດລາຍງານກາງໄລຍະ ແລະ ສົນທະນາກັບ ອົງການໄຈກາ ໂຕກຽວ

## (2) ໄລຍະປີທີສອງ (ປີງົບປະມານ 2001)

(a) ວຽກສະໜາມຄັ້ງທີ ສາມ

- ສົ່ງບົດລາຍງານໄລຍະກາງ
- ສົນທະນາບົດລາຍງານໄລຍະກາງ ກັບກະຊວງກະສິກຳ ແລະ ປ່າໄມ້
- ເກັບກຳຂ່າວສານ ແລະ ຂໍ້ມູນເພີ່ມເຕີມ ສຳລັບຮ່າງແຜນງານເພື່ອປະຕິບັດ
- ຮ່າງແຜນງານປະຕິບັດ ບົນພື້ນຖານ ແຜນປະຕິບັດງານ
- ເລີ່ມດຳເນີນ ການທົດສອບ ສະພາບວແວດລ້ອມ ສຳລັບ ແຜນງານ ແລະ ໂຄງການບຸລິມະສິດ ທີ່ເຫັນວ່າຈຳເປັນ.
- ແຜນການປຶກສາຫາລື ສຳລັບການສຳມະນາຄັ້ງທີສອງ ກັບກະຊວງກະສິກຳ ແລະ ປ່າໄມ້ ລະຫວ່າງ ການລົງພາກສະໜາມຄັ້ງທີ ສີ່

(a) ວຽກບ້ານຄັ້ງທີ ສາມ

- ສົ່ງບົດລາຍງານຄວາມກ້າວໜ້າ (2) ແລະ ສົນທະນາກັບ ອົງການໄຈກາ ໂຕກຽວ
- ກຽມຮ່າງບົດລາຍງານສຸດທ້າຍ
- ກະກຽມເອກະສານສຳລັບ ສຳມະນາຄັ້ງທີສອງ

(b) ລົງພາກສະໜາມຄັ້ງທີ ສີ່

- ສົນທະນາ ບົດລາຍງານສຸດທ້າຍ ກັບ ກະຊວງກະສິກຳ ແລະ ປ່າໄມ້
- ຈັດສຳມະນາ ຄັ້ງທີ ສອງ

(c) ວຽກບ້ານ ຄັ້ງທີ ສີ່

- ກະກຽມ ບົດລາຍງານສຸດທ້າຍ
- ກະກຽມບົດລາຍງານການປະຕິບັດ ກ່ຽວກັບ ການຖ່າຍທອດ ເຕັກໂນໂລຊີ

### 1.3.2 ຄວາມກ້າວໜ້າຂອງການສຶກສາ

ກິດຈະກຳດັ່ງລຸ່ມນີ້ ໄດ້ເຮັດສຳເລັດ ລະຫວ່າງວຽກຂອງ ໄລຍະທີ 1 ແລະ ໄລຍະທີສອງ ຂອງການສຶກສາພາກສະໜາມ.

<u>ວຽກໄລຍະທີ 1</u>

(1) ກອງປະຊຸມເບື້ອງຕົ້ນ ລະຫວ່າງ ຄະນະຊີ້ນຳໂຄງການ ແລະ ທີມຄະນະສຶກສາ ໃນວັນທີ 28 ແລະ 30 ພະຈິກ 2000.

(2) ຈັດສຳມະນາເພື່ອແນະນຳ ຢູ່ວຽງຈັນ 12 ທັນວາ 2000, ແລະ ຢູ່ ທັງ ຫຼວງພະບາງ ແລະ ຈຳປາສັກ ໃນວັນທີ 15 ທັນວາ 2000.

(3) ເກັບກຳຂໍ້ມູນສຳລັບກະສິກຳ ທີ່ເປັນທ່າແຮງ, ວິເຄາະ ລະບົບຂໍ້ມູນພູມສາດ ລວມ ທັງຂໍ້ມູນເນື້ອທີ່ດິນນຳໃຊ້, ດິນ, ຂໍ້ມູນພູມີປະເທດໃນປັດຈຸບັນ, ຂໍ້ມູນ ລະເບີດຍັງບໍ່ທັນແຕກ ແລະ ອື່ນໆ. ໃນເດືອນທັນວາ 2000;

(4) ເກັບກຳຂໍ້ມູນສະຖິຕິ ສຳລັບ ການວິເຄາະເສດຖະກິດ-ສັງຄົມ ລວມທັງ ການສຳຫຼວດພົນລະເມືອງ 1995, ສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ໃນຄົວເຮືອນ 1997/98 ແລະ ສຳຫຼວດຂໍ້ມູນກະສິກຳ 1998/99 ໃນເດືອນ ທັນວາ 2000.

(5) ສຳຫຼວດພື້ນຖານ ເພື່ອເກັບກຳ ແລະ ລວບລວມ ຂໍ້ມູນ ແລະ ຂ່າວສານ ທີ່ພົວພັນ ດ້ານ ສັງຄົມ ແລະ ເສດຖະກິດ-ກະສິກຳ ຢູ່ ລະດັບແຂວງ ແລະ ເມືອງ ໃນເດືອນ ທັນວາ 2000 ຫາ ເດືອນ ມີນາ 2001.

(6) ຊ່ວຍການແນະນຳ ດ້ານເຕັກນິກ ແກ່ກົມອຸຕຸນິຍົມ ແລະ ອຸທົກກະສາດ ໃນການຕິດຕັ້ງ ສະຖານີສັງເກດການດ້ານ ອຸຕຸ-ອຸທົກກະສາດ ລວມທັງການຄັດເລືອກຈຸດ, ອອກແບບ ແລະ ກວດກາ ການກໍ່ສ້າງ ແຕ່ ເດືອນທັນວາ 2000 ຫາ ມີນາ 2001.

(7) ວິເຄາະ ສັງຄົມ-ເສດຖະກິດ ບົນພື້ນຖານ ການສຳຫຼວດກະສິກຳ ແລະ ພົນລະເມືອງ ອີງຕາມ ລະບົບຟາມ, ຂໍ້ຈຳກັດ ແລະ ທິດທາງໃນການພັດທະນາ ໃນປັດຈຸບັນ, ດ້ວຍການຈັດປະເພດ ຂອງທຸກໆເມືອງ ເຂົ້າໃນ 10 ກຸ່ມ ໃນເດືອນ ມັງກອນ 2001;

(8) ວິເຄາະພື້ນທີ່ເຂດທ່າແຮງກະສິກຳ ບົນພື້ນຖານການປຸງແຕ່ງ GIS ໃນດ້ານ ນາເຂົ້າ, ພືດເນີນສູງ, ໄມ້ໃຫ້ໝາກ ແລະ ທົ່ງຫຍ້າ ໃນເດືອນ ມັງກອນ 2001;

(9) ຮ່າງໂຄງສ້າງຂອງແນວຄວາມຄິດ ແລະ ວິທີການຂອງແຜນປະຕິບັດງານ;

(10) ກະກຽມຮ່າງແຜນປະຕິບັດງານ ເພື່ອພັດທະນາກະສິກຳ ຮອບດ້ານຮອດປີ 2020 ຄວບຄູ່ໄປກັບ ການຮ່າງບົດສະເໜີແຜນງານ ແລະ ໂຄງການທີ່ໄດ້ຈັດໄວ້ໃນລາຍການ ດ້ວຍການປຶກສາຫາລືກັບກົມ ແລະ ອົງການຕ່າງໆ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ສາຍກະຊວງທີ່ກ່ຽວຂ້ອງອື່ນໆ ໃນເດືອນ ມັງກອນ 2001;

(11) ຈັດສຳມະນາລະດັບແຂວງ ຢູ່ກຳແພງນະຄອນວຽງຈັນ, ຫຼວງພະບາງ ແລະ ຈຳປາສັກ, ສະເໜີ ຮ່າງແຜນປະຕິບັດງານ ແລະ ແລກປ່ຽນຄຳຄິດຄຳເຫັນກັບຕົວແທນຂອງແຂວງ, ໃນວັນທີ 30 ມັງກອນ 2001.

(12) ສົນທະນາກັບຄະນະຊີ້ນຳໂຄງການ ຕໍ່ແຜນປະຕິບັດງານ ໃນວັນທີ 8 ກຸມພາ 2001;

(13) ລາຍງານຜົນການສຶກສາກາງໄລຍະ ແລະ ອະທິບາຍຮ່າງຂອງແຜນປະຕິບັດງານຕໍ່ ສູນກາງ ຈາຍກາ ທີ່ໂຕກຽວ ໂດຍຫົວໜ້າຄະນະ ແລະ ຊ່ຽວຊານພັດທະນາຊົນນະບົດ ແຕ່ວັນທີ 13-16 ກຸມພາ 2001.

(14) ກອງປະຊຸມສຳມະນາສູນກາງຄັ້ງທີ ນຶ່ງ ເຂົ້າຮ່ວມໂດຍ ຕົວແທນຂອງສະມາຊິກ ຄະນະຊີ້ນຳ ໂຄງການຂອງອົງການທີ່ກ່ຽວຂ້ອງຂອງລັດ, ອົງການສາກົນຜູ້ໃຫ້ທຶນ ແລະ ອົງການບໍ່ແມ່ນ ລັດຖະບານ NGOs ເພື່ອສະເໜີ ຮ່າງແຜນປະຕິບັດການ ແລະ ຮັບເອົາການປະກອບຄຳ ເຫັນ ແລະ ແນະນຳ ໃນວັນທີ 1 ມີນາ 2001;

(15) ກະກຽມ ແລະ ສະເໜີ ບົດລາຍງານຄວາມກ້າວໜ້າຂອງວຽກ (1) ຕໍ່ ກະຊວງກະສິກຳ ແລະ ປ່າໄມ້ ໃນວັນທີ 7 ມີນາ 2001;

(16) ປັບປຸງຂັ້ນສຸດທ້າຍ ຂອງແຜນປະຕິບັດງານ ບົນພື້ນຖານຜົນຂອງການ ສຶກສາພາກສະໜາມ ຈາກຊ່ວງໄລຍະ ທີ ນຶ່ງ;

(17) ກະກຽມບົດລາຍງານ ກາງໄລຍະ;

<u>(18)</u> ເຂົ້າຮ່ວມສຳມະນາຂອງການສຶກສາຂອງ JICA "ສະໜັບສະໜູນນະໂຍບາຍ ເສດຖະກິດ ມະຫາພາກ ສຳລັບການພັດທະນາເສດຖະກິດ-ສັງຄົມໃນ ສປປລາວ" ຈັດຂຶ້ນ ທີ່ວຽງຈັນ, ວັນ ທີ 22-23 ມີນາ 2001;

<u>ວຽກໄລຍະທີ 2</u>

(19) ສະເໜີບົດລາຍງານ ກາງໄລຍະ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ໃນວັນທີ 26 ພຶດສະພາ 2001;

(20) ຈັດສຳມະນາໃນວຽງຈັນ ສະເໜີ ແຜນປະຕິບັດການ ແລະ ແລກປ່ຽນຄຳຄິດຄຳເຫັນ ກັບຕົວ ແທນ ຈາກແຂວງ ໃນວັນທີ 16-17 ມີນາ 2001;

(21) ເກັບກຳຂ່າວສານ ຂໍ້ມູນເພີ່ມເຕີມ ສຳລັບຮ່າງ ແຜນງານ ຈັດຕັ້ງປະຕິບັດ ດ້ວຍການ ລົງສັງ ເກດການພາກສະໜາມ ແລະ ສົນທະນາກັບ ຫຼາຍອົງການຈັດຕັ້ງທີ່ກ່ຽວຂ້ອງ;

(22) ຊ່ວຍທາງດ້ານວິຊາການແກ່ກົມອຸຕຸນິຍົມ ແລະ ອຸທົກກະສາດ ໃນການ ນຳໃຊ້ ແລະ ສ້ອມ ແປງ ສະຖານີ ອຸຕຸ-ອຸທົກທີ່ຕິດຕັ້ງໃໝ່ 15 ແຫ່ງ ໃນປີ 2000/01;

(23) ສຶກສາເພີ່ມເຕີມ ເພື່ອທົບທວນ ສຶກສາຄວາມເປັນໄປໄດ້ ຂອງການພັດທະນາກະສິກຳ ແລະ ຊົນນະບົດ ພູພຽງບໍລິເວນ (1995/96) ແລະ ສ້າງ ລະບົບຍ່ອຍບຸລິມະສິດ ເພື່ອປະຕິບັດ, ລວມທັງການສຳຫຼວດຄວາມມຸ່ງມາດປາຖະໜາຂອງ ຊາວກະສິກອນ, ສະຫຼວດພູມສາດ ແລະ ຊອກຫາ ແຫຼ່ງນ້ຳໃຕ້ດິນ ດ້ວຍການເຮັດສັນຍາກັບທ້ອງຖິ່ນ.

(24) ໃຫ້ບົດຮຽນ (ສອນ) ແກ່ຜູ້ປະສານງານ ຂອງກະຊວງກະສິກຳ ແລະ ປ່າໄມ້, ຊຶ່ງເປັນພາກສ່ວນນຶ່ງຂອງ ແຜນການການຖ່າຍທອດ ເຕັກນິກວິຊາການ ໃນດ້ານ (i) ເສດຖະກິດຕະຫຼາດ, (ii) ວິເຄາະສະຖິຕິ ດ້ານກະສິກຳ ແລະ (iii) ການວິເຄາະ GIS ດ້ານທ່າແຮງການກະສິກຳ ໃນ ສປປລາວ;

(25) ກະກຽມ ແລະ ສະເໜີ ບົດລາຍງານຄວາມກ້າວໜ້າຂອງວຽກ (2) ແກ່ກະຊວງກະສິກຳ ແລະ ປ່າໄມ້ ໃນເດືອນ 4 ກໍລະກົດ 2001;

(26) ປະຊຸມ ສຳລັບ ບົດລາຍງານຄວາມກ້າວໜ້າຂອງວຽກ (2) ລະຫວ່າງ ຄະນະຊີ້ນຳໂຄງການ ແລະ ຄະນະທີມສຶກສາ ໃນວັນທີ 10 ກໍລະກົດ 2001; ແລະ

(27) ກະກຽມຮ່າງບົດລາຍງານສຸດທ້າຍ.

(28) ສະເໜີຮ່າງບົດລາຍງານສຸດທ້າຍຢູ່ກະຊວງກະສິກຳ ແລະ ປ່າໄມ້ –ໃນວັນທີ 28 ສິງຫາ 2001.

(29) ກອງປະຊຸມສຳມະນາລະດັບສູນກາງຄັ້ງທີ 2 –ໃນວັນທີ 30/10/2001 ທີ່ມີການເຂົ້າຮ່ວມຂອງຄະນະຊີ້ນຳໂຄງການ, ຕາງໜ້າຂອງອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງພັດທະນາເອກະຊົນບໍ່ແມ່ນລັດຖະບານ ເພື່ອສະເໜີຮ່າງບົດລາຍງານສຸດທ້າຍ ແລະ ຮັບຄຳເຫັນ ແລະ ຄຳແນະນຳເພີ້ມເຕີມ.

(30) ການກະກຽມບົດລາຍງານສຸດທ້າຍ ອີງຕາມຄຳເຫັນຕໍ່ຮ່າງບົດລາຍງານສຸດທ້າຍ ຂອງກະຊວງກະສິກຳ ແລະ ປ່າໄມ້

ຂະບວນການສຶກສາແຜນແມ່ບົດ ເພື່ອພັດທະນາກະສິກຳຮອບດ້ານຢູ່ໃນຮູບພາບ 1.1 ລຸ່ມນີ້.

ຮູບພາບ 1.1 ຂັ້ນຕອນການສຶກສາແຜນແມ່ບົດ ພັດທະນາກະສິກຳຮອບດ້ານ ຢູ່ ສປປລາວ.



### 1.3.3 ການຖ່າຍທອດເຕັກໂນໂລຢີ

ທີມງານສຶກສາ ໄດ້ຖ່າຍທອດເຕັກໂນໂລຢີ ໃຫ້ພະນັກງານ ຜູ້ຮ່ວມງານໃນຕະຫຼອດໄລຍະຂອງການສຶກສາ ( ຕາຕະລາງ 1.1 ).

ທີມງານສຶກສາ ໄດ້ຖ່າຍທອດ ເຕັກໂນໂລຢີ ໃຫ້ແກ່ພະນັກງານ ຜູ້ຮ່ວມວຽກໃນການ ເວລາສຳຫລວດ ພາກສະໜາມໂດຍຜ່ານ ວິທີການຮຽນໄປພ້ອມ ເຮັດວຽກໄປພ້ອມ. ອີງຕາມວຽກງານພາກສະໜາມຂອງແຕ່ລະຄົນ, ຊ່ຽວຊານແຕ່ລະຄົນ ໄດ້ໃຫ້ຄຳອະທິບາຍ ໃຫ້ແກ່ພະນັກງານ ຜູ້ຮ່ວມວຽກກ່ຽວກັບ ວັດຖຸປະສົງຂອງວຽກງານ, ວິທີການວິເຄາະ ແລະ ເຮັດວິທີໃດ ຈະນຳເອົາຜົນການວິເຄາະ ເຂົ້າໃນການວາງແຜນ. ໃນບັນດາກອງປະຊຸມສຳມະນາວິຊາການ ແລະ ບັນດາກອງປະຊຸມ ຄະນະກຳມະການ ຊີ້ນຳໂຄງການ ການຖ່າຍທອດ ເຕັກໂນໂລຢີ ໄດ້ປະຕິບັດຜ່ານການແລກປ່ຽນແນວຄິດ ແລະ ຄຳເຫັນລະຫວ່າງ ພະນັກງານຜູ້ຮ່ວມວຽກ ລະດັບທ້ອງຖິ່ນ, ລະດັບສູນກາງ, ພະນັກງານຈາກກະຊວງ ຖະບວງກົມອື່ນ ແລະ ຜູ້ຊ່ຽວຊານ ຂອງທີມງານສຶກສາ. ນອກຈາກນັ້ນ, ທີມງານສຶກສາຍັງໄດ້ຈັດສຳມະນາ ເພີ່ມເຕີມ ເພື່ອເຜີຍແຜ່ ວິຊາການໃຫ້ແກ່ພະນັກງານ ຜູ້ຮ່ວມວຽກ ຍົກຕົວຢ່າງ: ເຜີຍແຜ່ແນວຄວາມຄິດພື້ນຖານ ຂອງການສຶກສາສ້າງແຜນແມ່ບົດ, ວິທີການໃນການວິເຄາະຂໍ້ມູນສະຖິຕິຈາກແຫຼ່ງແຕກຕ່າງກັນ ແລະ ການວິເຄາະ ຂໍ້ມູນຂ່າວສານດ້ານພູມສາດ (GIS).

ຕາຕະລາງ 1.1: ລາຍຊື່ຂອງທີມສຶກສາຂອງອົງການໃຈກາ ແລະ ຜູ້ປະສານງານຂອງກະຊວງກະສິກຳ ແລະ ປ່າໄມ້

| JICA | | MAF | |
|---|---|---|---|
| **ຕຳແໜ່ງ** | **ຊື່** | **ຊື່** | **ພາກສ່ວນ** |
| ນະໂຍບາຍກະສິກຳ | Mr. Yutaka Murai | ດຣ. ບຸນກ້ອງ ສຸວັນນາພັນ | DOP/MAF |
| ສະຖາບັນຊຸກຍູ້ຊ່ວຍເຫຼືອດ້ານກະສິກຳ | Mr. Tetsunari Gejo | ທ. ໄພດີ ພັນທະວົງ | DOA/MAF |
| ຄຸ້ມຄອງບໍລິຫານ/ຫັນລົງສູ່ຮາກຖານ | Mr.Hisashi Ikewada | ທ. ຄຳທ່ຽງ ພົມສະຫວັດ | DOPP/MAF |
| ເສີມສ້າງຄວາມເຂັ້ມແຂງຊົນນະບົດ / ພັດທະນາບຸກຄະລາ ກອນ | Mr.Oudet Souvannavong | ທ. ຄຳທ່ຽງ ພົມສະຫວັດ | DOPP/MAF |
| ເສດຖະກິດການຕະຫລາດ/ ສະຖິຕິ | Dr. Guy Motha | .ທ. ສົມບູນ ຣາຊາໝົທອງ | DOP/MAF |
| ການປຸງແຕ່ງກະສິກຳ ແລະ ການຕະຫຼາດ | Mr. Hiroshi Yasuda | ດຣ. ສົມພັນຈັນເພັງໄຊ | DOLF/MAF |
| | | ທ. ແສງເດດ ບົວລະວັນ | MOTC |
| ພັດທະນາຊົນນະບົດ | Mr. Makoto Ishizuka | ທ. ບຸນທອງ ອານຸກູນ | Rural Dev. /MAF |

| | | | |
|---|---|---|---|
| ກະສິກຳ-ປ່າໄມ້ | Mr. Robeth John Trethewie | ທ. ສິມພະຈັນ ວົງພະສຸວັນ | NAFRI/MAF |
| | | ທ. ບຸນສອນ ພົງພິຈິດ | DOF/MAF |
| ສັງຄົມ ແລະ ວັດທະນະທຳ (1) | Mr. Mitsuru Sonoe | | |
| ສັງຄົມ ແລະ ວັດທະນະທຳ (2) | Ms. Mariko Shiohata | | |
| ໂຄງສ້າງຊົນນະບົດ/ຄຸ້ມຄອງນຳໃຊ້ | Mr. Shigeya Otsuka | ທ. ຄຳຮູ້ ພັນທະວົງ | DOI/MAF |
| ແວດລ້ອມທຳມະຊາດ | Mr. Keith Openshaw | ທ. ບັນດິດ ລະບາງກູນ | NAFRI/MAF |
| ອຸຕຸນິຍົມ-ອຸທົກກະສາດ | Mr. Shoichiro Ban | ທ. ມະໂນລົດ ສຸຂານຸວົງ | DMH/MAF |

### 1.3.4 ໜ້າເຜີຍແຜ່ ກ່ຽວກັບໂຄງການສຶກສາຢູ່ ອິນເຕີເນັດ

ທີມງານສຶກສາ ໄດ້ເຜີຍແຜ່ ໃຫ້ສື່ມວນຊົນຊາບກ່ຽວກັບ ບັນດາເນື້ອໃນ ແລະ ຄວາມຄືບໜ້າຂອງການສຶກສາ ໂດຍຜ່ານໜ້າເຜີຍແຜ່ ຢູ່ອິນເຕີເນັດ ຂອງກະຊວງກະສິກຳປ່າໄມ້. ໜ້າເຜີຍແຜ່ນີ້ ຈະໄດ້ຖືກນຳໃຊ້ເພື່ອເຜີຍແຜ່ ສະຖິຕິກະສິກຳ, ບັນດາ ລະບຽບການ ແລະ ກົດໝາຍທີ່ກ່ຽວພັນ ກັບກະສິກຳ, ຂ່າວສານກ່ຽວກັບໂຄງການ ແລະ ອື່ນໆ... ໃຫ້ມະຫາຊົນທົ່ວໄປ. ໜ້າເຜີຍແຜ່ (Home page) ຂອງການສຶກສາ ໄດ້ເປີດຂຶ້ນເປັນອົງປະກອບໜຶ່ງ ຂອງໂຄງການໂຄສະນາ ທີ່ກະຊວງກະສິກຳ ໄດ້ປະ ຕິບັດຢູ່. ສຳເນົາຂອງໜ້າເຜີຍແຜ່ ໄດ້ສະເໜີໃນເອກະສານຂັດຕິດ 20.

# ພາກ 2: ພື້ນຖານເສດຖະກິດ-ສັງຄົມ

## 2.1 ແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຄືບໜ້າ

### 2.1.1 ຄວາມຄືບໜ້າລວມຂອງເສດຖະກິດມະຫາພາກ

ສປປ ລາວ ແມ່ນຕັ້ງຢູ່ໃຈກາງຂອງແຫຼມອິນດູຈີນ, ມີຊາຍແດນອ້ອມຮອບຕິດກັບ ປະເທດໄທ, ກຳປູເຈຍ, ຫວຽດນາມ, ຈີນ ແລະ ມຽນມາ, ກວມເນື້ອທີ່ 236.800 ກລມ$^2$, ມີພົນລະເມືອງ 5,23 ລ້ານຄົນ ໃນປີ 2000 ຊຶ່ງມີອັດຕາການຂະຫຍາຍຕົວພົນລະເມືອງໃນລະດັບ 2,6% ຕໍ່ປີ. ສປປ ລາວ ແມ່ນໜຶ່ງໃນປະເທດທີ່ທຸກຍາກ ແລະ ດ້ອຍພັດທະນາທີ່ສຸດໃນພາກພື້ນອາຊີຕາເວັນອອກ, ມີລາຍຮັບຕໍ່ຫົວຄົນປະມານ 280 ໂດລາສະຫະລັດ ໃນປີ 1999. ກະສິກຳ ແລະ ປ່າໄມ້ເປັນຂະແໜງການຫຼັກຂອງເສດຖະກິດ, ປະກອບສ່ວນໃຫ້ລວມຍອດຜະລິດຕະພັນພາຍໃນ 52% ແລະ ທັງເປັນແຮງງານໃນການສ້າງວຽກເຮັດງານທຳຫຼາຍກວ່າ 80%.

ໃນປີ 1986 ລັດຖະບານໄດ້ມີແນວທາງປ່ຽນແປງໃໝ່ຮອບດ້ານ ຈາກການວາງແຜນເສດຖະກິດລວມສູນໄປສູ່ລະບົບເສດຖະກິດການຕະຫຼາດ ໂດຍນຳໃຊ້ກົນໄກເສດຖະກິດແບບໃໝ່ (NEM). ການປ່ຽນແປງລວມມີການຍົກເລີກການຄວບຄຸມລາຄາຂອງລັດ, ເປີດການຄ້າເສລີ ແລະ ເປີດກ້ວາງລະບົບການໃຊ້ຈ່າຍເງິນ, ໄດ້ນຳໃຊ້ວິທີການຈັດວາງທະນາຄານເປັນສອງລະບົບ, ເປີດເສລີໃຫ້ທຸກພາກສ່ວນ ແຕ່ທາງດ້ານກະສິກຳ ແມ່ນພົວພັນກັບການກຳນົດອັດຕາດອກເບ້ຍ, ລິເລີ້ມປະຕິຮູບການບໍລິການສ່ວນບຸກຄົນ, ນຳໃຊ້ກົດໝາຍເພື່ອຊຸກຍູ້ເສດຖະກິດການຕະຫຼາດ ແລະ ຂະຫຍາຍໂຄງການເອກະຊົນ. ກ່ຽວກັບຄວາມຄືບໜ້າແມ່ນໄດ້ຮັບຜົນສຳເລັດໃນໄລຍະ ຂ້າມຜ່ານຂອງການປ່ຽນແປງໂຄງສ້າງ ແລະ ການຄຸ້ມຄອງເສດຖະກິດມະຫາພາກ, ສ້າງພື້ນຖານການດຶງດູດເສດຖະກິດ ຊຶ່ງຊ່ວຍຊຸກຍູ້ປະກອບສ່ວນ ໃຫ້ແກ່ການເຕີບໂຕຂອງລວມຍອດຜະລິດພັນພາຍໃນໄດ້ຢ່າງເຂັ້ມແຂງ ໃນອັດຕາ 6,3% ຕໍ່ປີ ໃນໄລຍະຊຸມປີ 1990-94 ແລະ ລາຍຮັບຕໍ່ຫົວຄົນເພີ້ມຂຶ້ນ ອັດຕາສະເລ່ຍ 3,2% ໃນຊ່ວງເວລາດຽວກັນ. ເຕີບໂຕໄວຂຶ້ນເຖິງ 8,1% ໃນປີ 1994 ແລະ ສືບຕໍ່ຂະຫຍາຍຕົວໃນລະດັບ 7,1% ໃນປີ 1995 ແລະ ປະມານ 6,9% ໃນປີ 1996, ໄດ້ຫັນກັບຄືນມາສູ່ການຜະລິດກະສິກຳຢ່າງແຂງແຮງ ແລະ ສືບຕໍ່ຫັນການຜະລິດຂອງໂຮງຈັກໂຮງງານ, ການກໍ່ສ້າງ ແລະ ການບໍລິການຂະຫຍາຍຕົວເພີ້ມຂຶ້ນຢ່າງໄວວາ. ສປປ ລາວໄດ້ເຂົ້າເປັນສະມາຊິກຂອງອາຊຽນ (ASEAN) ແລະ ເຂດການຄ້າເສລີອາຊຽນ ( AFTA ) ຢູ່ໃນວົງລ້ອມຂົງເຂດ ໃນປີ 1997.

ໃນເຄິ່ງທ້າຍຂອງປີ 1997, ວິກິດການ ທາງດ້ານການເງິນ ຂອງອາຊີໄດ້ຖືກແກ້ໄຂຫຼັງຈາກກອງ ປະຊຸມໂຕະມົນ (RTM) ທີ່ກຸງເຈນີວາ ໃນປີ 1997 ຊຶ່ງໄດ້ກ່າວໄວ້ໃນແຜນພັດທະນາເສດຖະກິດສັງຄົມຂອງ ສປປ ລາວ. ການເກີດວິກິດການທາງດ້ານເສດຖະກິດໄດ້ຮັບຜົນສະທ້ອນອັນໜັກໜ່ວງ ແລະ ເຮັດໃຫ້ລາຍຮັບຂອງລັດ ແລະ ກະແສການລົງທຶນຂອງຕ່າງປະເທດລົດລົງຕາມມາຢ່າງຫຼວງຫຼາຍ. ຄ່າເງິນຕາຂອງຊາດເງິນກີບຫຼຸດດິ່ງລົງຖ້າສົມທຽບໃສ່ກັບບັນດາປະເທດກຸ່ມສະມາຊິກຂອງອາຊຽນ ແລະ ໄພເງິນເຟີ້ນໄດ້ພຸ່ງຂຶ້ນເຖິງ 3 ຕົວເລກ. ເຖິງຢ່າງໃດກໍຕາມອັດຕາການຫຼຸດໜ້ອຍຖອຍລົງ, ການເຕີບໂຕຕົວຈິງແມ່ນຍັງຮັກສາໄວ້ໃນລະດັບທີ່ສົມເຫດສົມຜົນ, ໄດ້ຊ່ວຍຊຸກຍູ້ໝາກຜົນອັນໃຫຍ່ຫຼວງຂອງຂະແໜງການກະສິກຳ ແລະ ປ່າໄມ້. ເຖິງແນວໃດກໍຕາມມັນກໍຍັງບໍ່ທັນສາມາດບັນລຸເປົ້າແຜນພັດທະນາເສດຖະກິດ-ສັງຄົມ ຂອງວິກິດການ ໃນເບື້ອງຕົ້ນ ໄດ້ດັ່ງທີ່ໄດ້ກ່າວຢູ່ໃນກອງປະຊຸມໂຕະມົນຄັ້ງທີ 6 ທີ່ກຸງເຈນີວາ.



ຮູບ 2.1 Fluctuation of Major SE Asian Currencies to US$

ຜົນກະທົບຂອງວິກິດການແມ່ນເຫດການອັນສຳຄັນ, ຊຶ່ງການເຕີບໂຕຕໍ່າຂອງລວມຍອດຜະລິດຕະພັນພາຍໃນຕົວຈິງໃນປີ 1998 ລົດລົງ ເຖິງ 4% ເມື່ອປຽບທຽບຄວາມແຕກຕ່າງກັນໃນສອງປີຜ່ານມາສູງເຖິງອັດຕາ 7%. ເຖິງຢ່າງໃດກໍດີ ການເຕີບໂຕຕໍ່າຂອງລວມຍອດຜະລິດຕະພັນພາຍໃນ ແມ່ນບໍ່ມີຜົນກະທົບອັນຮ້າຍແຮງເມື່ອສົມທຽບໃສ່ກັບປະເທດອື່ນໆ, ເພາະວ່າຂະແໜງການກະສິກຳ ແລະ ປ່າໄມ້ສາມາດຮັກສາຜົນສຳເລັດຂອງຕົນໄວ້ໄດ້ເປັນຢ່າງດີ ເຊັ່ນ: ລາຄາເຂົ້າ ແລະ ພືດທີ່ເປັນຫຼັກອື່ນໆ ແມ່ນຍັງມີລາຄາສູງ. ການຜະລິດເຂົ້າເປືອກເພີ່ມຂຶ້ນເຖິງ 18% ໃນລະຫວ່າງຊຸມປີ 1996 ແລະ ປີ 1998 ຂອບໃຈຕໍ່ໂຄງການຄຸ້ມຄອງຕິດຕັ້ງຈັກສູບນ້ຳແຫ່ງຊາດທີ່ໄດ້ລົງທຶນອັນໃຫຍ່ຫຼວງເພື່ອເພີ່ມເນື້ອທີ່ຊົນລະປະທານ, ໃນຂະນະດຽວກັນລວມຍອດຜະລິດຕະພັນພາຍໃນຂອງຂະແໜງອຸດສາຫະກຳ, ໂດຍສະເພາະອຸດສາຫະກຳເສື້ອຜ້າ ໄດ້ຕົກລົງເຄິ່ງໜຶ່ງຈາກປີ 1996 ຫາ 1997. ການດຳເນີນກິດຈະການທີ່ດີ ຂອງຂະແໜງການຍ່ອຍ ອຸດສາຫະກຳແມ່ນພະລັງງານໄຟຟ້າ ເປັນຜູ້ທີ່ມີຜົນ

ຮັບເພີ້ມຂຶ້ນຫຼາຍກວ່າ 60% ໃນປີ 1998, ໃນເວລາດຽວກັນນັ້ນການກໍ່ສ້າງຂອງຂະແໜງການດັ່ງກ່າວພັດລຶດລົງເຖິງ 18% ໃນປີ 1998, ໂດຍຜົນກະທົບຈາກວິກິດການ.

ຕາຕະລາງ 2.1 ສົມທຽບອັດຕາເຕີບໂຕຂອງ GDP ຕົວຈິງ

ຫົວໜ່ວຍ: % ຕໍ່ປີ

| ລາຍການ | 1996 | 1997 | 1998 | 1999 | 2000 |
|---|---|---|---|---|---|
| ສປປ ລາວ | 6,9 | 6,9 | 4,0 | 7,3 | 5,9 |
| ອິນໂດເນເຊຍ | 8,0 | 4,5 | -13,7 | 0,5 | 3,0 |
| ເກົາຫຼີ | 6,8 | 5,0 | -5,8 | 10,2 | 6,0 |
| ມາເລເຊຍ | 8,6 | 7,5 | -7,5 | 4,9 | 4,8 |
| ຟີລິບປິນ | 5,8 | 5,2 | -0,4 | 2,9 | 3,5 |
| ໄທ | 5,5 | -1,3 | -10,0 | 4,0 | 7,0 |
| ຈີນ | 9,6 | 8,8 | 7,8 | 7,1 | 7,0 |
| ຫວຽດນາມ | 9,3 | 8,2 | 5,8 | 4,7 | 4,6 |

ແຫຼ່ງຂໍ້ມູນ: ເອກະສານກອງປະຊຸມໂຕະມົນຄັ້ງທີ 7 (RTM7) "ການຕໍ່ສູ້ກັບຄວາມທຸກຍາກໂດຍຜ່ານການພັດທະນາຊັບພະຍາກອນມະນຸດ, ການພັດທະນາຊົນນະບົດ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

ສຳລັບຂະແໜງການບໍລິການ, ທະນາຄານ, ປະກັນໄພ ແລະ ອະສັງຫາລິມະຊັບແມ່ນເຮັດໜ້າທີ່ບໍ່ໄດ້ດີໂດຍເຫັນໄດ້ຢ່າງຈະແຈ້ງ. ຂະແໜງການຂົນສົ່ງ, ລະບົບສາງ ແລະ ຄົມມະນາຄົມແມ່ນໄດ້ຟື້ນຕົວຄືນດ້ວຍອັດຕາການເຕີບໂຕ 6,5% ໃນປີ 1997 ແລະ 9,7% ໃນປີ 1999, ໃນຄະນະດຽວກັນອັດການເຕີບໂຕຂອງພາກສ່ວນຂະແໜງການຍ່ອຍ ໂຮງແຮມ ແລະ ຮ້ານອາຫານແມ່ນເຄື່ອນໄຫວບໍ່ໄດ້ດີ ມີພຽງແຕ່ 8% ໃນປີ 1998 ເພີ້ມຂຶ້ນ, ໃນປີ 1999 ກໍຢູ່ໃນສະພາບດຽວກັນ.

ໃນກອງປະ ຊຸມໂຕະມົນຄັ້ງທີ 7 ທີ່ໄດ້ຈັດຂຶ້ນຢູ່ທີ່ນະຄອນຫຼວງວຽງຈັນໃນວັນທີ່ 21 ຫາ 23 ພະຈິກ 2000, ລັດຖະບານລາວໄດ້ສະແດງໃຫ້ເຫັນວ່າ ທັງສາມຂະແໜງການ ໄດ້ເພີ້ມຂຶ້ນດ້ວຍຄວາມໝັ້ນທ່ຽງຕັ້ງແຕ່ ປີ 1992 ນອກຈາກປີ 1997 ຫາປີ 1998, ແລະ ສະແດງໃຫ້ເຫັນຄວາມຄິດຫວັງອັນກວ້າງໄກ, ໂດຍສະເພາະ ການທີ່ຈະເພີ້ມຜົນຮັບອັນໃຫຍ່ຫຼວງຂຶ້ນ

ຈາກການລົງທຶນໃສ່ໄຟຟ້ານ້ຳຕົກ. ອີກປະການໜຶ່ງ ລັດຖະບານລາວໄດ້ເຫັນວ່າ ພື້ນຖານຂອງການລົງທຶນເຂົ້າ ໃນການກະສິກຳ ແລະ ປ່າໄມ້ລວມທັງຊົນລະປະທານ, ເສັ້ນທາງເຂົ້າຫາຕະຫຼາດອື່ນໆ... ຈະສືບຕໍ່ປະກອບສ່ວນຊຸກຍູ້ການຜະລິດ, ຮັກສາສິ່ງທ້າທາຍ ເພື່ອປະກອບສ່ວນຊຸກຍູ້ ການຜະລິດ. ລັດຖະບານລາວໄດ້ສະຫຼຸບໃນບົດລາຍງານກອງປະຊຸມໂຕະມົນຄັ້ງທີ 7 ວ່າບົດບາດການເຕີບໂຕ ຂອງເສດຖະກິດໃນໄລຍະກາງ ໂດຍທົ່ວໄປແລ້ວຈະຕ້ອງຊີ້ໃຫ້ເຫັນໃນແງ່ບວກ, ແຕ່ສິ່ງທ້າທາຍຈະໃຫ້ເຫັນໄດ້ເຖິງການເຕີບໂຕຂອງຜົນ

ຮັບທີ່ມີການຈໍລະຈອນ ແບບສະເໝີພາບ ໂດຍຜ່ານການພັດທະນາຊົນນະບົດ ແລະ ເຂດແຄວັນ.

**ຕາຕະລາງ 2.2 ເສດຖະກິດ ແລະ ຕົວຊີ້ບອກການເງິນ ແຕ່ປີ 1992-2000 ຂອງ ສປປ ລາວ**

| | ລາຍການ | 1992-93 | 1993-94 | 1994-95 | 1995-96 | 1996-97 | 1997-98 | 1998-99 | 1999-00 |
|---|---|---|---|---|---|---|---|---|---|
| 1 | ລວມ GDP ເຕີບໂຕ %<br>__ໃນນັ້ນ:__<br>-ກະສິກຳ (ສ່ວນແບ່ງປັນ)<br>-ອຸດສາຫະກຳ(ສ່ວນແບ່ງປັນ)<br>-ບໍລິການ(ສ່ວນແບ່ງປັນ) | 5,9<br><br>2,7/56<br>10,3/17<br>7,7/24 | 8,1<br><br>8,3/56<br>10,7/18<br>5,5/24 | 7,1<br><br>3,1/54<br>13,1/19<br>10,3/25 | 6,9<br><br>2,3/54<br>17,3/21<br>8,5/25 | 6,9<br><br>7,0/53<br>8,1/21<br>7,5/25 | 4<br><br>3,1/53<br>9,2/22<br>5,5/25 | 7,3<br><br>8,2/52<br>7,9/22<br>6,9/25 | 5,9<br><br>4,4/51<br>7,3/23<br>6,4/26 |
| 2 | ມູນຄ່າ GDP ປະຈຸບັນ (ຕື້ກີບ) | 951 | 1.109 | 1.419 | 1.726 | 2.201 | 3.745 | 8.700 | 13.780 |
| 3 | ມູນຄ່າ GDP ຄົງທີ່ (ຕື້ກີບ) | 722 | 781 | 836 | 893 | 955 | 983 | 1.035 | 1.157 |
| 4 | ຄັງແຮຂອງລັດ (% GDP) | 0,87 | 0,76 | 1,00 | 2,60 | 2,40 | 3,60 | 3,90 | 4,00 |
| 5 | ງົບປະມານ:ລາຍຮັບຕໍ່ປີ ຕື້ກ)<br>ລາຍຈ່າຍຕໍ່ປີ (ຕື້ກີບ) | 113<br>171 | 136<br>259 | 159<br>294 | 217<br>364 | 238<br>421 | 367<br>847 | 961<br>1.651 | 1.680<br>2.705 |
| 6 | ລາຍຮັບລຖບ/ສັດສ່ວນ GDP | 11,9 | 12,2 | 11,2 | 12,6 | 10,8 | 14,6 | 15,8 | 15,9 |
| 7 | ລາຍຈ່າຍລຖບ/ສັດສ່ວນ GDP | 17,9 | 23,3 | 20,7 | 21,1 | 19,1 | 22,6 | 18,6 | 19,6 |
| 8 | ຂາດດຸນຕໍ່ປີ (% ຂອງ GDP) | 6 | 11 | 9,5 | 8,5 | 8,3 | 12,8 | 9,97 | 8,53 |
| 9 | ການເຕີບໂຕຂອງການຕອບສະໜອງເງິນ | 64,4 | 32 | 16,4 | 26,7 | 65,8 | 113,3 | 136,7 | 61,14 |
| 10 | ເງິນເຟີ້ (ອັດຕາສະເລ່ຍຕໍ່ປີ) | 6,3 | 6 | 19,4 | 3 | 26,4 | 142 | 108,3 | 11,9 |
| 11 | ລວມມູນຄ່າສົ່ງອອກ (ລ້ານ$) | 248 | 305 | 346 | 321 | 317 | 341 | 311 | 323 |
| 12 | ລວມມູນຄ່ານຳເຂົ້າ (ລ້ານ $) | 432 | 564 | 589 | 690 | 648 | 553 | 525 | 540 |
| 13 | ດຸນດ່ຽງບັນຊີປະຈຸບັນ<br>ຂາດດຸນ ຂອງ GDP(ບໍ່ລວມທີ່ ຜ່ານທາງການ) | -146<br>11,1 | -264<br>17,1 | -200<br>11,4 | -306<br>16,5 | -262<br>16,3 | -129<br>11,53 | -145<br>12,58 | n.a<br>11,81 |
| 14 | ລວມການລົງທຶນຕ່າງປະເທດທີ່ຮັບຮອງເອົາ (ລ້ານ $ )<br>ຈຳນວນໂຄງການຮັບຮອງເອົາ | 1.538<br>146 | 2.597<br>112 | 804<br>55 | 1.292<br>63 | 154<br>66 | 141<br>69 | 155<br>68 | 33<br>43 |
| 15 | ກະແສການລົງທຶນໂດຍກົງຂອງຕ່າງປະເທດ(ລ້ານ $) | 60 | 60 | 95 | 160 | 378 | 253 | 56 | 26 |
| 16 | ກະແສການຮ່ວມມືກັບສາກົນ (ລ້ານ $)<br>ໃນນັ້ນຊ່ວຍເຫຼືອລ້າ | 181<br>104 | 189<br>125 | 197<br>100 | 212<br>71 | 324<br>186 | 296<br>196 | 347<br>245 | n.a<br>n.a |
| 17 | ລວມການເປັນໜີ້ (ລ້ານ $) | n.a | 4,5 | 6,2 | 5,9 | 37,1 | 51,9 | 65,1 | n.a |

ແຫຼ່ງຂໍ້ມູນ: ເອກະສານກອງປະຊຸມໂຕະມົນຄັ້ງທີ 7 (RTM7) "ການຕໍ່ສູ້ກັບຄວາມທຸກຍາກໂດຍຜ່ານການພັດທະນາຊັບພະຍາກອນມະນຸດ, ການພັດທະນາຊົນນະບົດ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

## 2.1.2 ການເງິນພາຍໃນ ແລະ ພາຍນອກ

ຕົວເລກງົບປະມານໄດ້ຊີ້ບອກໃຫ້ເຫັນຄວາມສຳຄັນຂອງການເງິນພາຍນອກໃນລາຍຈ່າຍຂອງລັດຖະບານ. ຕາຕະລາງລຸ່ມນີ້ໄດ້ມີຂໍ້ມູນລະອຽດສຳລັບສີ່ປີຜ່ານມາ ແລະ ສະແດງໃຫ້ເຫັນສັດສ່ວນຂອງການເງິນງົບມານສຳລັບການຊ່ວຍເຫຼືອລ້າ ແລະ ກູ້ຢືມຂອງຕ່າງປະເທດ. ສະເລ່ຍລາຍຮັບເທົ່າກັບເຄິ່ງນຶ່ງຂອງລາຍຈ່າຍ. ໃນກໍລະນີພິເສດການເງິນພາຍໃນ ໄດ້ມີການປະກອບສ່ວນເຫຼັກນ້ອຍຕໍ່ການເງິນງົບປະມານ.

ຕາຕະລາງ 2.3 ງົບປະມານລວມຂອງລັດຖະບານ ແຕ່ປີ 1996-99 (ຕື້ກີບ)

| | 1995-96 | 1996-97 | 1997-98 | 1998-99 |
|---|---|---|---|---|
| ລາຍຮັບ & ຊ່ວຍເຫຼືອລ້າ | 274,9 | 298,2 | 557,0 | 1.461,5 |
| ໃນນັ້ນ: ຊ່ວຍເຫຼືອລ້າ | 57,6 | 69,9 | 200,0 | 532,3 |
| ລາຍຈ່າຍ | 364,4 | 412,2 | 864,6 | 1.719,0 |
| ດຸນດ່ຽງທັງໝົດບໍ່ລວມເອົາຊ່ວຍເຫຼືອລ້າ | -147,1 | -183,9 | -507,4 | -789,8 |
| ການເງິນ | | | | |
| ພາຍໃນ | -19,6 | -0,5 | 56,6 | -143,1 |
| ຕ່າງປະເທດ (ສຸດທິ) | 109,1 | 113,5 | 223,2 | 393,3 |

ແຫຼ່ງຂໍ້ມູນ: ເອກະສານກອງປະຊຸມໂຕະມົນຄັ້ງທີ 7 (RTM7)

ເຖິງວ່າຂະແໜງການກະສິກຳເປັນຂະແໜງການທີ່ກ່ຽວພັນກັບຜູ້ທີ່ໃຫ້ທຶນຕໍ່ບັນດາໂຄງການຮ່ວມມືຕ່າງປະເທດ ທີ່ສະແດງອອກໃນສອງສາມປີຜ່ານມານີ້ ສ່ວນໃຫຍ່ແມ່ນກິດຈະການຊົນລະປະທານ, ຊຶ່ງລວມທັງໝົດຫຼາຍກວ່າ 60% ຂອງການລົງທຶນໃສ່ວຽກງານກະສິກຳແມ່ນສະແດງໃຫ້ເຫັນໃນຕາຕະລາງຕໍ່ໄປນີ້:

ຕາຕະລາງ 2.4 ລວມຜູ້ໃຫ້ທຶນຕໍ່ບັນດາໂຄງການຮ່ວມມືກັບຕ່າງປະເທດໃນວຽກງານກະສິກຳ

ຫົວໜ່ວຍ: ລ້ານໂດລາສະຫະລັດ

| | 1997 | 1998 | 1999 | ລວມ | % |
|---|---|---|---|---|---|
| ກະສິກຳ | 4,5 | 0,2 | 9,2 | 13,9 | 20% |
| ລ້ຽງສັດ | 1,8 | 4,4 | 2,0 | 8,2 | 12% |
| ປ່າໄມ້ | 4,5 | 5,8 | 6,4 | 16,7 | 24% |
| ຊົນລະປະທານ | 26,8 | 0,7 | - | 27,5 | 39% |
| ອຸຕຸນິຍົມ | 1,3 | 0,7 | - | 2,0 | 3% |
| ອື່ນໆ | 0,5 | 1,2 | 0,4 | 2,1 | 3% |
| ລວມ: | 39,4 | 13,0 | 18,0 | 70,4 | 100% |

ແຫຼ່ງຂໍ້ມູນ: ກະຊວງກະສິກຳ ແລະ ປ່າໄມ້

ການສົມທຽບກັບເປົ້າໝາຍ ຂອງແຜນການ 5 ປີສະແດງໃຫ້ເຫັນວ່າທຶນຂອງຕ່າງປະເທດທີ່ໄດ້ເບີກຈ່າຍ ໃຫ້ແກ່ວຽກງານກະສິກຳ ມີພຽງແຕ່ປະມານເຄິ່ງນຶ່ງ ຂອງລະດັບຕົວຈິງທີ່ ສະແດງອອກໃນແຜນການ ແລະ ປາກົດວ່າ ມີທຶນທີ່ບໍ່ໄດ້ເບີກຈ່າຍຍັງຢູ່ເປັນຈຳນວນຫຼວງຫຼາຍ.

ລັດຖະບານໄດ້ມີໂຄງການລົງທຶນຂອງລັດໄລຍະກາງ ແລະ ຕົວເລກການລົງທຶນຂອງລັດສະເລ່ຍຈະກວມເອົາ 12% ຂອງ GDP. ລະດັບດັ່ງກ່າວນີ້ແມ່ນຕ່ຳກວ່າລະດັບ ໃນສົກປີ 1998-99 ແລະ 1999-2000. ເຖິງຢ່າງໃດກໍ່ຕາມຈຳນວນເດັດຖານຂອງການລົງທຶນຂອງລັດ ໃນແງ່ຕົວຈິງຈະເພີ່ມຂຶ້ນ ໃນອັດຕາການເຕີບໂຕສູງທີ່ຄາດໄວ້ວ່າຈະເພີ່ມຂຶ້ນໃນອານາຄົດ.

ຕາຕະລາງ 2.5 ສັງລວມການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ 1996-2000

ຫົວໜ່ວຍ: ຕື້ກີບ

| ຂະແໜງການ | 1995-96 | 1996-97 | 1997-98 | 1998-99 | 1999-2000 |
|---|---|---|---|---|---|
| ລວມ: | 205,47 | 26,35 | 589,61 | 908,17 | 1.701,00 |
| **ພາຍໃນ** | **47,71** | **78,94** | **154,00** | **204,91** | **506,00** |
| ຕ່າງປະເທດ | 157,67 | 185,41 | 435,60 | 703,26 | 1.195,00 |
| **ກະສິກຳ** | 23,35 | 34,02 | 128,90 | 120,10 | 212,61 |
| ພາຍໃນ | 6,91 | 21,46 | 91,90 | 67,58 | 177,28 |
| **ຕ່າງປະເທດ** | **16,44** | **12,56** | **37,00** | **52,52** | **35,33** |

ແຫຼ່ງຂໍ້ມູນ: ເອກະສານກອງປະຊຸມໂຕະມົນຄັ້ງທີ 7 (RTM7)

ເຖິງວ່າງົບປະມານຈະມີຄວາມແຕກຕ່າງກັນທາງດ້ານອົງປະກອບ ຂອງທຶນຕ່າງປະເທດເຂົ້າໃນການລົງທຶນຂອງລັດ ມີຈຳນວນເກືອບເຖິງ 80% ຂອງການລົງທຶນທັງໝົດ, ທີ່ໄດ້ເປັນສ່ວນແບ່ງອັນເໝາະສົມນັບແຕ່ຕົ້ນຂອງຊຸມປີ 1990. ການລົງທຶນເຂົ້າຂະແໜງການຕ່າງໆ ຂອງຕ່າງປະເທດແມ່ນສຸມໃສ່ການຄົມມະນາຄົມ ແລະ ຂົນສົ່ງ, ທີ່ເປັນຜົນສະທ້ອນ ໃຫ້ເຫັນວ່າ ບຸລິມະສິດຂອງລັດຖະບານ ແມ່ນເພື່ອປັບປຸງພື້ນຖານໂຄງລ່າງຂອງປະເທດ.

ແຜນການລົງທຶນຂອງລັດໃນໄລຍະກາງ ເຖິງປີ 2003 ແມ່ນເຫັນດີອະນຸມັດໃຫ້ເອົາເຂົ້າໃນຂະແໜງການຕ່າງໆ ແລະ ລວມຍອດການລົງທຶນຂອງລັດ ໄດ້ສ້າງເປົ້າໝາຍໂດຍລັດຖະບານ ແລະ ຄາດຫວັງເອົາໄວ້ທັງໝົດ 7.305 ຕື້ກີບ ສຳລັບຊ່ວງໄລຍະ 3 ປີ ຊຶ່ງແມ່ນ ໃນປີ 2001 ຈຳນວນ 2.005 ຕື້ກີບ, ໃນປີ 2002 ຈຳນວນ 2.500 ຕື້ກີບ ແລະ ໃນປີ 2003 ຈຳນວນ 2.004 ຕື້ກີບ. ບຸລິມະສິດຂອງລັດຖະບານ ແມ່ນເລັ່ງໃສ່ຂະແໜງການສັງຄົມ ແລະ

ພັດທະນາຊົນນະບົດ ໂດຍສ່ວນແບ່ງຂອງຂະແໜງການຄົມມານາຄົມ ແລະ ຂົນສົ່ງ ຈະຫຼຸດລົງເທື່ອລະໜ້ອຍ.

ການຄາດຄະເນໃນໄລຍະຍາວຂອງ ລັດຖະບານໃຫ້ແກ່ການລົງທຶນຂອງລັດ ແມ່ນຈະສືບຕໍ່ຢູ່ໃນອັດ ຕາສ່ວນ 20:80 ສໍາລັບແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ. ອີກດ້ານໜຶ່ງແຜນການລົງທຶນຂອງລັດຈະສິ້ນສຸດລົງໃນປີ 2003, ໃນຄະນະດຽວກັນລັດຖະບານຄາດວ່າຈະລະດົມເອົາແຫຼ່ງຊັບພະຍາກອນຂອງຕົນທີ່ມີຢູ່ ເພື່ອເຮັດໃຫ້ເພີ້ມຂື້ນຈາກ 1.461 ຕື້ກີບເປັນ 5,844 ຕື້ກີບ ( 730,0 ລ້ານໂດລາສະຫະລັດຈະຍາດແຍ່ງດຶງດູດຈາກຜູ້ໃຫ້ທຶນ).

### 2.1.3 ສິ່ງທ້າທາຍ ຂອງການພັດທະນາລະດັບຊາດ

ລາຍການພັດທະນາຂອງລັດຖະບານໄດ້ມີ 3 ວິທີການຫຼັກທີ່ເປັນເສົາຄໍ້ຄື: ຫຼຸດຜ່ອນຄວາມທຸກຈົນ, ໂດຍສະເພາະໃນເຂດຊົນເຜົ່າຊົນນະບົດ, ພັດທະນາພື້ນຖານໂຄງລ່າງ ແລະ ພັດທະນາຊັບພະຍາກອນມະນຸດ. ເປົ້າໝາຍຂອງການພັດທະນາ ເຖິງຈຸດສູງສຸດຂອງລັດຖະບານ ແມ່ນເພື່ອປົດປ່ອຍປະເທດ ໃຫ້ຫຼຸດພົ້ນອອກຈາກກຸ່ມ ຂອງປະເທດດ້ອຍພັດທະນາໃນປີ 2020 ດ້ວຍການພັດທະນາ ແບບຍືນນານ ແລະ ມີຄວາມຍຸດຕິທໍາ, ຫຼືເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນໄດ້ເຖິງ 885 ໂດລາສະຫະລັດໃນປີ 2020 (ກໍານົດໂດຍ DAC ໃນປີ 2000 ຂອງລາຄາຄົງທີ່) . ສິ່ງທ້າທາຍໃນການພັດທະນາລະດັບຊາດແມ່ນ ຄວາມທຸກຈົນຍັງແຜ່ກະຈາຍຢູ່ທົ່ວໄປ, ພື້ນຖານເສດຖະກິດອ່ອນແອ ແລະ ຂາດຊັບພະຍາກອນ ແລະ ຄວາມອາດສາມາດ. ລັດຖະບານແຫ່ງ ສສປ ລາວ ໄດ້ຮັບຮູ້ ແລະ ມີພັນທະໄຈ້ແຍກການພັດທະນາອອກເປັນສອງຮູບການຄື: ການເຕີບໂຕດ້ວຍຄວາມຍຸດຕິທໍາ ສະເໝີພາບເປັນ "ສິ່ງທ້າທາຍພາຍໃນ"; ແລະ ຄວາມທ້າວທັນປະກອບສ່ວນເຂົ້າຮ່ວມ ພາຍໃນຂົງເຂດ ແລະ ໃນເສດຖະກິດໂລກຢ່າງໃຫຍ່ຫຼວງ "ເປັນສິ່ງທ້າທາຍພາຍນອກ".

**ສິ່ງທ້າທາຍພາຍໃນ** ແມ່ນການເໜັ້ນໜັກໃສ່ຫຼຸດຜ່ອນ ຄວາມທຸກຍາກ ດ້ວຍການປັບປຸງຊີວິດການເປັນຢູ່ ໃນລັກສະນະຂອງການພັດທະນາດ້ວຍຄວາມສະເໝີພາບ. ບັນຫາຕົ້ນຕໍຂອງລະບົບການພັດທະນາຢູ່ ສປປ ລາວ ແມ່ນຂາດຄວາມສາມາດໃນທຸກລະດັບຂອງສັງຄົມ. ລັດຖະບານໄດ້ເອົາໃຈໃສ່ກໍ່ສ້າງດ້ານຄວາມສາມາດ ແລະ ດ້ານສະຖາບັນໄປຄຽງຄູ່ກັນກັບການພັດທະນາຊັບພະຍາກອນມະນຸດ ຊຶ່ງເປັນສິ່ງທ້າທາຍ ແລະ ຈຸດສຸມຂອງການພັດທະນາສໍາລັບ ຊຸມປີຕໍ່ໜ້າ, ບັນຫາທີ່ພົບເຫັນຕົວຈິງ ຂອງການຈັດຕັ້ງປະຕິບັດນະໂຍບາຍ ແມ່ນກໍລະນີທີ່ຍັງແບກຫາບຢ່າງໜັກໜ່ວງໃນການຂາດຄວາມສາມາດ. ຈະຕ້ອງໄດ້ຍົກເອົາ ການກໍ່ສ້າງຄວາມສາມາດ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ອົງປະ

ກອບອັນສຳຄັນຂອງການພັດທະນາທຸກໆ ແຜນງານ ຫຼື ໂຄງການ. ເຊື່ອມໂຍງຕໍ່ກັບຊ່ອງວ່າງຂອງຄວາມສາມາດ ແລະ ການພັດທະນາຊັບພະຍາກອນມະນຸດ, ແມ່ນບັນຫາສຳຄັນທີ່ຕ້ອງການໃຫ້ເປັນຂໍ້ວຕໍ່ກັບລະບົບຕົວເລກຂອງການປະກອບສ່ວນ ແລະ ເຕັກໂນໂລຊີ, ໂດຍສະເພາະໃນປະເດັນກ່ຽວກັບການຜະລິດ ແລະ ລະບົບຂ່າວສານຂໍ້ມູນ. ນອກຈາກສິ່ງທ້າທາຍນີ້ແລ້ວແນ່ນອນຍັງມີບັນຫາອື່ນເຊັ່ນວ່າທຸກໆ ຂະແໜງການແຫ່ງຊາດມີຄວາມສະເໝີພາບຕໍ່ໂອກາດ ເພື່ອພັດທະນາໃນການພົວພັນ ກັບການຫຼຸດຜ່ອນຊ່ອງວ່າງລາຍຮັບ ແລະ ຫຼຸດນອ້ຍຖອຍລົງຄວາມບໍ່ສະເໝີພາບການແຕກໂຕນກັນລະຫວ່າງຊົນນະບົດກັບຕົວເມືອງ ໂດຍສະເພາະ ແມ່ນຊ່ອງວ່າງຂອງຂໍ້ວຕໍ່ທີ່ແຕກຕ່າງກັນ ທາງດ້ານເສດຖະກິດ-ສັງຄົມ ລະຫວ່າງເຂດພູດອຍ ແລະ ເຂດຊົນນະບົດໃນເຂດທົ່ງພຽງລຽບຕາມລຳນ້ຳຂອງ.

ໄດ້ມີການອະທິບາຍຢ່າງກວ້າງຂວາງ ກ່ຽວກັບລາຍຮັບຕໍ່ຫົວຄົນ ລະຫວ່າງຂົງເຂດພາກພື້ນ. ການບໍລິການສັງຄົມ ແລະ ເຮັດກິດຈະການເພື່ອສ້າງລາຍຮັບແມ່ນມີຄວາມຈຳກັດໃນຫຼາຍພາກຂອງ ສປປ ລາວ ແລະ ນີ້ແມ່ນເປັນບັນຫາຫຼັກທີ່ສືບຕໍ່ອະທິບາຍຄວາມແຕກຕ່າງກັນທາງດ້ານລາຍຮັບ. ນະໂຍບາຍຂອງລັດຖະບານກ່ຽວກັບເນື້ອໃນດັ່ງກ່າວ, ເຫັນວ່າກ່ອນອື່ນໝົດແມ່ນລົງທຶນອັນໃຫຍ່ຫຼວງ ເພື່ອເຮັດໃຫ້ຜູ້ທຸກຢູ່ໃນຂົງເຂດດັ່ງກ່າວ ໄດ້ມີຜົນປະໂຫຍດ, ດ້ວຍຮູບການປະຕິບັດ ແຕ່ຂະໜາດນ້ອຍຂຶ້ນໄປເພື່ອສ້າງໃຫ້ມີຖານະດີຂຶ້ນໃນຂົງເຂດ ແລະ ມັນຈະສະທ້ອນໃຫ້ເຫັນ ໃນແຜນການລົງທຶນໃນອານາຄົດ. ເຖິງຢ່າງໃດກໍຕາມບັນຫາທີ່ຂັດແຍ່ງກັນນັ້ນແມ່ນຈະໄດ້ຈັດສັນຫາແຫຼ່ງງົບປະມານແກ້ໄຂໃຫ້ ລະຫວ່າງຕົ້ນທຶນຂອງການລົງທຶນ (ສຳລັບການພັດທະນາພື້ນຖານໂຄງລ່າງສັງຄົມ) ແລະ ລາຍຈ່າຍປັດຈຸບັນ (ສຳລັບຂະແໜງການເສດຖະກິດ-ສັງຄົມຮັກສາໄວ້ລະດັບເດີມ ຕົວຢ່າງ: ສຶກສາ, ສາທາ, ສົ່ງເສີມກະສິກຳ, ຄົ້ນຄວ້າ, ອື່ນໆ) ໃນຄະນະດຽວກັນມີງົບປະມານຈາກພາຍນອກປະມານ 80%. ເຖິງວ່າ ການມີຄວາມເຫັນຂອງຜູ້ໃຫ້ທຶນ ໃນເວລາກອງປະຊຸມໂຕະມົນຄັ້ງທີ 7 ກ່ຽວກັບການທຸ້ມເທສ່ວນແບ່ງຢ່າງຫຼວງຫຼາຍໃຫ້ແກ່ລາຍຈ່າຍປັດຈຸບັນ, ລັດຖະບານໄດ້ກະຕຸ້ນຜູ້ໃຫ້ທຶນເຂົ້າໃຈ ສຳລັບຄວາມຕ້ອງການເພື່ອຮັກສາການລົງທຶນສູງ ເຂົ້າໃນພື້ນຖານໂຄງລ່າງເພື່ອເລັ່ງໃສ່ການຂ້າມຜ່ານໄປສູ່ເສດຖະການຕະຫຼາດ.

ອີກອັນນຶ່ງ **ສິ່ງທ້າທາຍພາຍນອກ** ອີກດ້ານນຶ່ງນັບຕັ້ງແຕ່ ມື້ ສປປ ລາວ ເຂົ້າເປັນສະມາຊິກຂອງອາຊຽນ ແລະ ເຂດການຄ້າເສລີ AFTA ໃນປີ 1997 ແມ່ນກ່ຽວກັບການຊຸກຍູ້ສົ່ງເສີມສິນຄ້າຂອງປະເທດໄປຫາຕະຫຼາດ ອັນກວ້າງຂວາງ ຂອງອາຊຽນ. ບົດບາດຂອງລັດຖະບານ ສປປ ລາວຈະຕ້ອງສ້າງຄວາມເຂັ້ມແຂງ ທີ່ວ່າເອົາປະເທດເຊື່ອມຕໍ່ເຂົ້າກັບສູນພັດທະນາຂົງເຂດຍ່ອຍ ທີ່ສຳຄັນ ຂອງແມ່ນ້ຳຂອງ. ໃນນາມເປັນສະມາຊິກຂອງກຸ່ມອາຊຽນ, ຢ່າງໃດກໍຕາມ ສປປ ລາວ ກໍຕ້ອງໄດ້ມີການເຂົ້າຮ່ວມ ໃນສັນຍາການປະຕິບັດ ໃຫ້ສິດທິພິ

ເສດທາງດ້ານອັດຕາພາສີ ທີ່ມີຜົນບັງຄັບໃຊ້ຮ່ວມກັນ (CEPT); ເລີ້ມມີການຈັດຕັ້ງປະຕິບັດໃນເດືອນມັງກອນ 1999 ແລະ ຈະປະຕິບັດໃຫ້ສຳເລັດ ໃນປີ 2008.

ອັນທີສອງ, ສປປ ລາວ ແມ່ນມີບົດບາດອັນສຳຄັນຢູ່ໃນພາກພື້ນ ແລະ ເປັນເຂດຮ່ວມພັດທະນາແຫ່ງຊາດ, ໂດຍສະເພາະແຜນການພັດທະນາກັບຂົງເຂດຍ່ອຍທີ່ສຳຄັນຂອງແມ່ນ້ຳຂອງ, ມີຂໍ້ໄດ້ປຽບທາງດ້ານທີ່ຕັ້ງພູມສັນຖານຢູ່ຂົງເຂດໃຈກາງ ຂອງແຫຼມອິດູຈີນ. ສາມາດເຮັດໃຫ້ເກີດມີຊ່ອງຫວ່າງທາງດ້ານເສດຖະກິດ-ສັງຄົມລະຫວ່າງພາຍໃນຕົນເອງ ແລະ ບັນດາປະເທດອື່ນໆໃນຂົງເຂດ. ສິ່ງທີ່ທ້າທາຍຈາກພາຍນອກອື່ນໆ ແມ່ນເພື່ອປັບປຸງດຸນດ່ຽງຂອງການໃຊ້ຈ່າຍໃນທົ່ວໄປ ແລະ ດຸ່ນດ່ຽງການຄ້າໂດຍສະເພາະ. ການສົ່ງອອກແມ່ນເປັນພື້ນຖານເບື້ອງຕົ້ນ ໃນການນຳໃຊ້ຊັບພະຍາກອນ ທຳມະຊາດຢ່າງກວ້າງຂວາງ, ໂດຍສະເພາະແມ່ນນ້ຳສຳລັບເຂື່ອນໄຟຟ້ານ້ຳຕົກ ແລະ ປ່າໄມ້ ສຳລັບໄມ້ສົ່ງອອກ, ນີ້ແມ່ນສະທ້ອນໃຫ້ເຫັນໄດ້ພື້ນຖານ ຄວາມອ່ອນແອຂອງເສດຖະກິດລາວ. ສິ່ງທີ່ທ້າທາຍສະເພາະແມ່ນເພື່ອຮັບປະກັນວ່າການຫັນເອົາເສດຖະກິດຂອງລາວເຂົ້າຮ່ວມປະສົມ ປະສານໃນຂົງເຂດ ຈະຕ້ອງໄດ້ມີຄວາມອາດສາມາດຜະລິດໃຫ້ໄດ້ຫຼາຍຮູບຫຼາຍສີຂອງສິນຄ້າ ແລະ ການບໍລິການເພື່ອປັບປຸງດຸ່ນດ່ຽງຂອງລາຍຈ່າຍ ແລະ ດຸ່ນດ່ຽງການຄ້າ.

## 2.2 ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ສຳລັບ 2010-2020 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ V (2001-2005)

ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກປະຊາຊົນປະຕິວັດລາວ ໄດ້ໄຂຂຶ້ນ ໃນເດືອນມີນາ ປີ 2001 ຮັບຮອງເອົາແຜນການພັດທະນາເສດຖະກິດ-ສັງຄົມຄັ້ງທີ່ 5 ສຳລັບຊ່ວງໄລຍະປີ 2001-2005. ໄດ້ປະເມີນຜົນຂອງການພັດທະນາເສດຖະກິດ-ສັງຄົມໃນໄລຍະ 25 ປີຜ່ານມາ ແລະ ໄດ້ຍົກບັນຫາພື້ນຖານຍຸດທະສາດການພັດທະນາຮອດປີ 2010 ແລະ 2020. ແຜນການ 5 ປີ ໄດ້ສ້າງຂຶ້ນໂດຍອີງໃສ່ເນື້ອໃນຂອງການຈັດຕັ້ງປະຕິບັດແຜນການໃນຊຸມປີຜ່ານມາ ແລະ ຍຸດທະສາດໄລຍະກາງ/ໄລຍະຍາວ. ແຜນການພັດທະນາເສດຖະກິດສັງຄົມຄັ້ງທີ V ໄດ້ສັງລວມຫຍໍ້ລຸ່ມນີ້."

### 2.2.1 ຍຸດທະສາດພື້ນຖານຂອງການພັດທະນາໄລຍະເຖິງ ປີ 2010-2020

ຈຸດປະສົງທາງດ້ານມະຫາພາກສຳລັບການພັດທະນາເສດຖະກິດ-ສັງຄົມ ໃນປີ 2010 ແລະ 2020 ແມ່ນໄດ້ສ້າງຂຶ້ນດັ່ງຕໍ່ໄປນີ້:

| | ປີ 2010 | ປີ 2020 |
|---|---|---|
| ປະຊາກອນຂອງຊາດ | 6,7 ລ້ານ | 8,3 ລ້ານ |
| GDP ຕໍ່ຫົວຄົນ (ລາຄາປັດຈຸບັນ) | 700-750 ໂດລາສຫລ | 1.200-1.500 ໂດລາ ສຫລ |
| ອັດຕາການຮູ້ໜັງສື(ອາຍຸຫຼາຍກວ່າ 15 ປີ) | 84% | 90% |
| ອາຍຸຍືນສະເລ່ຍ | 67 ປີ | 70 ປີ |

ເພື່ອເຮັດໃຫ້ຈຸດປະສົງທີ່ກ່າວຂ້າງເທິງນັ້ນໄດ້ຮັບຜົນສຳເລັດ, ແຜນການພັດທະນາເສະຖະກິດ-ສັງຄົມຄັ້ງທີ 5 ຄາດວ່າ GDP ຈະເຕີບໂຕຂຶ້ນໃນລະດັບອັດຕາສະເລ່ຍ 7% ຕໍ່ປີ ຂອງລວມຍອດການລົງທຶນໃນ 25-30% ຂອງ GDP. ການລົງທຶນຂອງລັດຈະກວມເອົາ 12-14% ຂອງ GDP, ໃນຂະນະດຽວກັນການລົງທຶນຂອງເອກະຊົນຈະກວມ 13-16%. ການລົງທຶນແມ່ນຈະຊ່ວຍສະໜັບສະໜູນໃຫ້ແກ່ຄັງແຮແຫ່ງຊາດເພີ່ມຂຶ້ນຢ່າງນ້ອຍ 15% ຂອງ GDP ໃນປີ 2020. ຍຸດທະສາດຂອງຂະແໜງການຕາມລຳດັບມີຄື: ພັດທະນາຊັບພະຍາກອນມະນຸດໂດຍຜ່ານການປັບປຸງການສຶກສາ, ການເຮັດໃຫ້ທັນສະໄໝຂອງພື້ນຖານໂຄງລ່າງ; ການຂະຫຍາຍຕາຂ່າຍໄຟຟ້າ; ການສຸມໃສ່ການຜະລິດຂະໜາດນ້ອຍຫາຂະໜາດກາງ ແລະ ການອຸດສາຫະກຳ ຫັດຖະກຳພື້ນເມືອງ; ການສ້າງຄວາມເຂັ້ມແຂງຂອງການແຂ່ງຂັນກັບຕະຫຼາດສາກົນ; ຄວາມພະຍາຍາມຂອງລັດຖະບານໃນຍຸກໂລກາພິວັດ ແລະ ການຮັບຮູ້ຕໍ່ອົງການຈັດຕັ້ງຕ່າງໆເຊັ່ນ: ອາຊຽນ, ອົງການຄ້າໂລກ, ອື່ນໆ... ແລະ ການລົງທຶນຢ່າງສົມເຫດສົມຜົນ ສຳລັບວຽກງານອຸດສາຫະກຳເພື່ອສ້າງຄວາມເຂັ້ມແຂງທາງດ້ານເຕັກໂນໂລຊີ.

### 2.2.2 ແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 5 (2001-2005)

**(1) ຈຸດປະສົງຂອງການພັດທະນາ**

ເປົ້າໝາຍຫຼັກຂອງແຜນການພັດທະນາເສດຖະກິດ-ສັງຄົມ ສຳລັບໄລຍະປີ 2001-2005 ມີຄື: ເພື່ອຮັບປະກັນຄວາມຄືບໜ້າກ້າວໄປເຖິງຄວາມປອດໄພຂອງສັງຄົມ ແລະ ສະເຖຍລະພາບຄວາມໝັ້ນຄົງທາງດ້ານການເມືອງ; ເພື່ອສ້າງບັນຍາກາດສຳລັບການສືບຕໍ່ຂະຫຍາຍຕົວທາງດ້ານເສດຖະກິດ; ເພື່ອຫຼຸດຜ່ອນລະດັບຄວາມທຸກຈົນ ໃຫ້ໄດ້ເຄິ່ງໜຶ່ງໃນປີ 2010; ເພື່ອໃຫ້ສຳເລັດ ການຄ້ຳປະກັນສະບຽງອາຫານ; ເພື່ອແກ້ໄຂບັນຫາ ການຖາງປ່າເຮັດໄຮ່ ແລະ ຫ້າມການປູກຝິ່ນຢ່າງເຂັ້ມງວດໂດຍການຈັດສັນອາຊີບໃໝ່ໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ; ຂະຫຍາຍຄັງແຮແຫ່ງຊາດ; ເອົາໃຈໃສ່ຢ່າງເຂັ້ມງວດຕໍ່ການປັບປຸງທັງສອງພາກສ່ວນຄື: ບໍລິສັດຂອງລັດ ແລະ ຂອງເອກະຊົນ; ພັດທະນາຊັບພະຍາກອນມະນຸດໃນຫຼາຍຂົງເຂດ ແລະ ຊຸກຍູ້ການພັດທະນາໂຮງງານອຸດສາຫະກຳທີ່ທັນສະໄໝ. ຈຸດປະ

ສິ່ງຂອງແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ (200-2005) ແມ່ນໄດ້ສ້າງຂຶ້ນດັ່ງຕໍ່ໄປນີ້:

- ການເຕີບໂຕຂອງ GDP ໃນ 7-7,5% ຕໍ່ປີ;
- ການເຕີບໂຕ GDP ຂອງຂະແໜງການຕໍ່ປີ, ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນ 4-5%, ຂະແໜງອຸດສາຫະກຳ ແມ່ນ 10-11% ແລະ ຂະແໜງບໍລິການ ແມ່ນ 8-9%;
- ການສ່ວນແບ່ງການຜະລິດຂອງຂະແໜງການໃນ GDP, ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນ 47%, ຂະແໜງອຸດສາຫະກຳ ແມ່ນ 26% ແລະ ຂະແໜງການບໍລິການ ແມ່ນ 27%;
- ກຳນົດອັດຕາໄພເງິນເຟີ້ໃຫ້ມີຕົວເລກດ່ຽວຕໍ່ປີ ແລະ ອັດຕາການແລກປ່ຽນໃຫ້ຄົງທີ່;
- ຍົກລະດັບລາຍຮັບງົບປະມານສູງຂຶ້ນເຖິງ 18% ຂອງ GDP ໄລຍະປີ 2004-2005 ແລະ ຮັກສາໄວ້ການຂາດດຸນ ງົບປະມານໃນລະດັບ ປະມານ 5% ຂອງ GDP;
- ຫຼຸດຜ່ອນການຂາດດຸນການຄ້າລົງເຖິງ 6% ຂອງ GDP;
- ການລົງທືນຂອງລັດໃນລະດັບ 12-14% ຂອງ GDP, ແລະ ຄັງແຮ ໃນລະດັບ 12% ຂອງ GDP ໃນປີ 2005 ແລະ
- GDP ຕໍ່ຫົວຄົນໃນລະດັບ 500-550 ໂດລາສະຫະລັດ ໃນປີ 2005 ຊຶ່ງມີປະຊາກອນເທົ່າກັບ 5,9 ລ້ານຄົນ

(2) ເປົ້າໝາຍຂອງຂະແໜງກະສິກຳ ແລະ ປ່າໄມ້ ແລະ ບັນດາຂະແໜງການຍ່ອຍທີ່ພົວພັນກັບແຜນພັດທະນາໂດຍສະເພາະ ແລະ ເປົ້າໝາຍສຳລັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ບັນດາຂະແໜງການຍ່ອຍທີ່ມີການພົວພັນໄດ້ສ້າງຂຶ້ນດັ່ງລຸມນີ້:

<u>ການຜະລິດສະບຽງອາຫານ</u>

ເປົ້າໝາຍການຜະລິດສະບຽງອາຫານໃນປີ 2005 ໃຫ້ໄດ້ 3 ລ້ານໂຕນ ລວມທັງການຜະລິດເຂົ້າ 2,7 ລ້ານໂຕນ ໃນເນື້ອທີ່ 770.000 ເຮັກຕາ ປະກອບດ້ວຍການປູກເຂົ້ານາປີ 620.000 ເຮັກຕາ ແລະ ການປູກເຂົ້ານາແຊງ 150.000 ເຮັກຕາ. ສົ່ງເສີມການການລ້ຽງສັດຢ່າງກວ້າງຂວາງ. ໂດຍວາງເປົ້າໝາຍອັດຕາການເຕີບໂຕໃນລະດັບ 4-5% ຕໍ່ປີ, ຮວມທັງການຜະລິດຊີ້ນ, ປາ, ໄຂ່ ແລະ ນົມໃຫ້ໄດ້ປະມານ 200.000 ໂຕນ ໃນປີ 2005.

<u>ການຜະລິດເປັນສິນຄ້າ</u>

ການຜະລິດພືດເປັນສິນຄ້າ ແມ່ນຈະໄດ້ສົ່ງເສີມ ສຸມໃສ່ ສາລີ, ມັນຕົ້ນ, ຖົ່ວເຫຼືອງ, ຖົ່ວຂຽວ, ຖົ່ວດິນ, ອ້ອຍ, ຝ້າຍ, ໝາກຕາວ, ໝາກງາ, ຜັກຕ່າງໆ ແລະ ໝາກໄມ້ອີງຕາມເງື່ອນໄຂທ່າແຮງຂອງແຕ່ລະເຂດແຄ້ວນ ແລະ ຄວາມຕ້ອງການຂອງຕະຫຼາດ. ພາຍຫຼັງທີ່ການບໍລິໂພກຮັບໃຊ້ພາຍໃນຢ່າງພຽງພໍ, ຈະໄດ້ສົ່ງເສີມການສົ່ງອອກສັດໂດຍວາງເປົ້າໝາຍຄື: ງົວ

44.000 ໂຕ, ຄວາຍ 45.000 ໂຕ, ໝູ 155.000 ໂຕ, ປາ 5.000 ໂຕນ ແລະ ແຮສຸກເສີນຈາກການຜະລິດອື່ນໆ 3.000 ໂຕນ ໃນປີ 2005.

<u>ການຍຸດຕິການຖາງປ່າເຮັດໄຮ່</u>

ການຖາງປ່າເຮັດໄຮ່ຈະໄດ້ລົບລ້າງໂດຍພື້ນຖານໃນປີ 2005. ຈຸດສຸມແມ່ນແນໃສ່ບັນດາແຂວງທີ່ມີເນື້ອທີ່ເຮັດໄຮ່ຫຼາຍກວ່າ 10.000 ເຮັກຕາຂຶ້ນໄປ, ເຊັ່ນ: ແຂວງ ຫຼວງພະບາງ, ອຸດົມໄຊ, ຜົ້ງສາລີ, ຫຼວງນ້ຳທາ ແລະ ແຂວງຊຽງຂວາງ. ອີກບັນຫາໜຶ່ງ, ການປູກຝິ່ນແມ່ນຈະຕ້ອງຢຸດຕິຢ່າງສິ້ນເຊີງ ໃນປີ 2005, ໂດຍສະເພາະສຸມໃສ່ບັນດາແຂວງພາກເໜືອ ເຊັ່ນ: ແຂວງຫຼວງພະບາງ, ອຸດົມໄຊ, ຫຼວງນ້ຳທາ, ຊຽງຂວາງ, ຫົວພັນ ແລະ ແຂວງໄຊຍະບູລີ. ອີກດ້ານໜຶ່ງ ຈະຕ້ອງໄດ້ມີແຜນການຈັດສັນທີ່ດິນ ແລະ ປ່າໄມ້ຄືນໃໝ່ພາຍໃຕ້ ກົດໝາຍວາງແຜນຜັງຕົວເມືອງ, ກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້.

<u>ວຽກງານຊົນລະປະທານ</u>

ໄດ້ວາງແຜນເພື່ອເພີ້ມເນື້ອທີ່ຮັບນ້ຳຊົນລະປະທານ ໃນລະດູຝົນໃຫ້ໄດ້ເຖິງ 400.000 ເຮັກຕາ ແລະ ໃນລະດູແລ້ງ ແມ່ນ 300.000 ເຮັກຕາ ໃນປີ 2005.

<u>ການຄົ້ນຄວ້າທົດລອງໃນຂະແໜງການກະສິກຳ ແລະ ປ່າໄມ້</u>

ກົດຈະກຳຫຼາຍຢ່າງທີ່ປັບປຸງແມ່ນຈະໄດ້ສົ່ງເສີມເຊັ່ນ: ສູນວິຊາການກະສິກຳ, ສູນຝຶກອົບຮົມ, ໜ່ວຍຜະລິດແກ່ນແນວພັນ, ໜ່ວຍກົນຈັກກະສິກຳ, ເພີ້ມການຄົ້ນຄວ້າທົດລອງທາງດ້ານສິນເຊື່ອໃຫ້ແກ່ຊາວກະສິກອນ ແລະ ສະຫະກອນ ແລະ ເພີ້ມທະວີການສະໜອງຂໍ້ມູນຂ່າວສານທັງສອງລະດັບຄືລະດັບມະຫາພາກ ແລະ ຈຸນລະພາກ, ຕົວຢ່າງ: ການນຳໃຊ້ທີ່ດິນ ແລະ ມາດຕະຖານຂອງການຜະລິດ.

<u>ການພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ</u>

ໃນໄລຍະ 5 ປີຕໍ່ໜ້າ, ການພັດທະນາຊົນນະບົດ ແມ່ນຈະໄດ້ເລັງໃສ່ປະຕິບັດ, ຢູ່ໃນຈຸດສຸມຂອງເຂດທີ່ມີຜູ້ທຸກຈົນ ເຂດພູມສັນຖານທີ່ຫຼຸດຜ່ອນຄວາມທຸກຍາກ, ລົບລ້າງການຖາງປ່າເຮັດໄຮ່ ແລະ ການປູກຝິ່ນ. ລັດຖະບານຈະຕ້ອງໄດ້ເກັບກຳເອົາຂໍ້ມູນຂ່າວສານ, ການສຳຫຼວດ ແລະ ສຶກສາເພື່ອຊຸກຍູ້ຕິດຕາມ ກວດກາຍຸດທະສາດ ຂອງການຫຼຸດຜ່ອນຄວາມທຸກຈົນ. ເງິນທີ່ໄດ້ຮັບນັ້ນແມ່ນຈະໄດ້ປະສານສົມທົບຮ່ວມກັນເຮັດກັບການຈັດຕັ້ງປະຕິບັດໂຄງການພັດທະນາເຂດຈຸດສຸມແຫ່ງຊາດ.

<u>ການເງິນ ແລະ ທະນາຄານ</u>

ລາຍຮັບພາສີຕໍ່ປີ ໃນລະດັບ 18% ຂອງ GDP ໃນປີ 2005 ແລະ ຈະຮັກສາການຂາດດຸນງົບປະມານໃນລະດັບປະມານ 5% ຂອງ GDP ນະໂຍບາຍງົບປະມານທີ່ເຄັ່ງຄັດຈະຕ້ອງ

ໄດ້ປະຕິບັດ ແລະ ການຖົມຊຸມຢ່າງຕໍ່ເນື່ອງໂດຍບໍ່ມີເຫດຜົນແມ່ນຈະໄດ້ຖືກລຶບລ້າງ. ລະບົບທະນາຄານ ຈະຕ້ອງໄດ້ມີພື້ນຖານຄຸ້ມຄອງ ການຈັດຕັ້ງປະຕິບັດ ກົດໝາຍໃຫ້ສັກສິດ, ດ້ວຍຄວາມມຸ້ງຫວັງເພື່ອອຳນວຍຄວາມສະດວກດີ ໃຫ້ແກ່ການແຂ່ງຂັນ. ກົດໝາຍເຫຼົ່ານີ້ແມ່ນໄດ້ສ້າງເງື່ອນໄຂ ແລະ ກົນໄກທີ່ໝູນໃຊ້ສຳລັບທະນາທຸລະກິດທັງໝົດເພື່ອເຮັດໃຫ້ເງິນໄດ້ມີການເຄື່ອນໄຫວອອກສູ່ສັງຄົມ ແລະ ຈຶ່ງຈະຕອບສະໜອງການກູ້ຢືມໃຫ້ໄດ້ຫຼາຍຂຶ້ນ ແກ່ຂະແໜງການທຸລະກິດ. ຄຽງຄູ່ກັນນັ້ນ, ບັນຫາທີ່ບໍ່ໄດ້ປະຕິບັດການກູ້ຢືມແມ່ນຈະຖືກແກ້ໄຂໄປເປັນແຕ່ລະບາດກ້າວ ຢູ່ແຕ່ລະທະນາຄານທຸລະກິດ ເທົ່າທີ່ການປັບປຸງໃຫ້ດີມີຄວາມພ້ອມພຽງໃນບັນດາທະນາຄານທຸລະກິດ.

<u>ການຮ່ວມມືເສດຖະກິດຕ່າງປະເທດ</u>

ໃນປີ 2005, ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ຈະໃຫ້ມີໃນລະດັບ 1,8-1,9 ຕື້ໂດລາສະຫະລັດ, ໃນນັ້ນປະກອບມີ ການຊ່ວຍເຫຼືອລ້າ 1,1 ຕື້ໂດລາສະຫະລັດ ແລະ ການກູ້ຢືມ 700-800 ລ້ານໂດລ້າສະຫະລັດໃນໄລຍະ 5 ປີຕໍ່ໜ້າ ແລະ ຈະນຳໄປພັດທະນາເຂື່ອນໄຟຟ້ານ້ຳຕົກ, ການສົ່ງເສີມການຜະລິດເປັນສິນຄ້າ, ການປຸງແຕ່ງກະສິກຳ, ການລ້ຽງສັດ, ອຸດສາຫະກຳປຸງແຕ່ງ, ທັດຖະກຳ, ບໍ່ແຮ່ ແລະ ການບໍລິການພື້ນຖານຕົ້ນຕໍແມ່ນການນຳໃຊ້ວັດຖຸດິບ ແລະ ແຮງງານພາຍໃນ.

<u>ພັດທະນາຊັບພະຍາກອນມະນຸດ</u>

ໃນໄລຍະ 5 ປີຂ້າງໜ້າ, ຈຸດປະສົງຕົ້ນຕໍສຳລັບການພັດທະນາກໍ່ສ້າງພະນັກງານລວມມີ: ລະດັບເໜືອປະລິຍາ 450 ຄົນ, ລະດັບປະລິຍາ 3.500 ຄົນ ແລະ ລະດັບອະນຸປະລິຍາ 7.500 ຄົນ. ຈຳນວນພະນັກງານ ໃນລະດັບທີ່ໄດ້ຮັບປະກາດສະນິຍະບັດ ແລະ ວິຊາຊີບຈະຕ້ອງໄດ້ເພີ້ມຂຶ້ນຢ່າງຫຼວງຫຼາຍໃນແຕ່ລະປີ ຂອງທັງສອງພາກສ່ວນຄື: ອຳນາດການປົກຄອງທ້ອງຖິ່ນ ແລະ ຜູ້ຊ່ວຍວຽກ ໃນຂັ້ນກະຊວງ ອີກໃນກໍລະນີໜຶ່ງຕ້ອງໄດ້ຕອບສະໜອງຄູທີ່ມີຄຸນນະພາບ, ຫຼັກສູດການສອນ ແລະ ທຶນໃຫ້ ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາສະເພາະ ຈາກຫຼາຍວິຊາທີ່ກ່ຽວຂ້ອງ ຈະຕ້ອງໄດ້ມີການຝຶກອົບຮົມ ແລະ ຍົກລະດັບໃຫ້ເຂັ້ມແຂງຂຶ້ນ.

<u>ຄວາມຕ້ອງການ ການລົງທຶນ</u>

ເພື່ອເຮັດໃຫ້ສຳເລັດຈຸດປະສົງຂອງການພັດທະນາ 5 ປີ, ຄວາມຕ້ອງການທຶນທີ່ຄາດໝາຍໄວ້ກ່ອນລ່ວງໜ້າປະມານ 32.500 ຕື້ກີບ ທັງໝົດ ໃນໄລຍະ 2001-2005 ຫຼື ເທົ່າກັບປະມານ 4 ຕື້ໂດລາສະຫະລັດ. ຊຶ່ງປະກອບໃຫ້ແກ່ການລົງທຶນຂອງລັດ 14.400 ຕື້ກີບ ແລະ ທຶນໝູນວຽນ 18.100 ຕື້ກີບ ໂດຍຜ່ານການລົງທຶນຂອງຕ່າງປະເທດ ແລະ ເອກະຊົນພາຍໃນ. ຄວາມມຸ້ງຫວັງການລົງທຶນຂອງລັດ ແມ່ນຫຼາຍກວ່າແຜນການ 5 ປີຄັ້ງຜ່ານມາ (1996-2000) ທົ່ວເທົ່າ. ການແບ່ງສ່ວນຂອງຂະແໜງການ ແລະ ແຫຼ່ງທຶນມີຄາດໝາຍດັ່ງນີ້:

| | | |
|---|---|---|
| ການແບ່ງສ່ວນຂະແໜງການ | | |
| - ຂະແໜງພື້ນຖານໂຄງລ່າງ | 8.500-9.000 ຕື້ກີບ | (60-65%) |
| - ຂະແໜງສັງຄົມ | 3.500-4.000 ຕື້ກີບ | (25-30 %) |
| - ອື່ນໆ | 1.4000 ຕື້ກີບ | (10%) |
| ແຫຼ່ງທຶນ | | |
| - ພາຍໃນ | 6.800 ຕື້ກີບ | (47%) |
| - ຕ່າງປະເທດ | 7.600 ຕື້ກີບ | (53%) |

## 2.3 ການປະຕິບັດການຄ້າໃນໂຄງປະກອບການຄ້າໂລກ

### (1) ຮູບແບບການຄ້າ

ລວມຍອດການນຳເຂົ້າ (CIF) ຂອງ ສປປ ລາວແມ່ນໄດ້ປະກອບມີຫຼາຍກວ່າການສົ່ງອອກ (FOB) ຜົນດັ່ງກ່າວ ແມ່ນສະແດງອອກໃນການຈັດອັນດັບຂາດດຸນການຄ້າ ແຕ່ລະປີ ຈາກ 368 ຫາ 214 ລ້ານ ໂດລາສະຫະລັດ ຂອງບົດລາຍງານ 4 ປີຜ່ານມາ (1996-1999). ລາຍການສິນຄ້າທີ່ສຳຄັນຂອງການສົ່ງອອກ ແມ່ນ ເສື້ອຜ້າ, ໄມ້ ແລະ ຜະລິດຕະພັນໄມ້, ໄຟຟ້າ ແລະ ກາເຟ, ຊຶ່ງກວມເອົາ 85% ຂອງການສົ່ງອອກ ມູນຄ່າປະມານເຖິງ 311 ລ້ານ ໂດລາສະຫະລັດ ໃນປີ 1999. ລາຍການສິນຄ້ານຳເຂົ້າຕົ້ນຕໍໃນປີ 1999 ມູນຄ່າລວມມີ 525 ລ້ານໂດລາ ແມ່ນລົດຖີບແລະ ລົດຈັກ, ເຂົ້າ, ນ້ຳຕານ, ເຈ້ຍ ແລະ ເຄື່ອງໄຟຟ້າ.

ໃນປີ 1999, ລວມຍອດການສົ່ງອອກຫຼຸດລົງ 8,8% ເຫດຜົນຍ້ອນວ່າການນຳເຂົ້າໄດ້ມີການຊັກຊ້າແກ່ຍາວໂດຍຄູ່ສັນຍາການຄ້າ ແລະ ການແກ້ງແຍ້ງແຂ່ງຂັນກັບຕ່າງປະເທດ. ການນຳເຂົ້າໃນປີ 1999 ກໍໄດ້ຫຼຸດລົງເໝືອນກັນເຖິງ 5,1% ຊຶ່ງການນຳເຂົ້າອຸບປະກອນສຳລັບອຸດສາຫະກຳເສື້ອຜ້າ, ເຄື່ອງຈັກ ແລະ ເຄື່ອງບໍລິໂພກຕ່າງໆ ໄດ້ຫຼຸດລົງ. ການສົ່ງອອກກະສິກຳ ແລະ ປ່າໄມ້ປະກອບດ້ວຍໄມ້ ແລະ ຜະລິດຕະພັນໄມ້ ແລະ ປະເພດອາຫານການກິນປະມານ 34-37% ຂອງມູນຄ່າລວມຍອດການສົ່ງອອກໃນປີ 1996-1997. ໄມ້ ແລະ ຜົນຜະລິດໄມ້ໄດ້ເປັນສິນຄ້າທີ່ສົ່ງອອກຫຼາຍກ່ວາໝູ່, ຕາມມາດ້ວຍກາເຟ, ສາລີ ແລະ ຖົ່ວດິນ. ໃນຂອບເຂດຂອງການນຳເຂົ້າ, ປັດໃຈນຳເຂົ້າດ້ານກະສິກຳ, ປະກອບດ້ວຍໂຮງສີເຂົ້າ, ໂປັມນ້ຳ, ລົດໄຖ ແລະ ເຄື່ອງມືອຸປະກອນຕ່າງໆ, ຝຸ່ນ ແລະ ອາຫານສັດ ປະມານ 3% ຂອງລວມຍອດມູນຄ່າລາຍການນຳເຂົ້າ ແລະ ປະເພດລາຍການອາຫານການກິນ 12-15% ຂອງລວມຍອດນຳເຂົ້າໃນຊຸມປີເຫຼົ່ານີ້.

(2) ໂຄງສ້າງຂອງການປ້ອງກັນການຄ້າໃນ ສປປ ລາວ

ການກຳນົດອັດຕາພາສີອາກອນແມ່ນຂ້ອນຂ້າງຕ່ຳ. ອັດຕາພາສີອາກອນທີ່ສູງແມ່ນການນຳເຂົ້າລົດຍົນ ແລະ ຜູ້ບໍລິໂພກນຳເຂົ້າທີ່ໄດ້ຈັດເປັນປະເພດເຊັ່ນສິນຄ້າລາຄາແພງ. ການນຳເຂົ້າ ທີ່ປ່ຽນແທນອຸດສາຫະກຳກໍຄືຈະໄດ້ຮັບການປົກປ້ອງ ຢ່າງແທ້ຈິງເໝືອນກັນ. ແຜນການຍົກເວັ້ນພາສີອະນຸຍາດໃຫ້ສົ່ງອອກຂອງສິ່ງທີ່ນຳໃຊ້ເຂົ້າໃນການຜະລິດສຳລັບສົ່ງອອກແມ່ນບໍ່ໄດ້ເກັບອັດຕາພາສີອາກອນ. ໄດ້ມີການຖົມຂຸມການຍົກເວັ້ນການເກັບພາສີອາກອນວ່າການດຳເນີນແນວໃດຈຶ່ງຈະເຮັດໃຫ້ໝົດໄປເອງ. ເຫັນວ່າການປ່ຽນແປງຂອງການຍົກເວັ້ນພາສີຈະຕ້ອງໄດ້ ຮັບອະນຸຍາດການປ່ຽນແປງໂດຍອີງການຈັດຕັ້ງ ແລະ ອຳນາດການປົກຄອງ. ອັດຕາທີ່ມີຜົນສະເລ່ຍແມ່ນ 8,55% ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງ 2.6

ຕາຕະລາງ 2.6 ສັງລວມການຈັດອັນດັບພາສີອາກອນໃນໝວດທີ່ສຳຄັນ

| ຂະແໜງການ | ຜະລິດຕະພັນ | % ພາສີເກັບຕົວຈິງ |
|---|---|---|
| ການກະສິກຳ | ແນວພັນ | 5% |
| | ຝຸ່ນ | 5% |
| | ອື່ນໆ | 5-40% |
| ການປະມົງ | | 5-40% |
| ການລ້ຽງສັດ | ອາຫານສັດ | 5% |
| | ອື່ນໆ | 5-30% |
| ຜູ້ບໍລິໂພກສິນຄ້າ | ອາຫານທີ່ມີລາຄາແພງ | 10-30% |

ແຫຼ່ງຂໍ້ມູນ: ກະຊວງການຄ້າ

ບັນຫາໃຫຍ່ແມ່ນສິ່ງທີ່ກີດຂວາງ ທີ່ບໍ່ແມ່ນອັດຕາພາສີ (NTB). ໄດ້ມີຈຳນວນປະລິມານສິນຄ້າທີ່ຕ້ອງຫ້າມໃນການນຳເຂົ້າ ແລະສົ່ງອອກ, ສອງລະບົບທີ່ຊັດເຈນຂອງການອອກອະນຸຍາດ ແລະ ການອຳນວຍຄວາມສະດວກໃຫ້ ແລະ ລະບົບສິນທິສັນຍາ ໂດຍເຂົ້າຮ່ວມໃນການຕົກລົງ ລະຫວ່າງບຸກຄົນ ກັບລັດຖະບານ ແລະ ບໍລິສັດການຄ້າ. ສິນທິສັນຍານີ້ອະນຸຍາດໃຫ້ບໍລິສັດເພື່ອນຳເຂົ້າ ແລະ ສົ່ງອອກ ສະເພາະຜະລິດຕະພັນບໍ່ເກັບພາສີ, ລວມທັງອາກອນ, ພາສີທຸລະກິດ ແລະ ພາສີກຳໄລທີ່ຕອບແທນສຳລັບການໃຊ້ຈ່າຍລວມທີ່ໄດ້ມີຢູ່ໃນການເຈລະຈາຕົກລົງກັນ ແລ້ວ. ໄດ້ມີການຈັດຂັ້ນຢູ່ໃນລະດັບສູງຂອງຜູ້ທີ່ເຮັດຕາມໃຈຢູ່ໃນລະບົບນີ້ ເຖິງຢ່າງໃດກໍຕາມການປ່ຽນແປງບາງຢ່າງກໍໄດ້ເຮັດໃຫ້ບັນຫານີ້ໄດ້ຮັບການແກ້ໄຂໃນບໍ່ພໍເທົ່າໃດປີມານີ້.

(3) ກຸ່ມອາຊຽນ (ASEAN) ແລະ ການໃຫ້ສິດທິພິເສດທາງດ້ານອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ (CEPT)

ໃນນາມທີ່ເປັນສະມາຊິກຂອງກຸ່ມອາຊຽນ, ສປປ ລາວ ຈະຕ້ອງໄດ້ປະຕິ ບັດຕາມການໃຫ້ສິດທິພິເສດທາງດ້ານອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ. ແຜນການປະຕິບັດຕາມການໃຫ້ສິດທິພິເສດທາງດ້ານອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ ແມ່ນເພື່ອດຶງເອົາອັດຕາພາສີອາກອນລົດລົງເຖິງ 0-5% ສຳລັບເຂດການຄ້າເສລີ ກີດກັ້ນການຄ້າໃນຂົງເຂດ ກຳນົດໃນໄລຍະສິບປີຈະສິ້ນສຸດໃນປີ 2008. ສປປ ລາວ ເຂົ້າຮ່ວມກັບເຂດການຄ້າເສລີ ຈະມີຜົນກະທົບສອງທາງຄື: (i) ຜ່ານການຫຼຸດຜ່ອນພາສີອາກອນທຸກຢ່າງ ແລະ ຜົນທີ່ໄດ້ຮັບເຂົ້າເຖິງຕະຫຼາດຕາມແຜນການ ການໃຫ້ສິດທິພິເສດ ທາງດ້ານອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ ແລະ (ii) ໂດຍການເພີ່ມຈຸດສຸມທີ່ວ່າເຂດການຄ້າເສລີແມ່ນຄ້າຍຄືວ່າເພື່ອດຶງເອົາການຕະຫຼາດເບິ່ງໃນພາບລວມ. ການໃຫ້ສິດທິພິເສດທາງດ້ານອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ ສ້າງຕັ້ງສັນຍາການຄ້າສິດທິພິເສດ ກັບເສດຖະກິດອາຊີບົນພື້ນຖານສີ່ບັນຊີລາຍການຫລຸດຜ່ອນອັດຕາພາສີສິນຄ້າຄື:

| | |
|---|---|
| ບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ (Inclusion List) | ແມ່ນຜະລິດຕະພັນທີ່ມີຫົວຂໍ້ກ່ຽວກັບອັດຕາພາສີອາກອນເພີ້ມໃນທັນທີທັນໃດເພື່ອຈັດເອົາເຂົ້າໃນຂັ້ນດັບຂອງ 0-5% ໃນປີ 2003 ຮ່ວມທັງເງື່ອນໄຂທີ່ວ່າ (1) ບາງສິ່ງທີ່ກີດຂວາງທີ່ບໍ່ແມ່ນອັດຕາພາສີທີ່ຈະລຶບລ້າງໃນ 5 ປີ ຂອງບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ, (2) ປະລິມານການຫວງຫ້າມແມ່ນຈະໄດ້ລຶບລ້າງ ທັນທີອອກຈາກບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ ແລະ (3) ປ່ຽນແປງການຫວງຫ້າມ ແລະ ພາສີເກັບເພີ້ມແມ່ນຈະໄດ້ລຶບລ້າງເໝືອນກັນ. |
| ບັນຊີລາຍການສິນຄ້າທີ່ ໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ (Temporally exclusion list ) | ບັນຊີລາຍການສິນຄ້າທີ່ໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ. ລວມເອົາທັງລາຍການທີ່ຫຼຸດຜ່ອນໄດ້ໃນທັນໃດ. ບໍ່ໄດ້ລວມເອົາຈາກລາຍການຫຼຸດຜ່ອນອັດຕາພາສີ. ໃນບັນຊີນີ້ອາດຈະລວມເອົາບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດໃນລະຫວ່າງປີ 2001 ແລະ 2006 ແລະ 2 ປີ ຫຼັງຈາກ 2006 ຈະຕ້ອງໄດ້ລຸດ 5%. |
| ບັນຊີລາຍການສິນຄ້າກະທົບໄວ (Sensitive List) | ບັນຊີລາຍການສິນຄ້າກະທົບໄວ້ ພົວພັນກັບຜົນຜະລິດກະສິກຳ ທີ່ບໍ່ທັນໄດ້ປຸງແຕ່ງ. ບັນຊີນີ້ສາມາດເຄື່ອນຍ້າຍໄປເຂົ້າກັບບັນຊີລາຍການສິນຄ້າທີ່ໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ ໃນເວລາໃດກໍໄດ້ໃນໄລຍະ 17 ປີ ເລີ້ມຕົ້ນປະຕິບັດ ປີ 1998. |
| ບັນຊີລາຍການສິນຄ້າທີ່ຍົກເວັ້ນຈາກການຫຼຸດຜ່ອນອັດຕາພາສີທັງໝົດຫຼືບັນຊີສະຫງວນໄວ້ຢ່າງຖາວອນ (General Exception List ) | ບັນຊີລາຍການສິນຄ້າທີ່ຍົກເວັ້ນຈາກການຫຼຸດຜ່ອນອັດຕາພາສີທັງໝົດ ຫຼື ບັນຊີສະຫງວນໄວ້ຢ່າງຖາວອນ ບັນຈຸລາຍການທີ່ຢູ່ຖາວອນ ບໍ່ລວມເອົາລາຍການຫຼຸດຜ່ອນອັດຕາພາສີ ຈາກສິນຄ້າ ທາງດ້ານການຮັກສາຄວາມປອດໄພ ຫຼື ວັດທະນະທຳ |

ສປປ ລາວໄດ້ລິເລີ່ມດຳເນີນ ການປະຕິບັດເຂົ້າໃນການ ເຄື່ອນໄຫວໄປຕາມການເຂົ້າຮ່ວມສ້າງຕັ້ງເຂດ ການຄ້າເສລີ. ການສ້າງຕັ້ງເພື່ອສະເໜີຕັດອັດຕາພາສີອາກອນຂອງ ສປປ ລາວ ແມ່ນໃຊ້ເວລາອັນຍືດເຍື້ອຍາວນານຫຼາຍ ຊຶ່ງການຄ້າດ້ານກະສິກຳ ແມ່ນບໍ່ໄດ້ນອນໃນບັນຊີລາຍການຫຼຸດ ຜ່ອນ ອັດຕາພາສີ. ປີ 2000 ການໃຫ້ສິດທິພິເສດທາງດ້ານອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ (CEPT) ວ່າ, ເຖິງຢ່າງໃດກໍ່ຕາມໄດ້ກຳນົດເອົາ 1.673 ລາຍການ ຫຼື ປະມານ 47% ຂອງຈຳນວນລວມທັງໝົດຂອງລາຍການສິນຄ້າທີ່ໄດ້ຖືກໂອນມາຢູ່ບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ. ນີ້ໝາຍເຖິງວ່າຈະບໍ່ແມ່ນອັດຕາພາສີສຳລັບກຸ່ມນີ້ຈະລົງເຖິງ 0-5% ໃນປີ 2003, ແຕ່ການດຳເນີນບາງສິ່ງທີ່ກີດຂວາງທີ່ບໍ່ແມ່ນອັດຕາພາສີ ການກຳນົດ ປະລິມານທີ່ຕ້ອງຫ້າມ ແລະ ການເກັບຄ່າພາສີເພີ້ມແມ່ນຕ້ອງການໃຫ້ມີການຍົກເລີກ. ການກຳນົດໄດ້ລວມທັງຕາຕະລາງເວລາທີ່ຫຼຸດຜ່ອນພາສີຈາກປີ 2001-2008 ສຳລັບບັນຊີລາຍການສິນຄ້າທີ່ໄຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວກໍ່ ເໝືອນກັນ. ບັນຊີນີ້ໄດ້ລວມມີຜະລິດຕະພັນກະສິກຳຫຼາຍໆ ຢ່າງແຕ່ບໍ່ໄດ້ລວມເອົາເຂົ້າ, ຄວາຍ, ງົວ ແລະ ຢາສູບ. ສິ່ງທີ່ກ່າວມານີ້ແມ່ນຈະໄດ້ສືບຕໍ່ເຮັດໃນລາຍການສິນຄ້າທີ່ໄຈະການຫຼຸດອັດຕາພາສີໄວ້ຊົ່ວຄາວ ຫຼື ບັນຊີລາຍການສິນຄ້າຍົກເວັ້ນຈາກການຫຼຸດຜ່ອນອັດຕາພາສີທັງໝົດ ຫຼື ບັນຊີສະຫງວນໄວ້ຖາວອນ. ເຖິງຈະໄດ້ຄາດຫວັງໄວ້ວ່າ ງົວບໍ່ໄດ້ນອນຢູ່ໃນບັນຊີລາຍການສິນຄ້າ, ແຕ່ສິນຄ້າປະເພດງົວຍັງໃຫ້ສືບຕໍ່ ຢູ່ໃນບັນຊີລາຍການສິນຄ້າທີ່ກະທົບໄວ. ສິນຄ້າເຂົ້າຍັງເຫຼືອຢູ່ໃນບັນຊີລາຍການສິນຄ້າທີ່ກະທົບໄວ. ການຄ້າສົ່ງອອກທີ່ສຳຄັນກວ່າໝູ່ມີ: ຜັກ ແລະ ໝາກໄມ້ທຸກຊະນິດ, ປາ, ກາເຟ ແລະ ພືດພັນທຸກຊະນິດໄດ້ເອົາກັບມາ ຢູ່ໃນບັນຊີລາຍການສິນຄ້າ ຫລຸດຜ່ອນອັດຕາພາສີໄດ້. ຢ່າງໃດກໍ່ຕາມ, ໄດ້ຄັດຈ້ອນຈັດວາງຫຼາຍເທື່ອຫຼາຍທີ ເຮັດໃຫ້ມີຜົນອອກມາໂດຍສະເພາະໃນຂົງເຂດຂອງຜັກ ແລະ ໝາກໄມ້. ຍົກຕົວຢ່າງເຖິງວ່າຜັກໄດ້ນອນຢູ່ໃນບັນຊີສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ, ລວມມີ ກະລຳປີ ແລະ ຜັກບົ່ວທີ່ໄດ້ຄັດເລືອກອອກ. ນົມ ແລະ ໄຂ່ຈະບໍ່ໄດ້ເອົາເຂົ້າໃນບັນຊີສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ.

ບັນຊີລາຍການສິນຄ້າທີ່ໄຈະການໄວ້ຊົ່ວຄາວມີ 1.716 ລາຍການ ຈາກທັງໝົດ 3.551 ລາຍການ. ລາຍການເຫຼົ່ານີ້ແມ່ນນອນຢູ່ໃນບັນຊີລາຍການສິນຄ້າທີ່ໄຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ ຍ້ອນວ່າຕ້ອງໃຫ້ມີລາຍຮັບຈາກພາສີນຳເຂົ້າ, ປ້ອງກັນການຜະລິດພາຍໃນ ຫຼື ດ້ວຍເຫດຜົນວ່າ "ສ້າງອຸດສາຫະກຳທີ່ໜຸ່ມນ້ອຍ". ບັນຫາເຫຼົ່ານີ້ແມ່ນຈະຫຼຸດຜ່ອນອັດຕາພາສີສູງສຸດໃນໄລຍະແປດປີ ແລະ ຈະໄດ້ໂອນໄປເຂົ້າບັນຊີສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ ຫຼັງຈາກສີ່ປີ. ບັນຊີລາຍການສິນຄ້າກະທົບໄວ ປັດຈຸບັນມີ 88 ລາຍການ. ບັນຊີລາຍການສິນຄ້າທີ່ຍົກເວັ້ນຈາກການຫຼຸດຜ່ອນອັດຕາພາສີທັງໝົດ ຫຼື ບັນຊີສະຫງວນໄວ້ຢ່າງຖາວອນມີ 74 ລາຍການ.

ໃນໄລຍະສັ້ນຫາໄລຍະກາງ, ຜົນກະທົບຂອງການຫຼຸດຜ່ອນອັດຕາພາສີ ຂອງອັຟຕາໃນຂະແໜງການກະສິກຳ ແລະ ປ່າໄມ້ ຄາດວ່າຈະມີນ້ອຍລົງ. ການປະຕິບັດນະໂຍບາຍພຽງພໍກຸ້ມຕົນເອງ, ລະບຽບກົດໝາຍ, ການຄ້າ, ພັດທະນາຊົນນະບົດ, ການຜະລິດແບບຫຼາຍຮູບຫຼາຍສີ, ມູນຄ່າປັດໃຈນຳເຂົ້າ ແລະ ອັດຕາການແລກປ່ຽນ ຄາດວ່າຈະເປັນປັດໃຈສຳຄັນທີ່ກະທົບຕໍ່ຜູ້ແຂ່ງຂັນປະເພດສິນຄ້າກະສິກຳ ແລະ ປ່າໄມ້ຂອງລາວ ທີ່ຫຼາຍກວ່າອັດຕາພາສີພຽງຢ່າງດຽວ. ການຫຼຸດຜ່ອນອັດຕາພາສີແມ່ນນ້ອຍ ສຳລັບການຄ້າຕ່າງປະເທດສ່ວນໃຫຍ່ແມ່ນເປັນຕົວເລກດີບຕົວສູງຂຶ້ນ.

ເຖິງວ່າ ອັດຕາພາສີໄດ້ຫຼຸດຜ່ອນເຂົ້າກັບອາຊຽນ, ຜົນດີທີ່ຈະນຳໄປສູ່ ແຕ່ລະປະເທດແມ່ນເຮັດໃຫ້ການຜະລິດ ແລະ ການສົ່ງອອກຜະລິດຕະພັນໄດ້ມີຂໍ້ດີໃນການແຂ່ງຂັນກັນ. ກ່ອນອື່ນໝົດໃນໄລຍະເບື້ອງຕົ້ນຜູ້ຜະລິດ ແລະ ຜູ້ເຮັດທຸລະກິດຈະຕ້ອງເກັ່ງເພື່ອການແກ້ງແຍ້ງແຂ່ງຂັນ. ການສຶກສາຫຼາຍດ້ານໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ມີຂໍ້ໄດ້ປຽບໃນການແກ້ງແຍ້ງແຂ່ງຂັນການຜະລິດປະເພດ ຜັກຕ່າງໆ, ຖົ່ວດິນ, ຖົ່ວເຫຼືອງ, ໝາກກ້ຽງ, ໝູ, ງົວ, ຄວາຍ, ກາເຟ, ອ້ອຍ, ສາລີ, ຖົ່ວ, ໝາກໄມ້ທີ່ຫາຍາກ ແລະ ຈາກສວນປູກໄມ້.

ການກວດສອບອັດຕາພາສີອາກອນຂອງຜົນຜະລິດ ແລະ ການສົ່ງອອກໃຫ້ຄຽງຄູ່ກັນ ໂດຍໄດ້ເອົາເຂົ້າຢູ່ໃນລາຍການສິນຄ້າກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ຊຶ່ງໄດ້ບົ່ງບອກໃຫ້ຄູ່ຮ່ວມສັນຍາໃນອາຊີ ຮູ້ໄດ້ວ່າແມ່ນໄດ້ເຂົ້າໃນລາຍການບັນຊີລາຍການສິນຄ້າທີ່ໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ ຖ້າວ່າຜະລິດຕະພົນປະເພດດຽວກັນ ແມ່ນໄດ້ເອົາເຂົ້າຢູ່ໃນບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ ກັບບັນດາປະເທດສະມາຊິກອາຊຽນອື່ນໆ. ຜົນອັນນີ້ແມ່ນເພື່ອປະຕິເສດ ສປປ ລາວເຂົ້າໃນການຫຼຸດຜ່ອນທຸກໆອັດຕາພາສີທີ່ຕ່ຳກວ່າອັດຕາຂອງ MFN ກັບປະເທດອື່ນໆ. ໃນຂະນະທີ່ ສປປ ລາວຍັງບໍ່ທັນໄດ້ເອົາບາງລາຍການເຂົ້າໃນບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດນັ້ນແມ່ນຈະບໍ່ໄດ້ຮັບຜົນປະໂຫຍດຂອງສິດທິພິເສດເຂົ້າໄປສູ່ຕະຫຼາດຂອງໄທສຳລັບຜະລິດຕະພົນປະເພດນີ້. ຂີດເຂດຕົ້ນຕໍທີ່ ສປປ ລາວຍັງບໍ່ໄດ້ຮັບຂໍ້ໄດ້ປຽບຂອງການໃຫ້ສິດທິອັດຕາພາສີທີ່ເປັນໄປໄດ້ກັບປະເທດໄທ ແມ່ນສະແດງໃຫ ້ເຫັນໃນຕາຕະລາງ 2.7
ການສະເໜີແນະວ່າວິທີການທັງໝົດຕໍ່ ອັຟຕາ ແລະ ການຄ້າກັບບັນດາປະເທດກຸ່ມອາຊຽນ ມີຄືດັ່ງນີ້:

(a) ເຄື່ອນຍ້າຍລາຍການສິນຄ້າກະສິກຳເຂົ້າໃນບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ ທີ່ອັດຕາພາສີຂອງ ສປປ ລາວ ຍັງຕ່ຳຢູ່ແລ້ວໝາຍຄວາມວ່າ ຫຼຸດຜ່ອນໃນລະດັບ 5% , ຊຶ່ງແມ່ນເປົ້າໝາຍຂອງການຫຼຸດຜ່ອນໃນບັນຊີນີ້. ຈຸດປະສົງຂອງ ອັຟຕາ ເພື່ອສ້າງບັນຊີລາຍການຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ;

(b) ເຄື່ອນຍ້າຍລາຍການ ຢູ່ໃນບັນຊີລາຍການ ຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ ທີ່ລາຍການສິນຄ້າກະສິກຳ ແລະ ປ່າໄມ້ ໄດ້ກຳນົດໄວ້ ວ່າມີຂໍ້ໄດ້ປຽບໃນເມື່ອມີແກ້ງແຍ້ງແຂ່ງຂັນກັນສຳລັບການຜະລິດທີ່ມີຄຸນນະພາບຈຳນວນໜຶ່ງ. ທີ່ການລົງທືນທີ່ບໍ່ທັນກ້າແກ້ງແຍ້ງແຂ່ງຂັນກັນແມ່ນມີອັດຕາພາສີສູງ ສຳລັບຜະລິດຕະພັນ ແມ່ນມີທັງການປັບປຸງຄຸນນະພາບ ແລະ ເຕັກໂນໂລຊີໃໝ່.

(c) ຜູ້ຜະລິດຈະວາງກຳນົດ ເວລາສຳລັບການຫຼຸດຜ່ອນ ອັດຕາພາສີໝົດທຸກປະເພດ ຮູ້ໄດ້ເຖິງຄວາມຕັ້ງໃຈຂອງລັດຖະບານວ່າ ດັ່ງນັ້ນຈະຕ້ອງໄດ້ຕິດພັນກັບແຜນການ.

(d) ການຕິດຕາມກວດກາການຫຼຸດຜ່ອນອັດຕາພາສີ ແລະ ສິດທິຂອງບັນດາປະເທດຕ່າງໆທີ່ເຂົ້າຮ່ວມໃນ ອັຟຕາ ແມ່ນຈະໃຫ້ຮູ້ໄດ້ວ່າອານາຄົດຄວາມຫວັງຂອງບໍລິສັດ ເພື່ອຂໍ້ໄດ້ປຽບຂອງການສົ່ງອອກ ແລະ

(e) ອັດຕາພາສີຫຼຸດຜ່ອນກ່ຽວກັບການນຳເຂົ້າດ້ານປັດໃຈນຳເຂົ້າຂອງບໍລິສັດ.

ຕາຕະລາງ 2.7 ໂອກາດການເຂົ້າຮ່ວມສິດທິພິເສດຂອງຕະຫຼາດໃນປະເທດໄທຂອງ ສປປ ລາວ

| ລາຍການ | ຂີດໝາຍຂອງພາສີ | ອັດຕາ MFN | ອັດຕາພາສີໄທພາຍໃຕ້ບັນຊີລາຍການສິນຄ້າຫຼຸດຜ່ອນອັດຕາພາສີໄດ້ໃນທັນໃດ | ກອບຂອງສິດທີ່ຈະເອົາໃຫ້ |
|---|---|---|---|---|
| | 714,10 | 60 | 25 | 35 |
| ປະເພດຮາກທາດແປ້ງ | 714,20 | 60 | 25 | 35 |
| | 714,90 | 60 | 25 | 35 |
| ມັນຝະລັ່ງ | 710,10 | 60 | 20 | 40 |
| | 710,90 | 60 | 20 | 40 |
| ໝາກເລັ່ນ | 702,00 | 60 | 25 | 35 |
| ໝາກແຕງ | 707,00 | 60 | 25 | 35 |
| ກະລຳປີ | 704,90 | 60 | 25 | 35 |
| ຜັກບົ່ວ | 703,10 | 60 | 25 | 35 |
| ຖົ່ວຕ່າງໆ | 708,20 | 60 | 25 | 35 |
| ມ່ວງຫິມມະພານ | 802,00 | 60 | 25 | 35 |
| ກາເຟ | 901,00 | 60 | 25 | 35 |

ແຫຼ່ງຂໍ້ມູນ: ກະຊວງການເງິນ

## 2.4 ໂຄງສ້າງການປົກຄອງແຫ່ງຊາດ ແລະ ການກະຈ່າຍອຳນາດໃຫ້ທ້ອງຖິ່ນ

### (1) ທົ່ວໄປ

ການຈັດຕັ້ງລະບົບບໍລິຫານຄຸ້ມຄອງສູງສຸດຂອງລັດຖະບານແມ່ນຄະນະລັດຖະບານ, ປະທານແມ່ນນາຍົກລັດຖະມົນຕີ. ເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານແມ່ນຫົວໜ້າບໍລິຫານລັດຖະກອນຕາມລຳດັບຂອງລັດຖະບານ. ນາຍົກລັດຖະມົນຕີເປັນຜູ້ແຕ່ງຕັ້ງເຈົ້າແຂວງ ແລະ ເຈົ້າເມືອງ, ເຈົ້າເມືອງເປັນຜູ້ແຕ່ງຕັ້ງນາຍບ້ານ ພາຍຫຼັງການເລືອກຕັ້ງໂດຍມີຜູ້ສະໝັກ ແລະໄດ້ຄັດເລືອກເອົາໂດຍປະຊາມະຕິຂອງຊາວບ້ານເອງ.

ທຸກໆ ກະຊວງມີດຳລັດກ່ຽວກັບພາລະບົດບາດສິດໜ້າທີ່ບົດບາດຕົ້ນຕໍຂອງຕົນ ຈາກນາຍົກລັດຖະມົນຕີ. ໜ້າທີ່ຫຼັກແມ່ນເຮັດວຽກກ່ຽວກັບວິຊາການ, ໃນຄະນະດຽວກັນ ນາຍົກລັດຖະມົນຕີ, ເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານແມ່ນເຮັດວຽກງານການເມືອງ ກັບປະຊາຊົນໃນອຳນາດສານຂອງເຂົາເຈົ້າ. ນະໂຍບາຍຂອງລັດຖະບານແມ່ນປະຕິບັດຕາມສາຍການປົກຄອງຂອງນາຍົກລັດຖະມົນຕີ, ເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານ ໂດຍການຊຸກຍູ້ຊ່ວຍເຫຼືອດ້ານວິຊາການຈາກກະຊວງຕາມສາຍຕັ້ງ.

ອີງໃສ່ດຳລັດຂອງນາຍົກລັດຖະມົນຕີເລກທີ 01 ກ່ຽວກັບການກະຈາຍອຳນາດ, ໄດ້ກຳນົດເອົາແຂວງເປັນຫົວໜ່ວຍຍຸດທະສາດຂອງການພັດທະນາ, ກຳນົດເອົາເມືອງເປັນຫົວໜ່ວຍແຜນການ ແລະ ງົບປະມານຂອງການພັດທະນາ ແລະ ບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດຕົວຈິງຂອງໂຄງການພັດທະນາ. ໃນປັດຈຸບັນ, ເຖິງວ່າ, ແມ່ນແຂວງໄດ້ເປັນຜູ້ຄຸ້ມຄອງພາກສ່ວນຕົ້ນຕໍຂອງແຜນງົບປະມານ ເຊັ່ນ: ເສັ້ນທາງຫຼວງ, ນ້ຳປະປາ, ຮ່ອງລະບາຍນ້ຳເສັຽ ແລະ ຊົນລະປະທານ. ການຈັດຕັ້ງເຫຼົ່ານີ້ ໄດ້ຕັດສິນການແຕ່ງຕັ້ງບຸກຄົນຮັບຜິດຊອບອີງການຈັດຕັ້ງມະຫາຊົນຕ່າງໆໃນລະດັບແຂວງ ແລະ ປະເມີນຜົນໂຄງການ ອື່ນໆ... ແຜນພັດທະນາປະຈຳປີ/5 ປີ, ງົບປະມານປະຈຳປີ, ກົມຫຼື ໜ່ວຍງານຂອງກະຊວງສາຍຕັ້ງບໍລິຫານໄດ້ໃຫ້ຄຳປຶກສາຫາລືຕໍ່ຫົວໜ້າລັດປະຈຳຢູ່ແຂວງ. ເຈົ້າແຂວງ, ເຈົ້າເມືອງ, ພະແນກການ ແລະ ໜ່ວຍງານຕ່າງໆຂອງແຂວງຈັດຕັ້ງປະຕິບັດນະໂຍບາຍຕາມກະຊວງຂອງເຂົາເຈົ້າ ໂດຍຜ່ານການຈັດຕັ້ງບ້ານ ນຳພາໂດຍນາຍບ້ານ ແລະ ບາງຄັ້ງຄາວໄດ້ເຮັດວຽກໂດຍກົງກັບຊາວບ້ານ.

### (2) ການວາງແຜນພັດທະນາ ແລະ ຂັ້ນຕອນຂອງການສ້າງແຜນພັດທະນາ

ການວາງແຜນພັດທະນາເລີ້ມຕົ້ນດ້ວຍການລິເລີ້ມຈາກການຄວບຄຸມດ້ວຍແນວທາງນະໂຍບາຍ ແລະ ຄຳສັ່ງແນະນຳ ລວມທັງການກຳນົດເພດານການໃຊ້ຈ່າຍຂອງແຕ່ລະສາຍການຈັດຕັ້ງ, ຈາກຄະນະລັດຖະບານ. ຈາກນັ້ນນາຍົກລັດຖະມົນຕີອອກຄຳສັ່ງແນະນຳກ່ຽວກັບນະໂຍບາຍແຫ່ງຊາດ, ເປົ້າໝາຍ, ຈຸດສຸມ ແລະ ຄຳສັ່ງແນະນຳ ເຖິງລັດຖະມົນຕີ ແລະ ເຈົ້າ

ແຂວງໃນການກະກຽມແຜນການ 5 ປີ ແລະ ແຜນການປີ ໃນໄລຍະຊຸມປີຕໍ່ໜ້າ. ຄຳສັ່ງແນະນຳນີ້ແມ່ນໄດ້ຈັດສົ່ງເຖິງເຈົ້າເມືອງ ພ້ອມກັບຄຳສັ່ງແນະນຳຂອງແຂວງ ອອກໂດຍເຈົ້າແຂວງ ໃນການກະກຽມແຜນການຂອງເມືອງ. ຈາກນັ້ນເຈົ້າເມືອງອອກຄຳສັ່ງລະອຽດເຖິງນາຍບ້ານ ໃນການກະກຽມແຜນການຂອງບ້ານ. ບົນພື້ນຖານຄຳສັ່ງແນະນຳຕ່າງໆ ແລະ ການສະໜັບສະໜູນຊ່ວຍເຫຼືອຈາກກະຊວງຕາມສາຍຕັ້ງຂອງຂະແໜງການຕ່າງໆ ໃນລະດັບເມືອງ, ບ້ານກະກຽມ ແລະ ໄດ້ສົ່ງແຜນການພັດທະນາຂອງເຂົາເຈົ້າ ສະເໜີໃຫ້ເຈົ້າເມືອງ. ແຜນການໄດ້ຈັດລຽງບຸລິມະສິດ ແລະ ສະເໜີໃຫ້ເຈົ້າແຂວງ. ເຈົ້າແຂວງພິຈາລະນາແຜນການຂອງເມືອງ ແລະ ກວດກາຄືນຄວາມຕ້ອງການພາຍໃນຂະແໜງການ ແລະ ຄົ້ນຄ້ວາປຶກສາຫາ ລືກັບພະແນກແຜນການຂອງແຂວງ.

ແຜນການຂອງຂະແໜງການ ໄດ້ສັງລວມເຂົ້າເປັນແຜນການຂອງແຂວງ ແມ່ນແຍກໃຫ້ໄປຕາມກະຊວງສາຍຕັ້ງ, ຊຶ່ງເຮັດແຜນຂະແໜງການລວມທົ່ວປະເທດ. ແຜນການແຂວງໄດ້ມີການກວດກາຄືນໃນເວລາຈັດ ສານກອງປະຊຸມປະຈຳເຂດແຄວັນ. ບົນພື້ນ ຖານການຄົ້ນຄ້ວາປຶກສາຫາລືກັນ ກັບແຜນການຂອງກະຊວງ, ຄະນະກຳມະການແຜນການແຫ່ງລັດທີ່ເປັນຜູ້ກະກຽມແຜນການລົງທຶນຂອງລັດ (PIP). ຈາກນັ້ນ ຈຶ່ງເອົາແຜນການລົງທຶນຂອງລັດສົ່ງໃຫ້ກະຊວງການເງິນ ເພື່ອກະກຽມເອົາເຂົ້າໂຄງປະກອບງົບປະມານຂອງລັດ. ຮ່າງໂຄງປະກອບງົບປະມານຂອງລັດ ໄດ້ມີການກຳນົດຮູບແບບ ເພື່ອການດັດແກ້ໃຫ້ເໝາະສົມກັບການຂາດດຸນ ແລ້ວຈະຕ້ອງໄດ້ສົ່ງໃຫ້ຄະນະລັດຖະບານເພື່ອທົບທວນ ແລະ ກວດແກ້ຄືນ. ກະຊວງການເງິນເຮັດຮ່າງແຜນງົບປະມານຂອງລັດລະອຽດ ບົນພື້ນຖານຂອງໂຄງປະກອບງົບປະມານຂອງລັດ. ຄະນະລັດຖະບານທົບທວນຄືນ ແລະ ສະເໜີຮ່າງງົບປະມານຂອງລັດ ແລະ ສະເໜີຮ່າງດັ່ງກ່າວຕໍ່ສະພາແຫ່ງຊາດເພື່ອພິຈາລະນາ ແລະ ຮັບຮອງເອົາແຜນງົບປະມານຂອງລັດ, ຄະນະລັດຖະບານກະກຽມຄຳສັ່ງແນະນຳການຈັດຕັ້ງປະຕິບັດຕົວຈິງຢ່າງລະອຽດໃຫ້ແຕ່ລະແຂວງ ໂດຍອີງຕາມການອະນຸມັດແຫຼ່ງທຶນທີ່ໄດ້ຮັບຮອງເອົາແລ້ວ ແລະ ອື່ນໆ ທີ່ໄດ້ລະບຸໄວ້ຢ່າງຊັດເຈນທີ່ຜ່ານສະພາແຫ່ງຊາດ.

ການແນະນຳວິທີຈັດຕັ້ງປະຕິບັດແຜນງົບປະມານຂອງລັດແມ່ນລະບຸໄວ້ຢ່າງຊັດເຈນໃນດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 192 ເດືອນກັນຍາ 1999. ຫຼັກການພື້ນຖານລວມຂອງງົບປະມານລັດມີດັ່ງຕໍ່ໄປນີ້:

- ງົບປະມານຂອງລັດແມ່ນແຜນການທີ່ຄາດຫວັງສຳລັບລາຍຮັບ ແລະ ລາຍຈ່າຍປະຈຳປີ ງົບປະມານຂອງລັດແມ່ນໄດ້ຮ່ວມງົບປະມານຈາກຫຼາຍພາກສ່ວນເຂົ້າກັນເຊັ່ນ: ດ້ານລະບຽບກົດໝາຍ, ດ້ານຍຸດຕິທຳ, ດ້ານການບໍລິການ, ແຂວງ, ກຳແພງນະຄອນ, ເຂດພິເສດ, ພັກ, ແລະ ອົງການຈັດຕັ້ງມະຫາຊົນທາຊົນຕ່າງໆ;

- ການເກັບລາຍຮັບສຳລັບງົບປະມານຈາກພາສີ, ກິດຈະກຳຕ່າງໆ, ອາກອນ, ຄ່າທຳນຽມຕ່າງໆ ຈະຕ້ອງໄດ້ກຳນົດອອກໂດຍກົດໝາຍ. ຈະບໍ່ແມ່ນອົງການຈັດຕັ້ງຂອງລັດ ທັງບໍ່ແມ່ນຂະແໜງການຂອງລັດເປັນຜູ້ອະນຸມັດອອກລະບຽບກົດໝາຍຂອງການເກັບລາຍຮັບຕ່າງໆ ເພື່ອມອບໃຫ້ແກ່ງົບປະມານ ຫຼື ລາຍຈ່າຍ;
- ລາຍຮັບທັງໝົດທີ່ເອົາເຂົ້າຄອມພິວເຕີຈະຕ້ອງໄປຮັບໃຊ້ໃຫ້ແກ່ງົບປະມານ. ຈະບໍ່ໄດ້ຮັບອະນຸຍາດໃດໆ ທັງສິ້ນ ໃນການນຳໃຊ້ ສຳລັບເປົ້າໝາຍໃດໜຶ່ງ, ເພື່ອເອົາເງິນຈຳນວນໃດໜຶ່ງ ຫຼື ເອົາໄປໃຊ້ຈ່າຍໂດຍກົງໂດຍທີ່ບໍ່ໄດ້ມອບເຂົ້າງົບປະມານ;
- ລາຍຈ່າຍງົບປະມານຈະປະກົດຂຶ້ນໃນແຜນການງົບປະມານ, ໂດຍການຮັບຮອງເອົາຈາກສະພາແຫ່ງຊາດໃນການ ອະນຸມັດຮັບຮອງເອົາຕໍ່ໜ້າກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ລັດຖະບານແມ່ນຮັບຜິດຊອບຕໍ່ສະພາແຫ່ງຊາດກ່ຽວກັບການຈັດຕັ້ງປະຕິບັດງົບປະມານຂອງລັດ ພາຍໃຕ້ການແນະນຳ ແລະ ຊີ້ນຳນຳພາຂອງນາຍົກ. ລັດຖະມົນຕີກະຊວງການເງິນ ແມ່ນຮັບຜິດຊອບຕໍ່ການສ້າງ ແລະ ສັງລວມແຜນການຈັດຕັ້ງປະຕິບັດງົບປະມານຂອງລັດ;
- ບົດລາຍງານການຈັດຕັ້ງປະຕິບັດ ແຜນງົບປະມານປະຈຳປີ ແມ່ນພິຈາລະນາ ແລະ ຮັບຮອງເອົາໂດຍສະພາແຫ່ງຊາດ.

ທຸກໆ ລາຍຮັບຈະບໍ່ໄດ້ເກັບໂດຍຂັ້ນສູນກາງ. ພາກສ່ວນໜຶ່ງຂອງລາຍຮັບແມ່ນເກັບຮັກສາໄວ້ ຫຼື ໂອນໃຫ້ລະຫວ່າງແຂວງຕໍ່ແຂວງ. ເງິນຮັກສາໄວ້ພາຍໃນແຂວງ 40% ຂອງການເກັບລາຍຮັບສຳລັບການນຳໃຊ້ພາຍໃນແຂວງ ແລະ 60% ສົ່ງໃຫ້ສູນກາງ. ຖ້າຫາກການເກັບລາຍຮັບບັນລຸໄດ້ເກີນເປົ້າໝາຍທີ່ໄດ້ມອບໝາຍໃຫ້ ແຂວງສາມາດຫັກເອົາໄວ້ 50% ຂອງສ່ວນເກີນ ເພື່ອນຳໃຊ້ຢູ່ພາຍໃນແຂວງ. ມີສີ່ແຂວງແມ່ນຈັດເປັນແຂວງທີ່ມີລາຍຮັບມີສ່ວນເກີນເຊັ່ນ: ກຳແພງນະຄອນ, ແຂວງສະຫວັນນະເຂດ, ຈຳປາສັກ ແລະ ຄຳມ່ວນ. ບັນດາແຂວງອື່ນແມ່ນກຸ້ມຕົນເອງໄດ້ຕາມປົກກະຕິ ຫຼື ສາມາດຮັກສາໄວ້ຢູ່ໃນການຂາດດູນ 100% ຂອງການເກັບລາຍຮັບ ໄດ້ເຖິງເປົ້າໝາຍ ທີ່ໄດ້ມອບໝາຍໃຫ້. ການນຳໃຊ້ທຶນສ່ວນເກີນແມ່ນອີງໃສ່ສູນກາງ.ມີພຽງແຕ່ເຄິ່ງໜຶ່ງຂອງບັນດາແຂວງທີ່ໄດ້ມອບເອົາໃຫ້ອ ນາດລັດ.

(3) ເງື່ອນໄຂປັດຈຸບັນໃນການກະຈາຍອຳນາດຂອງການປົກປົກຄອງບໍລິຫານ

ນາຍົກລັດຖະມົນຕີໄດ້ອອກດຳລັດເລກທີ 1 ລົງວັນທີ 1 ເດືອນມີນາ ປີ 2000 ແມ່ນເປັນລະບຽບພື້ນຖານຂອງການກະຈາຍອຳນາດຢູ່ພາຍໃນປະເທດ. ດຳລັດສະບັບນີ້ໃຊ້ຕ່າງຄວາມຮັບຜິດຊອບຂອງສູນການສຳລັບການວາງແຜນ ແລະ ການສ້າງແຜນງົບປະມານຢູ່ຂັ້ນ

ແຂວງ ໂດຍສະເພາະບ້ານ ແມ່ນມີຄວາມເຫັນດີເຫັນພ້ອມ ກັບແນວທາງນະໂຍບາຍການປ່ຽນແປງໃໝ່ທາງດ້ານເສດຖະກິດໄປສູ່ເສດຖະກິດການຕະຫຼາດ. ດຳລັດແມ່ນໄດ້ເວົ້າໂດຍລວມ ແລະ ບໍ່ທັນຊັດເຈນ ແຕ່ຈຸດສຳຄັນແມ່ນຄວາມຮູ້ຄວາມສາມາດຂອງບ້ານທີ່ບໍ່ທັນໄດ້ຂຶ້ນກັບຮູບປະທຳຂອງເສດຖະກິດ. ດ້ວຍສິດທິການເຄື່ອນທີ່ຂອງລາຍຮັບ, ກຳນົດການສ້າງແຜນການ ແລະ ການຈັດຕັ້ງປະຕິບັດແຜນການຂອງເຂົາເຈົ້າ ພາຍໃຕ້ລະບຽບກົດໝາຍ ແລະ ຄຳສັ່ງແນະນຳຈາກອຳນາດການປົກຄອງເມືອງ ແຜນການຈັດຕັ້ງປະຕິບັດລະອຽດຂອງການ

ກະຈາຍອຳນາດ ແມ່ນໄດ້ກະກຽມໂດຍພະແນກແຜນການ ແລະ ການເງິນຂອງແຕ່ລະແຂວງ ລັດຖະມົນຕີກະຊວງການເງິນອອກມະຕິກ່ຽວກັບລາຍຮັບຂອງບ້ານ ສະບັບເລກທີ 1823/ກງ, ລົງວັນທີ 24 ເດືອນກັນຍາປີ 2000 .

ໃນການປະສານຕໍ່ກັບວຽກງານການທັນທິດລົງຮາກຖານ. ມະຕິໄດ້ລະບຸໄວ້ຢ່າງຈະແຈ້ງ, ແລະ ແນະນຳລະອຽດສຳລັບການຄຸ້ມຄອງລາຍຮັບຂອງບ້ານ. ຈຸດໝາຍຕົ້ນຕໍຂອງດຳລັດມີດັ່ງນີ້. ນາຍຄັງຂອງບ້ານ ແລະ ຜູ້ຊ່ວຍແມ່ນຖືກຄັດເລືອກໂດຍພະແນກການເງິນເມືອງ. ພາຍຫຼັງທີ່ໄດ້ເຫັນດີເຫັນພ້ອມຈາກອຳນາດການປົກຄອງບ້ານເຊັ່ນ: ນາຍບ້ານ ແລະຄະນະກຳມະການຂອງບ້ານ, ນາຍຄັງ ແລະ ຜູ້ຊ່ວຍແມ່ນຖືກແຕ່ງຕັ້ງໂດຍເຈົ້າເມືອງ. ອຳນາດການປົກຄອງເມືອງຕັດສິນກ່ຽວກັບແຫຼ່ງລາຍຮັບຈາກບັນຊີດັ່ງຕໍ່ໄປນີ້: ພາສີທີ່ດິນ ໂດຍອີງຕາມປະເພດຂອງການນຳໃຊ້ດິນ, ພາສີຊັບພະຍາກອນ, ພາສີລາຍຮັບຂອງນັກທຸລະກິດໂດຍມີຂະໜາດລາຍຮັບນ້ອຍກວ່າ 12 ລ້ານກີບ ຕໍ່ປີ, ພາສີການເດີນເຮືອ, ຄ່າທຳນຽມຂຶ້ນທະບຽນສັດ, ທຳນຽມຄ່າເຊັນເອກະສານທີ່ອອກໃຫ້ໂດຍບ້ານ, ລາຍຮັບຈາກການໃຫ້ເຊົ່າວັດຖຸເຄື່ອງຂອງຕ່າງໆ (ລົດດູດ, ລົດໄຖ, ລົດຂົນສົ່ງ ຊຶ່ງບໍ່ໄດ້ມີການລົງທະບຽນ) ທີ່ເປັນເຈົ້າຂອງໂດຍປະຊາຊົນພາຍໃນບ້ານ, ລາຍຮັບຈາກບໍລິສັດທີ່ກໍ່ສ້າງ ແລະ ເຮືອນຕຶກພາຍໃນບ້ານ, ລາຍຮັບຄ່າທຳນຽມຈາກການນຳໃຊ້ນ້ຳຊົນລະປະທານ, ພາສີອື່ນໆ ທີ່ເປັນທາງການຢັ້ງຢືນໃຫ້ໂດຍອຳນາດການປົກຄອງເມືອງ ແລະ ການຕິດສະແຕມການຄ້າ. ສ່ວນແບ່ງຂອງການເກັບລາຍຮັບໂດຍບ້ານມີດັ່ງລຸ່ມນີ້:

- ບັນດາບ້ານທີ່ນອນຢູ່ໃນເຂດພັດທະນາເສດຖະກິດໃນລະດັບສູງໄດ້ຮັບ 4% ຂອງເງິນທີ່ເກັບໄດ້ທັງໝົດ;
- ບັນດາບ້ານທີ່ນອນຢູ່ໃນເຂດພັດທະນາເສດຖະກິດໃນລະດັບກາງໄດ້ຮັບ 6% ຂອງເງິນທີ່ເກັບໄດ້ທັງໝົດ;
- ບັນດາບ້ານທີ່ນອນຢູ່ໃນເຂດພັດທະນາເສດຖະກິດໃນລະດັບ ປົກກະຕິໄດ້ຮັບ 10% ຂອງເງິນທີ່ເກັບໄດ້ທັງໝົດ;

- ບັນດາບ້ານທີ່ນອນຢູ່ໃນເຂດພັດທະນາເສດຖະກິດໃນລະດັບທຸກຍາກອີງໃສ່ລະດູການ ແລະ ເຂດຫ່າງໄກສອກຫຼີກໄດ້ຮັບ 15% ຂອງເງິນທີ່ເກັບໄດ້ທັງໝົດ ແລະ
- ບັນດາບ້ານທີ່ນອນຢູ່ໃນເຂດພັດທະນາເສດຖະກິດໃນເຂດທີ່ບໍ່ມີຄວາມສະງົບ, ເຂດຫ່າງໄກສອກຫຼີກ ຫຼື ເຂດພູດອຍໄດ້ຮັບ 50% ຂອງເງິນທີ່ເກັບໄດ້ທັງໝົດ.

ລາຍຮັບເພີ່ມຈາກການເກັບຄ່າທຳນຽມທີ່ນຳໃຊ້ນ້ຳຊົນລະປະທານແມ່ນໄດ້ປະຕິບັດໂດຍແຍກກັນ. ບ້ານສາມາດໄດ້ສ່ວນແບ່ງປັນ ຈາກການເກັບຮັກສາໄວ້ ຂອງລາຍຮັບມີດັ່ງນີ້: 80% ສຳລັບຝາຍນ້ຳລົ້ນ, 85% ສຳລັບປ້ຳໄຟຟ້າ ແລະ 90% ສຳລັບປ້ຳທີ່ໃຊ້ຈັກສູບດ້ວຍນ້ຳມັນ. ບ້ານສາມາດໃຊ້ຈ່າຍສ່ວນແບ່ງປັນຂອງລາຍຮັບພາຍໃຕ້ຄຳສັ່ງແນະນຳຂອງເຈົ້າເມືອງ. ການກະຈາຍອຳນາດແມ່ນຫາກໍ່ລິເລີ້ມໃນເດືອນ ທັນວາປີ 2000, ຫຼາຍໆ ແຂວງໄດ້ຈັດກອງປະຊຸມ ແລະ ເຮັດສຳມະນາເຜີຍແຜ່ຄຳສັ່ງແນະນຳແລະ ຝຶກອົບຮົມໃຫ້ພະນັກງານເມືອງ ແລະ ບ້ານ ກ່ຽວກັບການຫັນລົງສູ່ຮາກຖານ.

## 2.5 ການສ້າງເສດຖະກິດ-ສັງຄົມໃນເຂດຊົນນະບົດ

### 2.5.1 ໂຄງສ້າງຂອງສັງຄົມຊົນນະບົດ

ສັງຄົມຊົນນະບົດຂອງລາວ ແມ່ນໄດ້ມີນິໄສຄວາມຊິນເຄີຍ ແບບເຄື່ອນີ້ງບໍ່ເປັນເອກະລາດ ບ້ານໄດ້ໃຫ້ຄຳໝັ້ນສັນຍາ ໃນການຜະລິດກະສິກຳ ເພື່ອການດຳລົງຊີວິດຕາມແບບຊົນເຜົ່າ, ພູມສາດ ແລະ ລະບົດນິເວດ ທີ່ມີຄວາມແຕກຕ່າງກັນໃນແງ່ມູມຂອງການດຳລົງຊີວິດຂອງບ້ານຈາກພາກສ່ວນໜຶ່ງຂອງປະເທດ ຫຼື ພາກສ່ວນໜຶ່ງຂອງແຂວງໜຶ່ງໄປຍັງອີກແຂວງອື່ນ.

ນອກຈາກບ່ອນທີ່ໃກ້ກັບຕົວເມືອງໃຫ່ຍ ແລະ ເຂດທົ່ງພຽງທີ່ອຸດົມສົມບູນດ້ານກະສິກຳ ແລະ ປ່າໄມ້ເຊັ່ນໃນ ວຽງຈັນ, ແຂວງສະຫວັນນະເຂດ ບ້ານແມ່ນຕັ້ງຢູ່ຫ່າງໄກກັນຫຼາຍກິໂລແມັດ ແລະ ຄວາມແຕກຕ່າງລະຫວ່າງເຂດດິນທີ່ມີການພັດທານາເຊັ່ນ: ທົ່ງນາປູກເຂົ້າ ແລະ ດິນເດີ່ນ ດິນຄັງ ແລະ ບາງບ່ອນຍັງເປັນປ່າທີ່ເປັນບ່ອນທຳມາຫາກິນ ສຳລັບເກັບກູ້ເຄື່ອງປ່າຂອງດົງ (ໝາກແໜ່ງ, ຂີ້ຊີ-ນ້ຳມັນຍາງ, ຫວາຍ ອື່ນໆ)

ການມີອາຊີບສະເພາະ ຢູ່ໃນເຂດຊົນນະບົດແມ່ນຕ່ຳ ກ່ອນອື່ນໝົດຕາມຄວາມຈິງແລ້ວທຸກໆ ຄົນແມ່ນເປັນຊາວກະສິກອນ. ຈຳນວນໜຶ່ງແມ່ນມີຄວາມຊຳນານໃນການຕ່ຳຫູກ ຈັກສານ ການຊ່າງ ຫຼື ຄວາມເຊື່ອຖືທາງດ້ານສາສະໜາ ແຕ່ຄວາມຮູ້ຄວາມຊຳນານເຫຼົ່ານັ້ນແມ່ນເປັນໜ້າວຽກອັນສຳຮອງ ທີ່ສາມາດເຮັດຮ່ວມກັນກັບວຽກງານຕົ້ນຕໍ ຂອງການປູກພືດສະບຽງອາຫານໃຫ້ພຽງພໍສຳລັບຄອບຄົວ. ແນວໂນ້ມຂອງການຈັດແບ່ງຂັ້ນເສດຖະກິດ ແລະ ສັງຄົມແມ່ນຈະມີຕ່ຳຢູ່ໃນບ້ານໜຶ່ງ, ສະຖານະການເພີ້ມຂຶ້ນຂອງອາຍຸກະສຽນ, ຄວາມອຸດົມ

ຮັ່ງມີ, ຄວາມຊຳນານໃນວຽກງານສະເພາະ ແລະ ຄວາມຮູ້ທາງດ້ານເຊື້ອຖືເປັນພື້ນຖານຄວາມປອງດອງ ຊຶ່ງກັນ ແລະ ກັນທີ່ຄຽງຄູ່ກັບດ້ານການເມືອງ ອາດມີຂື້ນຢູ່ໃນບ້ານ ແຕ່ທຳມະດາແລ້ວ ຈະບໍ່ມີສິ່ງທີ່ກີດກັ້ນຫຍັງທັງໝົດຕໍ່ການຮ່ວມມື ແລະ ການປົກຄອງຂອງບ້ານໜຶ່ງໃນຈຳນວນຊາວບ້ານສ່ວນຫຼາຍຂອງຕົວຊີ້ບອກຢູ່ໃນບົດສະເໜີເສດຖະກິດ-ສັງຄົມຂອງບ້ານແມ່ນຖືເອົາການເຮັດນາເປັນຈຳນວນຫລາຍ ຫຼື ຈຳນວນນຶ່ງລ້ຽງສັດ ໂດຍກາຍເປັນເຈົ້າຂອງຄອບຄົວ.

## 2.5.2 ການບໍລິໂພກ, ລາຍຮັບ ແລະ ວຽກເຮັດງານທຳໃນຂະແໜງການຊົນນະບົດ

ປະມານ 83% ຂອງພົນລະເມືອງລາວອາໃສຢູ່ໃນເຂດຊົນນະບົດ ແລະ ໃນຈຳນວນດັ່ງກ່າວແມ່ນ 66% ມີຊີວິດການເປັນຢູ່ຂຶ້ນກັບກະສິກຳ ແລະ ປ່າໄມ້. ໄດ້ມີປະມານ 620.000 ຄອບຄົວ ຂຶ້ນກັບການເຮັດກະສິກຳ ແລະ ປ່າໄມ້ ໃນນັ້ນ 492.000 ຄອບຄົວ ຊຶ່ງມີຄວາມເຊື່ອໝັ້ນກັບການດຳລົງຊີວິດດ້ານກະສິກຳ ແລະ ປ່າໄມ້ (ອີງໃສ່ການສຳຫຼວດສະຖິຕິກະສິກຳ ແລະ ປ່າໄມ້ ປີ 1995) ການບໍລິໂພກສະເລ່ຍຂອງຄອບຄົວໃນເຂດຊົນນະບົດແມ່ນມີຄວາມແຕກໂຕນກັນກັບເຂດຕົວເມືອງດັ່ງທີ່ໄດ້ສະແດງໃນຕາຕະລາງຂ້າງລຸ່ມນີ້. ຄວາມເປັນເອກະລາດຂອງການເປັນເຈົ້າຂອງຜົນຜະລິດສະບຽງອາຫານເຂດຊົນນະບົດໂດຍບໍ່ມີເສັ້ນຕິດຕໍ່ພົວພັນໄດ້ແມ່ນມີຫຼາຍກວ່າ 72%

ຕາຕລາງ 2.8 ສ່ວນແບ່ງທີ່ຄິດໄລ່ເປັນເປີເຊັນຂອງການບໍລິໂພກໃນແຕ່ລະເຂດສົກປີ1997- 1998.

| ລາຍການ | ເຂດຕົວເມືອງ | ເຂດຊົນນະບົດທີ່ມີທົນທາງເຂົ້າເຖິງ | ເຂດຊົນນະບົດທີ່ບໍ່ມີທົນທາງເຂົ້າເຖິງ |
|---|---|---|---|
| ການບໍລິໂພກອາຫານ | 51 | 6 | 68 |
| ເຂົ້າ | 16 | 30 | 35 |
| ຂົນສົ່ງ | 13 | 11 | 8 |
| ການໃຫ້ເຊົ່າເຄື່ອງຂອງຕ່າງໆ | 18 | 4 | 3 |
| % ຂອງການເປັນເຈົ້າຂອງຜົນຜະລິດສະບຽງອາຫານ | 18 | 60 | 72 |

ແຫຼ່ງຂໍ້ມູນ: ການສຳຫຼວດລາຍຮັບ ແລະ ການບໍລິໂພກຂອງລາວ ສົກປີ 1997-/98 (LECS 2)

ການສຳຫຼວດລາຍຈ່າຍ ແລະ ການບໍລິໂພກຂອງລາວສົກປີ 1997-98 (LECS 2) ໃຫ້ຮູ້ວ່າ, 60% ຂອງລາຍຮັບໃນເຂດຊົນນະບົດມາຈາກກະສິກຳ ແລະ ປ່າໄມ້, ຕາມມາດ້ວຍການເຮັດທຸລະກິດ (12%), ແຮງງານ (12%) ແລະ ການທາງນອກ (10%) ສະແດງໃຫ້ເຫັນວ່າ ແມ່ນຊາວກະສິກອນສ່ວນຫຼາຍມີລາຍຮັບຕົວຈິງ ແມ່ນໄດ້ມາຈາກການຂາຍສັດທີ່ແມ່ນລາຍຮັບອັນສຳຄັນ ໂດຍທີ່ບໍ່ແມ່ນແບບຟາມ ແລະ ແຫຼ່ງລາຍຮັບອື່ນໆ. ຄອບຄົວທີ່

ສາມາດມີລາຍຮັບຈາກການເຮັດທຸລະກິດໃນເຂດຊົນນະບົດແມ່ນ 44% ໂດຍສະເລ່ຍ. ສ່ວນຫຼວງຫຼາຍຟາມແມ່ນເຮັດຮ່ວມກັບການຜະລິດເຂົ້າກິນເພື່ອລ້ຽງຊີບ ໂດຍແມ່ນມີຄວາມຈຳເປັນສຳລັບຂອງຄອບຄົວທີ່ມີບັດຮຽນໃນການຂາດເຂົ້າກິນ ໃນບາງໄລຍະສ່ວນຫຼາຍໃນແຕ່ລະປີ ໃນຄະນະທີ່ຊົນນະບົດ-ຕົວເມືອງບໍ່ໄດ້ຮອບຮວມເອົາຂໍ້ມູນໃນການເຮັດວຽກ ແມ່ນບໍ່ສາມາດເຮັດໄດ້. ການກະຈາຍຂອງຄອບຄົວສຳລັບການເຮັດວຽກໃນກິດຈະການໃດໜຶ່ງແມ່ນບໍ່ຈະແຈ້ງ. ແຕ່ວ່າການໃຊ້ເວລາເຮັດການກະສິກຳຂອງໄວໜຸ່ມໃນຂົງເຂດຊົນນະບົດເພື່ອເຮັດວຽກໃນການສ້າງລາຍຮັບເພີ້ມໃນເຂດຊົນນະບົດ.

ຕາຕະລາງ 2.9 ໄວສະກັນໃຊ້ເວລາໃນການເຮັດວຽກສ້າງລາຍຮັບເພີ້ມໃນເຂດຊົນນະບົດ

| ລາຍການ | ເຂດຕົວເມືອງ | ເຂດຊົນນະບົດທີ່ມີທີ່ນທາງເຂົ້າເຖິງ | ເຂດຊົນນະບົດທີ່ບໍ່ມີທີ່ນທາງເຂົ້າເຖິງ |
|---|---|---|---|
| ເຮັດວຽກແບບໄດ້ຮັບເງິນເດືອນ | 35 | 9 | 6 |
| ເປັນເຈົ້າຂອງທຸລະກິດ | 33 | 12 | 6 |
| ກະສິກຳ ແລະ ປ່າໄມ້ | 21 | 52 | 52 |
| ຫາຟືນ,ຕັກນ້ຳ,ລ່າເນື້ອ, ຫາປາ | 6 | 19 | 28 |
| ທັດຖະກຳ | 5 | 8 | 8 |
| ລວມ | 100 | 100 | 100 |

ແຫຼ່ງຂໍ້ມູນ: ການສຳຫຼວດລາຍຮັບ ແລະ ການບໍລິໂພກຂອງລາວ ລົກປີ 1997-/98 (LECS 2)

### 2.5.3 ຕົວຊີ້ບອກດ້ານສັງຄົມທີ່ເປັນຂໍກຸນແຈ

ໂດຍທົ່ວໄປແລ້ວໃນເຂດຊົນນະບົດທີ່ມີຕະຫຼາດ, ໂຮງຮຽນ ແລະ ໂຮງໝໍ ແມ່ນມີຈຳກັດຫຼາຍ ມີປະມານ 50% ຂອງເສັ້ນທາງຫຼວງແຫ່ງຊາດ ແລະ ນ້ອຍກວ່າ 2% ຂອງເສັ້ນທາງຫຼວງຂອງແຂວງ ແມ່ນເປັນທາງແບບບຸກເບີກ ແລະ ເຮັດໃຫ້ຕິດຕໍ່ພົວພັນກັນໄດ້ເພີ້ມຫຼາຍຂຶ້ນໃນຊ່ວງລະດູຝົນ. ທາງຊົນນະບົດທີ່ຍັງບໍ່ທັນໄດ້ພັດທະນາ ແມ່ນເປັນບັນຫາລວມທົ່ວປະເທດ. ສຳລັບການຕອບສະໜອງນ້ຳກິນ ນ້ຳໃຊ້ ມີນ້ອຍກວ່າ 50% ຂອງພົນລະເມືອງຊົນນະບົດໄດ້ມີນ້ຳສະອາດໃຊ້. ການຕອບສະໜອງນ້ຳ ແມ່ນໄດ້ເຮັດໃຫ້ຄວາມຫຍຸ້ງຍາກໃນເຂດພູດອຍ ຫຼາຍກວ່າເຂດທົ່ງພຽງ. ອັດຕາສະເລ່ຍການຮູ້ໜັງສືໃນເຂດຊົນນະບົດແມ່ນ 64% (ໃນເຂດຕົວເມືອງ 89%) ຊ່ອງຫວ່າງບົດບາດຍິງຊາຍໃນການຮູ້ໜັງສື ແມ່ນແຕກຕ່າງກັບຢູ່ເຂດຊົນນະບົດມີ 49% ເພດຍິງ ແມ່ນຮູ້ໜັງສື ໃນຄະນະດຽວກັນຢູ່ຕົວເມືອງແມ່ນ 82%. ມີພຽງ 5% ຂອງໂຮງຮຽນ ທີ່ມີເຮືອນໄຂຢູ່ໃນສະພາບດີໃນເຂດຊົນນະບົດ. ອັດຕາສ່ວນການນຳໃຊ້ໄຟຟ້າ ເຫັນວ່າຍັງຕ່ຳຫຼາຍຢູ່ໃນເຂດຊົນນະບົດ ມີພຽງແຕ່ 8% ຂອງຄອບຄົວຊົນນະ

ບົດ ໄດ້ມີຕາຂາຍໄຟຟ້າໃຊ້ ບ່ອນທີ່ບໍ່ມີຕາຂາຍໄຟຟ້າໄປເຖິງປະຊາຊົນແມ່ນໄດ້ໃຊ້ໝໍ້ໄຟ[1] ດ້ວຍການໃຊ້ຈ່າຍຄ່າສາກສູງ. ບາງບັນຫາທີ່ສຳຄັນອື່ນໆ ທີ່ຊີ້ບອກດ້ານສັງຄົມໄດ້ສັງລວມໃນຕາຕະລາງລຸ່ມນີ້:

ຕາຕະລາງ 2.10 ຕົວຊີ້ບອກທີ່ສຳຄັນຂອງສັງຄົມ

| ລາຍການ | ເຂດຕົວເມືອງ | ເຂດຊົນນະບົດ |
|---|---|---|
| ທົ່ວໄປ | | |
| ເກນອາຍຸຊີວິດ ( ຜູ້ຊາຍ ) | 52 | |
| ເກນອາຍຸຊີວິດ ( ຜູ້ຍິງ) | 50 | |
| ອັດຕາການຕາຍຂອງເດັກ ( ຕໍ່ເດັກເກີດ100 ຄົນ ) | 125 (1995-1999) | |
| **ສຸຂະພາບ** | | |
| ມີນ້ຳສະອາດ ຫຼື ນ້ຳສ້າງທີ່ຮັບປະກັນ* | 77% | 45% |
| ບໍ່ມີສ້ວມຖ່າຍ* | 25% | 80% |
| ການຢູ່ລອດຢ່າງກວ້າງຂວາງ** | 95% | 86% |
| % ທີ່ມີຮ້ານຂາຍຢາ | - | 36% |
| **ການສຶກສາ** | | |
| ໂຮງຮຽນຊັ້ນປະຖົມບໍລິບູນ** | 60% | 42% |
| ມີປຶ້ມອ່ານ** | 67% | 83% |
| ສົກປີຮຽນຂອງໂຮງຮຽນ | 5,5 % | 3,0% |
| ອັດຕາສ່ວນຂອງຜູ້ຍິງຮູ້ໜັງສື | 82% | 49% |
| ອັດຕາສ່ວນຂອງຜູ້ຊາຍຮູ້ໜັງສື | 96% | 79% |

ໝາຍເຫດ: * %ຂອງຄອບຄົວ, ** % ຂອງບ້ານ

ແຫຼ່ງຂໍ້ມູນ: ການສຳຫຼວດລາຍຮັບ ແລະ ການບໍລິໂພກຂອງລາວ ສົກປີ 1997-/98 (LECS 2)

## 2.6 ບັນຫາສັງຄົມ

### 2.6.1 ວຽກງານຊົນເຜົ່າ

ສະພາບລວມຂອງປະເທດລາວແມ່ນມີຫຼາຍຊົນຊາດ ຊົນເຜົ່າ, ທີ່ມາຂອງບັກດາຊົນເຜົ່າແມ່ນມາຈາກແຫຼ່ງແຕກຕ່າງກັນ. ລາວສູງ (ມົ້ງ, Tibeto-Burman, ຢ້າວ) ແລະ ລາວເທິງ (Mon-Khmer) ຈຳນວນສ່ວນໜຶ່ງ ໄດ້ແຕ່ງງານລະຫວ່າງຊົນເຜົ່າຮ່ວມກັບລາວລຸ່ມ (Tai—Kadai ) ແລະ ໄດ້ມີການປັບເຂົ້າກັບສັງຄົມຂອງລາວລຸ່ມ. ແຕ່ລະຊົນເຜົ່າໄດ້ມີເອກກະລັກເປັນຂອງຕົນ ລາວລຸ່ມ ມີຮີດຄອງປະເພນີ ແລະ ການນຸ່ງຖື ມີຄວາມສຳຄັນທີ່ຈະຕ້ອງໄດ້ສ້າງຄວາມເຂົ້າໃຈໂຄງສ້າງການນຳພາສັງຄົມພາຍໃນຢູ່ໃນບ້ານຢ່າງຈະແຈ້ງແຕ່ທີ່ຈະພົ

[1] ຂໍ້ມູນທຸກອັນໄດ້ມາຈາກເອກະສານຂອງ FAO, ການສົ່ງເສີມພັດທະນາຊົນນະບົດແບບຍືນຍົງ, ເອກະສານທີV, ບົດວຽກງານທີ5

ຈາລະນາ "ຊຸມຊົນ" ຢູ່ໃນບ້ານ ໃຫ້ເປັນກຸ່ມໃດກຸ່ມໜຶ່ງແມ່ນຍັງບໍ່ທັນເໝາະສົມ ການຈະເລີນເຕີບໂຕຫຼາຍປະເພດຂອງລະບົບສັງຄົມແຕ່ລະປະເພດແມ່ນໄດ້ກຳນົດດ້ວຍຫຼາຍໆ ປັດໃຈໂດຍສະເພາະດ້ານໂຄງປະກອບຊົນເຜົ່າ ແລະ ທາງດ້ານຄວາມເປັນຈິງຂອງລະບົບນິເວດ ສິ່ງເຫຼົ່ານີ້ແມ່ນມີຄວາມຈຳເປັນສຳລັບການອອກແບບແຜນງານກະສິກຳ ແລະ ປ່າໄມ້ ແລະ ພັດທະນາຊົນນະບົດ. ມັນມີຄວາມສຳຄັນທີ່ຈະຕ້ອງໄດ້ເຂົ້າໃຈ ຕໍ່ບັນຫາຄວາມເປັນຈິງ ການນຳພາໃນຊົນນະບົດຢູ່ພາຍໃນບ້ານທີ່ເຫັນວ່າຍັງບໍ່ທັນເໝາະສົມທີ່ຈະຖືເອົາ"ຊຸມຊົນ" ຢູ່ໃນບ້ານ ໃຫ້ເປັນກຸ່ມໃດກຸ່ມໜຶ່ງ. ຄວາມໃຫຍ່ໂຕຫຼາຍປະເພດຂອງລະບົບສັງຄົມແມ່ນໄດ້ກຳນົດດ້ວຍຫຼາຍໆ ປັດໃຈເຊັ່ນວ່າກ່ຽວໂຄງປະກອບດ້ານຊົນເຜົ່າ ແລະ ທາງດ້ານຄວາມເປັນຈິງຂອງລະບົບນິເວດ ແລະ ອັນນີ້ແມ່ນມີຄວາມຈຳເປັນໃນການອອກແບບໃນແຜນງານກະສິກຳ ແລະ ປ່າໄມ້ ແລະ ພັດທະນາຊົນນະບົດ.

**(ກັບທີ 1 ການເຮັດໃຫ້ວຽກງານຊົນເຜົ່າຂະຫຍາຍຕົວໄວກ່ຽວກັບການພັດທະນາກະສິກຳແລະ ປ່າໄມ້)**

ຢູ່ໃນເອກະສານການສຶກສາຍຸດທະສາດ ກະສິກຳ ໂດຍກະຊວງກະຊວງກະສິກຳ ແລະປ່າໄມ້ ຮ່ວມກັບທະນາຄານພັດທະນາອາຊີ (ADB/MAF) ໄດ້ຍົກຂຶ້ນບາງບັນຫາທີ່ສຳຄັນຂອງວຽກງານຊົນເຜົ່າທີ່ມີການຂະຫຍາຍຕົວໄວ ໂດຍອີງໃສ່ແຜນການພັດທະນາກະສິກຳ ແລະ ປ່າໄມ້. ມັນຈະຕ້ອງໄດ້ຈົດຈຳໄວ້ວ່າ ບັນຫາເຫຼົ່ານີ້ບໍ່ສາມາດສ້າງເປັນແຜນພັດທະນາເປັນຂະແໜງການຍ່ອຍ , ໄດ້ມີການພິຈາລະນາຢູ່ໃນລະດັບຂັ້ນຕອນຂອງການຈັດຕັ້ງປະຕິບັດ. ບັນຫາເຫຼົ່ານີ້ແມ່ນໄດ້ສັງລວມຕໍ່ໄປນີ້:

(a) ແມ່ນການຫັນໄປສູ່ ກົນໄກເສດຖະກິດການຕະຫຼາດເກືອບໝົດທຸກກຸ່ມໃນເຂດພູດອຍຫ່າງໄກສອກຫຼີກອາດໃຊ້ເວລາຫຼາຍ ຈຶ່ງຈະມີຄວາມເຊື່ອໝັ້ນຂອງເຂົາເຈົ້າ, ໂດຍສະເພາະຜົນດີຈາກການສົ່ງເສີມທີ່ເຮັດກັບເຕັກໂນໂລຊີໃໝ່, ຄວາມປະພຶດ, ວິທີການແກ້ໄຂຕັດສິນບັນຫາ;

(b) ການຄົ້ນຄວ້າຈະຕ້ອງໄດ້ເຮັດໃນລະບົບຄວາມເປັນຈິງຂອງວຽກງານກະສິກຳ ແລະ ປ່າໄມ້ ໂດຍສະເພາະກ່ຽວກັບປະເພດ ຄວາມແຕກຕ່າງຂອງການຖາງປ່າເຮັດໄຮ່ ສະນັ້ນການປັບປຸງທີ່ມີຄວາມໝາຍສຳຄັນ ຈະສາມາດເກີດຂຶ້ນເປັນຈິງ. ສະເໜີໃຫ້ມີການປ່ຽນແປງໃໝ່ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ທີ່ຈະຕ້ອງໄດ້ເຮັດໃຫ້ພໍດີກັບລະບົບຊີວິດການເປັນຢູ່ ທາງດ້ານວຽກງານກະສິກຳ ແລະ ປ່າໄມ້ໃນປັດຈຸບັນ. ເຫັນວ່າການທົດລອງລະດັບຟາມ ຫຼືທັງເຮັດທັງຮຽນໃນນາແມ່ນເປັນຫົວລ້ຽວ ຫົວຕໍ່.

(c) ໃນວຽກງານການສົ່ງເສີມ ຈະຕ້ອງໄດ້ເຮັດແບບສາທິດທົດລອງສະແດງໃຫ້ເຫັນໂດຍສະເພາະຕິດພັນກັບປະເພນີຂອງຮາກຖານ. ຍົກຕົວຢ່າງ, ພະນັກງານສົ່ງເສີມຈະຕ້ອງໄດ້ເຮັດວຽກຮ່ວມກັບກຸ່ມຊົນເຜົ່າຕົ້ນຕໍ ດ້ວຍການວາງເງື່ອນໄຂໄວ້ກ່ອນລ່ວງໜ້າທາງດ້ານພາສາ ແລະ ການຮູ້ຈັກຮີດຄອງປະເພນີທີ່ຂະຫຍາຍຕົວໄວ ຫຼື ພະນັກງານຈາກຫຼາຍກຸ່ມຂອງຊົນເຜົ່າ ຈະຕ້ອງໄດ້ ຈ້າງໃຫ້ເປັນພະນັກງານສົ່ງເສີມ ແລະ

(d) ລະບົບຄວາມຮູ້ຄວາມສາມາດທີ່ຫາຍາກຈະຕ້ອງຢູ່ໃນວົງການປ່ຽນແປງໃໝ່ທາງດ້ານວິທະຍາສາດທີ່ກ້າວໜ້າສຳລັບການແກ້ໄຂບັນຫາ.

ແຫຼ່ງຂໍ້ມູນ: ການສຶກສາຍຸດທະສາດກະສິກຳ ເອກະສານ No 6, ບາງບັນຫາທີ່ສຳຄັນພົວພັນກັບການສຶກສາ ຍຸດທະສາດກະສິກຳ: ລະບົບກະສິກຳເຂດເນີນສູງ/ເຂດສູງຊັນ, ການຍົກຍ້າຍຕັ້ງທີ່ຢູ່ອາໄສໃໝ່ ແລະ ຊົນຊາດ ຊົນເຜົ່າ ເອກະສານ 14.

### 2.6.2 ບັນຫາກ່ຽວກັບບົດບາດຍິງຊາຍ

ແມ່ຍິງມີບົດບາດສຳຄັນຕໍ່ເສດຖະກິດ, ໂດຍສະເພາະໃນຂະແໜງການກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ຊຸກຍູ້ໄປຕາມທັດສັງຄົມນິຍົມໃນໄລຍະເບື້ອງຕົ້ນ. ປຸກລະດົມການເຂົ້າຮ່ວມຂອງແມ່ຍິງຢ່າງກວ້າງຂວາງໃນການຜະລິດສະບຽງອາຫານ, ການຂະຫຍາຍພັນສັດ ແລະ ການປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນທຳມະຊາດ. ໃນນັ້ນເຮັດວຽກງານກະສິກຳ ແລະ ການປະມົງ ມີຜູ້ຍິງປະກອບສ່ວນ 54%, ໃນຂະນະດຽວກັນຢູ່ໃນວຽກງານອື່ນໆກໍແມ່ນ ຜູ້ຍິງ[2] ປະກອບສ່ວນ 52%. ເຂົາເຈົ້າໄດ້ອອກແຮງງານເພື່ອເຮັດວຽກເຫຼົ່ານັ້ນເຊັ່ນ: ການອານາໄມ ແລະ ກະກຽມດິນ, ການປູກເຂົ້າ, ໃສ່ປຸຍ ແລະ ໃສ່ຝຸ່ນເຄາະໃນທົ່ງນາ ແລະ ການປະກອບສ່ວນເຮັດວຽກງານກໍ່ສ້າງຊົນລະປະທານ ແລະ ອ່າງເກັບນ້ຳ. ໃນວຽກງານຍ່ອຍຂອງການປູກເຂົ້າ, ແມ່ຍິງມີຄວາມຮັບຜິດຊອບຕໍ່ການດຳນາ ແລະ ເສຍຫຍ້ານາ ຈົນເຖິງການຂົນຍ້າຍເຂົ້າໄປຍັງບ່ອນຟາດ. ແມ່ຍິງມີຄວາມຮັບຜິດຊອບສຳລັບການເກືອອາຫານສັດ ແລະ ການລ້ຽງສັດຂະໜາດນ້ອຍ ເຊັ່ນ: ໝູ ແລະ ເປັດໄກ່. ໃນວຽກງານການປູກພືດ ແລະ ໄມ້ໃຫ້ໝາກ ເຂົາເຈົ້າມີຄວາມຮັບຜິດຊອບຕໍ່ການປູກຜັກເໝືອນກັນ. ໃນຂະນະດຽວກັນຢູ່ໃນວຽກງານປ່າໄມ້ເຂົາເຈົ້າມີຄວາມຮັບຜິດຊອບໃນການໄປຊອກຫາເຄື່ອງປ່າຂອງດົງ, ໝາຍຄວາມວ່າ ເພື່ອນຳມາບໍລິໂພກພາຍໃນຄອບຄົວ, ຊຶ່ງມີ: ຫາໜໍ່ໄມ້, ເກັບເຫັດ, ເກັບຜັກປ່າ, ເກັບໝາກໄມ້ປ່າ, ຢາພື້ນເມືອງ ແລະ ລ່າສັດຂະໜາດນ້ອຍ. ໃນຈຳນວນຂອງນັກສົ່ງເສີມກະສິກຳ ແລະ ຊົນລະປະທານລົງໄປເຮັດວຽກພາກສະໜາມແມ່ນມີແມ່ຍິງຈຳນວນໜຶ່ງທີ່ໄປເຮັດວຽກຮ່ວມປະສົມປະສານກັບຜູ້ຊາຍ. ອີກໃນກໍລະນີໜຶ່ງແມ່ຍິງໄດ້ອອກໄປເຮັດວຽກທາງນອກຫ່າງໄກຈາກຄອບຄົວ.

ແມ່ຍິງລາວຊົນເຜົ່າຕ່າງໆ ມີຄວາມຮູ້ ແລະ ຄວາມສຳນານດ້ານສິລະກຳພື້ນເມືອງເປັນພິເສດທີ່ມີການຮັບຮູ້ໂດຍທົ່ວເຖິງ, ໂດຍສະເພາະ ດ້ານການທໍໄໝ, ຝ້າຍ, ຈັດສານ ແລະ ການຕ່ຳແຜ່ນ ທີ່ເປັນລາຍຮັບເສີມອັນສຳຄັນຂອງຄອບຄົວ ມີການຮັບຮູ້ວ່າ ແມ່ຍິງມີໜ້າທີ່ອັນສຳຄັນໃນການຂຸດຄົ້ນ ແລະ ນຳໃຊ້ເຄື່ອງປ່າຂອງດົງໃຫ້ເປັນປະໂຫຍດ ແລະ ແນວຄວາມຄິດ ແລະ ຄຳເຫັນຂອງແມ່ຍິງ ໄດ້ຖືກພິຈາລະນາບັນຈຸເຂົ້າໃນກິດຈະກຳພັດທະນາທີ່ລວມມີການປົກປັກຮັກສາປ່າໄມ້ ແລະ ການວາງແຜນນຳໃຊ້ທີ່ດິນ.

ໃນປະຈຸບັນຍັງບໍ່ທັນມີໂຄງການທີ່ເລັ່ງໃສ່ເປົ້າໝາຍຍົກລະດັບແມ່ຍິງໃນຍຸດທະສາດການພັດທະນາທີ່ເລັ່ງໃສ່ ເປົ້າໝາຍຍົກລະດັບແມ່ຍິງ ໃນຍຸດທະສາດ ການພັດທະນາກະສະກຳຂອງ ລັດທະບານ[3] , ລັດຖະບານມີຄວາມຂະຫຍັນ ໃນການສະໜອງໂຄງສ້າງດ້ານນະໂຍບາຍ ເພື່ອຊຸກຍູ້ໜ້າທີ່ ແລະ ຜົນປະໂຫຍດ ຂອງແມ່ຍິງໃນການພັດທະນາ.ລັດທະທຳ

[2] ອົງການ FAO ( 1999 ) ການສົ່ງເສີມພັດທະນາຊົນນະບົດແບບຍືນຍົງ,ທວນຄືນສະພາບຂອງຂະແໜງຊົນນະບົດ,ເອກະສານທີIV ບົດວຽກງານທີ6

[3] ຍຸດທະສາດວິໄສທັດ 2020 ຂອງຂະແໜງກະສິກຳບໍ່ມີວຽກງານບົດບາດຍິງຊາຍ

ມະນູນປີ 1991 ໄດ້ຮັບປະກັນໃຫ້ສິດທຽບເທົ່າກັນລະຫວ່າງຜູ້ຍິງ ແລະ ຜູ້ຊາຍດ້ານວຽກງານການເມືອງ, ສັງຄົມ, ການໂອນມູນ, ແຮງງານ, ຄອບຄົວ ແລະ ການເລືອກຕັ້ງ.

ໄດ້ມີໂຄງການຜູ້ໃຫ້ທຶນສະໜັບສະໜູນ ແລະ ໂຄງການຍ່ອຍຈຳນວນໜຶ່ງທີ່ໄດ້ຮັບການຈັດຕັ້ງປະຕິບັດ ຊຶ່ງໄດ້ອອກແບບສະເພາະເພື່ອສະໜັບສະໜູນວຽກງານການພັດທາແມ່ຍິງ. ການຈັດຕັ້ງປະຕິບັດໂຄງການເຫຼົ່ານີ້ແມ່ນຢູ່ໃນລະດັບຂັ້ນຮາກຖານເປັນສ່ວນໃຫຍ່ ໂດຍໄດ້ຮັບການຊ່ວຍເຫຼືອລ້າຈາກອົງຈັດຕັ້ງທີ່ບໍ່ແມ່ນລັດຖະບານຂອງຕ່າງປະເທດ. ອົງການຈັດຕັ້ງສະຫະພັນແມ່ຍິງລາວ ທີ່ເປັນຮູບປະທຳ ຢູ່ທ້ອງຖິ່ນແມ່ນເປັນຜູ້ຮັບຜິດຊອບ ການຈັດຕັ້ງປະຕິບັດຕໍ່ການຊ່ວຍເຫຼືອຈາກອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານເຫຼົ່ານີ້. ອົງການຈັດຕັ້ງສະຫະພັນແມ່ຍິງມີສະມາຊິກປະມານ 25% ຂອງເພດຍິງທີ່ເປັນພົນລະ ເມືອງໃນປະເທດ. ໄດ້ມີສອງຂໍ້ຈຳກັດຕໍ່ການສ້າງນະໂຍບາຍ ຫຼື ແຜນງານສະເພາະແຫ່ງຊາດຂອງບົດບາດຍິງຊາຍຄື:

- ຂາດຂໍ້ມູນທີ່ໜ້າເຊື່ອຖືກ່ຽວກັບບົດບາດຍິງຊາຍ
- ຂາດການຈັດຕັ້ງຂອງລັດຖະບານ ທີ່ຮັບຜິດຊອບເຮັດວຽກກ່ຽວກັບການເຂົ້າຮ່ວມສົ່ງເສີມຄວາມສະເໝີພາບບົດບາດຍິງຊາຍ.

ໃນເມື່ອສະຫະພັນຍິງລາວເປັນການຈັດຕັ້ງມະຫາຊົນຂອງພັກ,ລັດຖະບານຈະສ້າງຕັ້ງຄະນະກຳມະການລະດັບຊາດ ພາຍໃຕ້ຫ້ອງການ ນາຍົກລັດຖະມົນຕີ ທີ່ຈະມີການຮັບຜິດຊອບໃນການສົ່ງເສີມ ຄວາມສະເໝີພາບດ້ານຍິງ, ດ້ານຊາຍໃນທ້າຍປີ 2001.

## 2.6.3 ການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່

ຄວາມປະສົງຂອງແຜນງານຢຸດຕິການຖາງປ່າເຮັດໄຮ່ເພື່ອປ້ອງກັນປ່າໄມ້ ແລະ ພື້ນຖານຊັບພະຍາກອນທຳມະຊາດ. ໂດຍການຕັ້ງພື້ນຖານບ້ານໃໝ່ບ້ານໃໝ່ສຳລັບຄອບຄົວທີ່ດຳເນີນການຖາງປ່າເຮັດໄຮ່. ນັບແຕ່ປີ 1994, ລັດຖະບານໄດ້ກຳນົດເຂດຈຸດສຸມເພື່ອສົ່ງເສີມການພັດທະນາຊົນນະບົດ. ໃນປັດຈຸບັນຍັງມີບ້ານຈຳນວນໜຶ່ງຢູ່ໃນຖິ່ນຖານເດີມ ແລະ ໄດ້ເອົາປະສົມປະສານ ເຂົ້າກັບການພັດທະນາເຂດຈຸດສຸມ ແລະ ມີບ້ານຈຳນວນໜຶ່ງໄດ້ລະດົມໃຫ້ເຄື່ອນຍ້າຍໄປຢູ່ເຂດຈຸດສຸມ ຍ້ອນເຫດຜົນທາງດ້ານການເງິນ, ມັນໄດ້ມີການໃຊ້ຈ່າຍການຍົກຍ້າຍຊາວບ້ານ ໜ້ອຍກວ່າ ການຊ່ວຍສ້າງພື້ນຖານໂຄງລ່າງໃຫ້ເຂົາເຈົ້າໃນເຂດຫ່າງໄກສອກຫຼີກ. ຈະຕ້ອງໄດ້ຈົດຈຳໄວ້ວ່າ ສິ່ງເລົ່ານີ້ພົວພັນຊະນິດແໜ້ນ ກັບບັນຫາການມອບດິນ-ມອບປ່າ, ນັບແຕ່ມີການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່ມານີ້ໄດ້ມີຜົນດີຕໍ່ການເຄື່ອນຍ້າຍ ປະຊາຊົນຈາກພູດອຍ ລົງມາຢູ່ສູ່ທົ່ງພຽງ, ຈາກເຂດເຄີຍທີ່ມີພົນລະເມືອງນ້ອຍ ກາຍເປັນເຂດທີ່ມີພົນລະເມືອງໜາແໜ້ນ ທີ່ອາດຈະສ້າງບັນຫາເກີດຄວາມກົດດັນໃສ່ການນຳໃຊ້ດິນຢູ່ໃນຫຼາຍໆ ເຂດ.

ໃນເວລາດຽວກັນອີກກໍລະນີໜຶ່ງການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່, ໂດຍທີ່ອາສາສະໝັກ ຫຼື ໂດຍບໍ່ປາດຖະໜາກໍ່ຕາມ ການປະກອບເນື້ອທີ່ດິນທຳການຜະລິດກະສິກຳ (ເຮັດນາ) – ໄດ້ເປັນປັດໃຈທີ່ຊຸກຍູ້ສຳຄັນຖິ່ນຖານບ້ານເດີມສຳລັບການຍົກຍ້າຍ. ໃນທິດສະດີນີ້ຈະເໜັ້ນໃສ່ການຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນໂດຍນຳໃຊ້ ການຜະລິດກະສິກຳເພີ່ມຂຶ້ນ ຫຼາຍກວ່າແງ່ການປ້ອງກັນປ່າໄມ້. ຫຼັກການພື້ນຖານແມ່ນຈະຕ້ອງໄດ້ເພີ່ມທະວີການຈັດຕັ້ງປະຕິບັດລະບົບກະສິກຳ. ການຊີ້ບອກວ່າການຖາງປ່າເຮັດໄຮ່ຈະບໍ່ສາມາດລົບລ້າງໄດ້ຢ່າງສິ້ນເຊີງໃນຊຸມປີຕໍ່ໜ້ານີ້, ແຕ່ວ່າຈະໄດ້ຫຼຸດລົງ ແລະ ເຮັດໃຫ້ຍືນນານຫຼາຍຂຶ້ນ. ລະບົບນີ້ຈະຕ້ອງໄດ້ເຮັດຢ່າງກວ້າງຂວາງຢູ່ພື້ນຖານໂດຍຄວາມຍິນຍອມຂອງຄອບຄົວ ແລະ ຊຸມຊົນ.

ລັດຖະບານຍັງບໍ່ທັນໄດ້ມີໂຄງສ້າງນະໂຍບາຍທາງດ້ານກົດໝາຍກ່ຽວກັບການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່, ຊຶ່ງໃນກໍລະນີບ່ອນທີ່ມີກິດຈະການທາງດ້ານເສດຖະກິດປະກົດຕົວມີຜົນດີໃນການອາສາສະໝັກຍົກຍ້າຍໄປຕັ້ງຖິ່ນຖານບ້ານໃໝ່ ໝາຍຄວາມວ່າການພັດທະນາ ກະສິກຳ ແລະ ປ່າໄມ້ ໂດຍພາກສ່ວນເອກະຊົນ, ເຂົາເຈົ້າໄດ້ມີຄວາມຮັບຜິດຊອບວ່າຄວາມກ່ຽວຂ້ອງກັບຊາວບ້ານແມ່ນການທາບທາມລ່ວງໜ້າ ເຖິງຜົນທົດແທນທີ່ເໝາະສົມທີ່ເຂົາຈະໄດ້ຮັບໃນອານາຄົດ. ເຫັນວ່າການສ້າງຕັ້ງໂຄງສ້າງດ້ານກົດໝາຍ ແລະ ການສ້າງຄຳສັ່ງແນະນຳຂອງລັດຖະບານສຳລັບການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່ທີ່ເຫັນວ່າຈະຕ້ອງໄດ້ປະຕິບັດ.

**ກັບທີ 2 ການຍົກຍ້າຍຖິ່ນຖານໃໝ່ໃນເມືອງຫີນບູນ ແຂວງຄຳມ່ວນ**

ໃນໄລຍະເວລາການກໍ່ສ້າງເຂື່ອນໄຟຟ້ານ້ຳເທີນຫີນບູນ ໃນແຂວງຄຳມ່ວນໃນປີ 1998 ບ້ານນ້ຳສະບານໄດ້ຖືກຍົກຍ້າຍໄປຕັ້ງຖິ່ນຖານເຂົ້າໃນເຂດຈຸດສຸມຄູນ-ຄຳກອງລໍ ທີ່ນອນຢູ່ໃນເຂດຄຸ້ມຄອງເຂື່ອນໄຟຟ້ານ້ຳເທີນຫີນບູນ.

ໄດ້ມີການປຶກສາຫາລືກັບປະຊາຊົນໃນບ້ານກ່ຽວກັບການຍົກຍ້າຍສ້າງຕັ້ງຖິ່ນຖານໃໝ່ ເພາະວ່າເປັນບ່ອນທີ່ໄດ້ຮັບຜົນກະທົບຈາກນ້ຳຖ້ວມ ເຂດເນື້ອທີ່ເຮັດການຜະລິດປູກຝັງ ຍັງເຫຼືອຢູ່ແຕ່ເຂດທີ່ຢູ່ອາໄສ. ມັນແມ່ນເປັນສິ່ງທີ່ງ່າຍດາຍສຳລັບຄົນໄວໜຸ່ມທີ່ຈະຍົກຍ້າຍໄປຍັງສະຖານທີ່ໃໝ່ ຊຶ່ງຫ່າງໄກຈາກບ້ານເດີມປະມານ 1 ກິໂລແມດຫຼາຍກວ່າ, ປະຊາຊົນຜູ້ເຖົ້າແກ່ຢາກຢູ່ບ່ອນເກົ່າ ບໍ່ຢາກຍົກຍ້າຍອອກຈາກຖິ່ນຖານບ້ານເດີມ. ໄດ້ມີການຈັດແບ່ງຄອບຄົວ, ບາງຄອບຄົວທີ່ມີສະມາຊິກຜູ້ເຖົ້າແກ່ອາໄສຢູ່ໃນເຮືອນເກົ່າເດີມ ແລະ ລູກກັບຫຼານເຂົາເຈົ້າຍົກຍ້າຍໄປຢູ່ບ້ານໃໝ່ ບ່ອນທີ່ໄດ້ມີການກໍ່ສ້າງໂຮງຮຽນປະຖົມໃຫ້ໂດຍເຈົ້າໜ້າທີ່ໄຟຟ້າ. ລູກໄດ້ຫຼຽວໄປຢາມພໍ່ແມ່ຢູ່ເຮືອນເກົ່າບ້ານເດີມ. ຜູ້ເຖົ້າແກ່ໄດ້ເວົ້າວ່າເຂົາເຈົ້າບໍ່ສາມາດຍົກຍ້າຍໄດ້ ຍ້ອນວ່າມີຄວາມຕ້ອງການເຝົ້າດູແລຮັກສາຕົ້ນໄມ້ກິນໝາກຂອງເຂົາເຈົ້າ. ອັນໜຶ່ງທີ່ເປັນສິ່ງຈູງໃຈສຳລັບຄົນລຸ້ນໜຸ່ມທີ່ຍົກຍ້າຍໄປຕັ້ງຖິ່ນຖານໃໝ່ແມ່ນມີການສະໜອງໄຟຟ້າໃຫ້ໂດຍເຈົ້າໜ້າທີ່ໄຟຟ້າ ວ່າຈະຕິດຕັ້ງໄຟຟ້າໃຫ້ບ້ານທີ່ຕັ້ງໃໝ່. ແຕ່ການຕອບສະໜອງໄຟຟ້າແມ່ນຈະຕ້ອງໄດ້ເຮັດໃຫ້ສຳເລັດ. ຊາວບ້ານໄດ້ໄປສາກໝໍ້ໄຟຂອງເຂົາເຈົ້າຢູ່ບ່ອນທີ່ມີໄຟຟ້າຢູ່ໃກ້. ເຖິງຢ່າງໃດກໍ່ຕາມບ້ານນ້ຳສະບານ ແມ່ນບ້ານໜຶ່ງທີ່ໄດ້ມີການໃຫ້ສິດພິເສດໃນຈຳນວນຂອງບ້ານທັງໝົດ ຂອງເຂດຈຸດສຸມ ຄຳມ່ວນ-ກອງລໍທີ່ມີການສະເໜີໂດຍເຈົ້າໜ້າທີ່ໄຟຟ້າ. ດຽວນີ້ແມ່ນມີການບໍລິການດ້ານສຸກຂະພາບ ແລະ ກໍໄດ້ມີພະນັກງານແພດໝໍຈາກສູນຮັກສາສຸກຂະພາບໄຟຟ້າລົງໄປຢ້ຽມຢາມຢ່າງເປັນປະຈຳ. ຊາວບ້ານຜູ້ໜຶ່ງໄດ້ເວົ້າວ່າລາວໄດ້ສືບຕໍ່ໄປຢ້ຽມຢາມພໍ່ແມ່ຂອງລາວຜູ້ທີ່ມີອາຍຸສູງຈົນກວ່າວ່າເພິ່ນຈະຍິນຍອມມາຢູ່ກັບຄອບຄົວຂອງລາວໃນສະຖານທີ່ຕັ້ງໃໝ່. ຄົນໄວໜຸ່ມແມ່ນມີຄວາມຮັບຮູ້ໄວຫຼາຍຕໍ່ການຍົກຍ້າຍ ແລະ ມີຄວາມເໝາະສົມຫຼາຍ ເຖິງວ່າຈະມີການປ່ຽນແປງແບບແຜນການດຳລົງຊີວິດຈາກແບບດັ້ງເດີມ, ໃນຂະນະດຽວກັນປະຊາຊົນຜູ້ເຖົ້າແກ່ຍັງມີຄວາມຈັບໃຈເປັນຫ່ວງເປັນໄຍກັບວິທີການດຳລົງຊີວິດ ແລະ ຮີດຄອງປະເພນີອັນມີຄຸນຄ່າມະຫາສານຂອງເຂົາເຈົ້າ.

ແຫຼ່ງຂໍ້ມູນ: ສຳພາດຢູ່ບ້ານນ້ຳສະບານ.

## 2.6.4 ການລົບລ້າງຄວາມທຸກຈົນ

ຄວາມທຸກຈົນແມ່ນວັດແທກດ້ວຍລາຍຮັບ ຫຼື ການບໍລິໂພກ. ຖ້າຫາກວັດແທກດ້ວຍລາຍຮັບຄວາມທຸກຈົນແມ່ນວັດແທກເປັນເປີເຊັນຂອງບຸກຄົນໃນໝູ່ປະຊາຊົນຜູ້ທີ່ມີລາຍຮັບຕຳ່ໃນຂີດທີ່ຈະພົ້ນອອກຈາກຄວາມທຸກຈົນ. ຖ້າວັດແທກດ້ວຍ ການບໍລິໂພກຕໍ່ຫົວຄົນແມ່ນການບໍລິໂພກສະບຽງອາຫານ ແລະ ລາຍການທີ່ບໍ່ແມ່ນສະບຽງອາຫານທີ່ໄດ້ນຳໃຊ້ ຕໍ່ຂີດຄວາມທຸກຈົນທີ່ໄດ້ປະກອບສ້າງຂຶ້ນດ້ວຍວິທີການນຳໃຊ້ຄວາມຕ້ອງການທາດອາຫານໂດຍພື້ນຖານ. ຄວາມທຸກຈົນວັດແທກດ້ວຍການບໍລິໂພກແມ່ນມີຈຸດດີຂອງການສະເໜີຜົນຄວາມໝັ້ນຄົງຫຼາຍກວ່າດ້ວຍວິທີການລາຍຮັບ ເພາະວ່າໃນແຕ່ລະປີ ມີຄວາມແຕກຕ່າງນ້ອຍ ແລະ ກໍ່ມີຄວາມເໝາະສົມຫຼາຍເໝືອນກັນ. ຂໍ້ມູນເກັບກຳໃນສົກປີ 1992-93 ວັດແທກດ້ວຍວິທີການບໍລິໂພກມີ 45% ຂອງປະຊາຊົນລາວໄດ້ມີຊີວິດຢູ່ໃນຄວາມທຸກຈົນ, ໃນຄະນະທີ່ ສົກປີ 1997-98 ເປີເຊັນຂອງຜູ້ທຸກຈົນລົດລົງເຖິງລະດັບ 38,6%.

ປະເພດຄວາມທຸກຈົນມີຄວາມແຕກຕ່າງຫຼາຍລະຫວ່າງແຂວງ ແລະ ເຂດແຄ້ວນ. ຢູ່ພາກເໜືອມີເປີເຊັນສູງຂອງຜູ້ທຸກຍາກເຖິງ 58,4% ໃນສົກປີ 1992-93 ແລະ ຫຼຸດລົງໃນລະດັບ 52,5 ໃນສົກປີ 1997-98. ໃນການປຽບທຽບຄວາມແຕກຕ່າງຜົນຂອງຄວາມທຸກຈົນຢູ່ໃນກຳແພງນະຄອນວຽງຈັນ ແມ່ນມີຕ່ຳທີ່ສຸດ: 24,4 ໃນສົກປີ 1992-93 ແລະ ຫຼຸດລົງໃນລະດັບ 12,2% ໃນສົກປີ 1997-98. ມັນໄດ້ມີຄວາມແຕກຕ່າງກັນລະຫວ່າງຄວາມທຸກຈົນຂອງແຂວງຕໍ່ແຂວງເໝືອນກັນ. ແຂວງຫົວພັນໃນພາກເໜືອແມ່ນໄດ້ກຳນົດໃຫ້ເປັນແຂວງທີ່ທຸກຈົນຫຼາຍກວ່າໝູ່ໂດຍມີ 74,6% ໃຊ້ຊີວິດຢູ່ໃນຄວາມທຸກຈົນ.

ຕາຕະລາງ 2.11 ເປີເຊັນຂອງຜູ້ທຸກຈົນໃນເຂດແຄ້ວນ ແລະ ແຂວງ ໃນສົກປີ 1992-93 ແລະ ໃນສົກປີ 1997-98

| ແຂວງ/ເຂດແຄ້ວນ | 1992-93 | 1997-98 | ອັດຕາເຕີບໂຕ/ປີ |
|---|---|---|---|
| ກຳແພງນະຄອນວຽງຈັນ | 24,4 | 12,2 | -13,9 |
| ພາກເໜືອ | 58,4 | 52,5 | -2,1 |
| ຜົ້ງສາລີ | 68,7 | 64,2 | -1,3 |
| ຫຼວງນ້ຳທາ | 60,3 | 57,5 | -1,0 |
| ອຸດົມໄຊ | 51,1 | 73,2 | 7,2 |
| ບໍ່ແກ້ວ | 63,5 | 37,4 | -1,6 |
| ຫຼວງພະບາງ | 62,7 | 49,4 | -4,8 |
| ຫົວພັນ | 78,4 | 74,6 | -1,0 |
| ໄຊຍະບູລີ | 30,1 | 21,2 | -7,0 |
| ພາກກາງ | 39,5 | 34,9 | -2,5 |
| ຊຽງຂວາງ | 57,3 | 34,9 | -9,9 |
| ວຽງຈັນ | 28,1 | 24,3 | -2,9 |

| | | | |
|---|---|---|---|
| ບໍລິຄໍາໄຊ | 10,6 | 25,8 | 17,8 |
| ຄໍາມ່ວນ | 43,7 | 41,6 | -1,0 |
| ສະຫວັນນະເຂດ | 45,7 | 37,1 | -4,2 |
| ເຂດພິເສດ ໄຊສົມບູນ | | 55,0 | |
| ພາກໃຕ້ | 45,9 | 38,4 | -3,6 |
| ສາລະວັນ | 36,7 | 39,6 | 1,5 |
| ເຊກອງ | 65,9 | 45,7 | -7,3 |
| ຈໍາປາສັກ | 43,6 | 35,6 | -4,1 |
| ອັດຕະປື | 42,2 | 45,3 | -9,3 |
| ທົ່ວປະເທດ | 45,0 | 38,6 | -3,1 |

ໃນ 18 ແຂວງ, ຫ້າແຂວງທີ່ມີຜົນຄວາມທຸກຈົນຫຼາຍກວ່າຫ້າສິບເປີເຊັນໃນສົກປີ 1997-98. ໃນຫ້າແຂວງນີ້, ສີ່ແຂວງແມ່ນນອນຢູ່ໃນເຂດພາກເໜືອຄື: ແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ ແລະ ຫົວພັນ. ຜົນຂອງຄວາມທຸກຈົນໄດ້ເພີ້ມຂຶ້ນໃນສາມແຂວງ ໄລຍະ 2 ປີ ຄື: ແຂວງອຸດົມໄຊ, ບໍລິຄໍາໄຊ ແລະ ສາລະວັນ.

ມີຄວາມແຕກຕ່າງກັນລະຫວ່າງລະດັບຄວາມທຸກຈົນເຂດຊົນນະບົດ-ເຂດຕົວເມືອງຫຼາຍ. ໃນສົກປີ 1997-98 ສໍາລັບເຂດຕົວເມືອງຜົນຄວາມທຸກຈົນມີ 26,9% ໃນຂະນະດຽວກັນສໍາລັບໃນເຂດຊົນນະບົດແມ່ນມີ 41,0% ມີຄວາມແຕກໂຕນກັນຫຼາຍໃນເປີເຊັນຂອງຜູ້ທຸກຈົນລະຫວ່າງເຂດຊົນນະບົດ ແລະ ຕົວເມືອງເກີດຂຶ້ນຢູ່ລະຫວ່າງແຂວງ ແລະ ເຂດແຄ້ວນ.

ຕາຕະລາງ 2.12 ຜົນຂອງຄວາມທຸກຈົນໃນແຂວງ ແລະ ເຂດຊົນນະບົດ ແລະ ຕົວເມືອງ

| ແຂວງ | ເຂດຕົວເມືອງ | | ອັດຕາ% ເຕີບຕົວ | ເຂດຊົນນະບົດ | | ອັດຕາ% ເຕີບຕົວ |
|---|---|---|---|---|---|---|
| | 1992-93 | 1997-98 | ເຕີບໂຕ/ປີ | 1992-93 | 1997-98 | ເຕີບໂຕ/ປີ |
| ກໍາແພງນະຄອນວຽງຈັນ | 22,5 | 16,7 | -5,9 | 30,0 | 4,5 | -38,2 |
| ພາກເໜືອ | 48,9 | 43,3 | -2,5 | 60,4 | 53,5 | -2,4 |
| ພາກກາງ | 37,4 | 27,6 | -6,1 | 39,9 | 35,9 | 22,1 |
| ພາກໃຕ້ | 27,6 | 35,8 | 5,2 | 49,6 | 38,7 | -5,0 |
| ໝົດທົ່ວປະເທດ | 33,1 | 26,8 | -4,2 | 48,6 | 41,0 | -3,4 |

ການປະເມີນຄວາມທຸກຈົນແບບເລັ່ງລັດ ແລະ ການສໍາຫຼວດການໃຊ້ຈ່າຍບໍລິໂພກທີ່ໄດ້ດໍາ

ເມີນໃນປີ 1997 ເຮັດໃຫ້ມີຄວາມໄວ້ກຳນົດລັກຂະນະຂອງຊາວຊົນນະບົດຜູ້ທຸກຍາກ. ຈຳນວນຕົວເລກທີ່ສຳຄັນຂອງຄອບຄົວທີ່ຜະລິດເຂົ້າບໍ່ກຸ້ມກິນສຳລັບເຂົາເຈົ້າເອງໝົດປີ ແລະ ມີ ຫຼາຍກວ່າ 80% ຂອງໝູ່ບ້ານທັງໝົດມີການ ລາຍງານວ່າພືດຫຼັກສ່ວນຫຼາຍແມ່ນເອົາໄວ ກິນ ບໍ່ໄດ້ຂາຍ. ລະດັດມີເຂົ້າກິນພຽງພໍກຸ້ມຕົນເອງຫຼຸດພົ້ນອອກຈາກຄວາມທຸກຈົນ. ການເຮັດກິດຈະກຳ ການຜະລິດກະສິກຳ ແມ່ນເປັນປັດໃຈທີ່ສຳຄັນ ທີ່ຈະຕ້ອງໄດ້ເປັນການເພີ້ມລາຍຮັບຂອງຄອບຄົວ. ປະມານ 20 % ຂອງຄອບຄົວຊາວຊົນນະບົດມີການເພີ້ມລາຍຮັບຈາກການເຮັດກະສິກຳຂອງເຂົາເຈົ້າດ້ວຍແຫຼ່ງຕ່າງໆ ຂອງການເຮັດກະສິກຳເຊັ່ນ: ທັດຖະກຳ ຫຼື ເຄື່ອງປ່າຂອງດົງເພື່ອສາມາດຕອບສະໜອງຄວາມຕ້ອງການສະບຽງອາຫານຂອງເຂົາເຈົ້າໄດ້. ຄອບຄົວທີ່ຂາດສະບຽງອາຫານຍ້ອນປັດໃຈນຳເຂົ້າຕ່ຳ ບ່ອນທີ່ມີຊົນລະປະທານມີນ້ອຍ ຫຼື ບໍ່ມີເລີຍ. ການປູກພືດມີໜ້ອຍບໍ່ພຽງພໍກັບຄວາມຕ້ອງການ ໂດຍການຖືກຳມະສິດທີ່ດິນກະສິກຳສະເລ່ຍ 1,4 ເຮັກຕາ. ເຫດຜົນສຳລັບຜົນຜະລິດຕ່ຳທີ່ໄດ້ເອົາຮວມເຂົ້າກັບປັດໃຈຄຄວາມຕ້ອງການ ແລະ ການຕອບສະໜອງ. ຂາດດິນທີ່ເໝາະສົມໃນການປູກພືດ (ທັງສອງລະບົບ: ທົ່ງນາ ແລະ ພື້ນໄຮ່) ພະຍາດສັດລ້ຽງ, ສຸກຂະພາບຕ່ຳ, ຕ້ອງການຈ້າງແຮງງານ ແລະ ຂາດຄວາມຮູ້ຄວາມສາມາດ ແລະ ຄວາມຊຳນານດ້ານວິຊາການ, ການເຂົ້າເຖິງຕິດຕໍ່ພົວພັນ ( ໂດຍສະເພາະທົນທາງ ) ແລະ ດ້ອຍທີ່ຢູ່ອາໃສ ແມ່ນໄດ້ຕົກຢູ່ໃນຄວາມທຸກຈົນ. ການທີ່ໄດ້ມີທຶນ ແລະ ຂາດການໃຫ້ສິນເຊື່ອສຳລັບຄາດໄຖນາ ແມ່ນໄດ້ກຳນົດໄວ້ວ່າເປັນບັນຫາທີ່ຕົ້ນຕໍທີ່ຕ້ອງການ ຕາມ ມາດ້ວຍການໃຫ້ສິນເຊື່ອສຳລັບກິດຈະກຳປ່າໄມ້. ຂາດການໃຫ້ບໍລິການສິນເຊື່ອ ລວມເຖິງການຂາດຄວາມເຊື່ອໝັ້ນກ່ຽວກັບວິທີການໃຫ້ກູ້ຢືມສຳລັບໜ່ວຍງານປ່ອຍສິນເຊື່ອ ທີ່ໄດ້ເຮັດໃຫ້ເປັນປັດໃຈທີ່ສຳຄັນສຳລັບຜົນຜະລິດຕ່ຳ. ໃນຄະນະດຽວກັນການບໍລິການດ້ານການສົ່ງເສີມກໍສາມາດມີຄວາມເປັນໄປໄດ້, ປະລິມານຂອງການບໍລິການ ແມ່ນບໍ່ໄດ້ກ່ຽວຂ້ອງກັນດີ, ໃນເວລາລົງໄປຢ້ຽມຢາມເປົ້າໝາຍການຜະລິດແມ່ນຍັງຈະໄດ້ຊຸກຍູ້ກວດກາຕິດຕາມ.

ການປະເມີນຄວາມທຸກຍາກແບບເລັ່ງລັດຂອງປີ 1997 ສະແດງໃຫ້ເຫັນວ່າເປັນທີ່ຍອມຮັບຢ່າງກວ້າງຂວາງໂດຍຊາວກະສິກອນວ່າການໃຫ້ຄວາມສະດວກຕໍ່ເຂົ້າຫາຜູ້ທີ່ທຸກຈົນທີ່ສຸດໃນການບໍລິການສົ່ງເສີມກະສິກຳຈະຕ້ອງໄດ້ແບກຫາບຢ່າງໜັກໜ່ວງຕໍ່ຜົນກະທົບດ້ານສັງຄົມ ຂອງການປ່ຽນແປງທາງດ້ານກະສິກຳ ແລະ ທັນເປັນທັນສະໄໝ ແລະ ຕາມມາດ້ວຍການລົບລ້າງຄວາມທຸກຈົນ. ອີກດ້ານໜຶ່ງຊາວກະສິກອນລາວສ່ວນຫາຍບໍ່ນຳໃຊ້ປັດໃຈນຳເຂົ້າທີ່ທັນສະໄໝ ເຊັ່ນວ່າ: ປຸຍ ແລະ ຢາປາບສັດຕູພືດ. ບັນຫານີ້ແມ່ນພົວພັນກັນໃນລະດັບທີ່ຕ່ຳທາງດ້ານການຕະຫຼາດ -50% ຂອງບ້ານໃນ ສປປ ລາວ ບໍ່ມີຕະຫຼາດຫຍັງໝົດສຳລັບພືດຫຼັກສານຊະນິດຂອງເຂົາເຈົ້າ.

ນະໂຍບາຍທີ່ສຳຄັນສ່ວນຫຼາຍແມ່ນພົວພັນກັບຈຸດປະສົງຂອງລັດຖະບານໂດຍທົ່ວໄປ ກ່ຽວ

ກັບຍຸດທະສາດພັດທະນາກະສິກຳ ແມ່ນລຶບລ້າງຄວາມທຸກຈົນເຂດຊົນນະບົດ ແລະ ພັດທະນາການຄ້ຳປະກັນສະບຽງອາຫານຂອງຄອບຄົວ. ກ່ຽວກັບບັນຫານີ້ການວິເຄາະສຶກສາຄວາມທຸກຈົນຂອງທະນາຄານໂລກສະແດງໃຫ້ເຫັນວ່າ ຈຸດສູງສຸດຂອງການສຶກສາຂອງຫົວໜ້າຄອບຄົວ, ຜົນຂອງຄວາມທຸກຈົນຕ່ຳຫຼຸດລົງດ້ວຍອາຍຸຂອງຫົວໜ້າຄອບຄົວ ແລະ ຄວາມທຸກຈົນ ຂອງຄົນໃນຄອບຄົວ ທີ່ຜູ້ຍິງເປັນຫົວໜ້າຄອບຄົວ ແມ່ນມີ ໜ້ອຍກວ່າຜູ້ຊາຍເປັນຫົວໜ້າຄອບຄົວ. ຜົນຂອງການສຶກສາສະແດງໃຫ້ເຫັນເໝືອນກັນວ່າ: ໃນຫຼາຍເຂດທີ່ມີການປະສົມປະສານຂອງປະຊາຊົນຊົນນະບົດເຂົ້າໃນເສດຖະກິດການຕະຫຼາດແມ່ນມີຂີດຈຳກັດ, ມັນຈະມີໂອກາດຈຳກັດສຳລັບແບບຫຼາຍຮູບ ຫຼາຍສີ. ການປັບປຸງມາດຖານຊີວິດການເປັນຢູ່ຂອງປະຊາຊົນ ຊົນນະບົດ ຕ້ອງການໃຫ້ພັດທະນາພື້ນຖານໂຄງລ່າງຊົນນະບົດ, ໂດຍສະເພາະທົນທາງເຂົ້າເຖິງໄດ້, ເພີ້ມການລົງທຶນໃສ່ຂະແໜງການຂອງລັດເພື່ອຊ່ວຍພັດທະນາກະສິກຳ ແລະ ປະຕິບັດການສົ່ງເສີມພັດທະນາບັນຫາປັດໃຈການຕະຫຼາດຊົນນະບົດ. ເພື່ອການຮັກສາຈຸດປະສົງນີ້ໄວ້ໃນຈຸດໝາຍສູງສຸດ ລະຫວ່າງການລົງທຶນກະສິກຳ ຈາກການເບິ່ງໃນແງ່ມູມຂອງການລົບລ້າງຄວາມທຸກຈົນມີຄື:

(1) ແກ້ໄຂບັນຫາປູກເຂົ້າກິນ, ໂດຍສະເພາະ, ເພີ້ມເນື້ອທີ່ດິນຜະລິດຂຶ້ນ. ບັນຫານີ້ຈະຕ້ອງເຮັດໃຫ້ໄດ້ຮັບໝາກຜົນ, ໃນຈຳນວນຂອງບັນຫາອື່ນ, ໂດຍຜ່ານການຈັດຕັ້ງ ປະຕິບັດຂອງການບັງຄັບໃຊ້ສິດໃນການເປັນເຈົ້າຂອງທີ່ດິນ ສຳລັບຊັບພະຍາກອນທີ່ດິນ ແລະ ປ່າໄມ້;

(2) ເພີ້ມທະວີການເປັນເຈົ້າການໃນການລ້ຽງສັດ, ແກ້ໄຂບັນຫາພະຍາດສັດ ແລະ ກົນໄກການຕອບສະໜອງທຶນ ການເພີ້ມທະວີການເປັນເຈົ້າໃນການລ້ຽງສັດ;

(3) ໄວ້ວາງໃຈຕໍ່ການຜະລິດພືດເປັນສິນຄ້າ;

(4) ເຂົ້າເຖິງປັດໃຈຕະຫຼາດຂອງຊົນນະບົດ, ໂດຍສະເພາະ ຫ້າມການເຄື່ອນພົນລະເມືອງ ໃນ ສປປ ລາວ ເພື່ອພັດທະນາຕະຫຼາດແຮງງານຊົນນະບົດໃຫ້ພຽງພໍ ແລະ

(5) ພັດທະນາຖະໜົນຫົນທາງໃຫ້ເຂົ້າເຖິງໄດ້

ໃນຂໍ້ເພີ້ມເຕີມທີ່ຈະຕ້ອງໄດ້ເອົາໃຈໃສ່ມີຈຸດປະສົງດັ່ງລຸ່ມນີ້:

(1) ພັດທະນາຊັບພະຍາກອນມະນຸດໃນແງ່ມູມຂອງການບໍລິການສົ່ງເສີມກ່ຽວກັບລະບົບການເຮັດຟາມ ແລະ ການລ້ຽງສັດ ເພື່ອຕອບສະໜອງຄວາມຕ້ອງການຂອງຊາວກະສິກອນ;

(2) "ການທົດລອງ ແລະ ຂໍ້ຜິດພາດ" ການເຮັດທົດລອງໃນເຂດເນີນສູງ ບ່ອນທີ່ມີຄວາມທຸກຈົນຢ່າງຮຸນແຮງເປັນສ່ວນໃຫຍ່ ແລະ ການກຳນົດລະບົບການເຮັດການຜະລິກະສິກຳແບບທີ່ເໝາະສົມຫຼາຍກວ່າໝູ່ ແລະ

(3) ຊຸກຍູ້ຊ່ວຍເຫຼືອຊາວກະສິກອນເຮັດການຜະລິດຂະໜາດນ້ອຍໃນເຂດທົ່ງພຽງໃຫ້ໄປສູ່ການຕະຫຼາດ.

# ພາກທີ 3: ເບື້ອງຫຼັງ ແລະ ບັນດາຂໍ້ຈຳກັດຂອງກະສິກຳລາວ

## 3.1 . ນະໂຍບາຍ ແລະ ຍຸດທະສາດຂອງການພັດທະນາກະສິກຳຢູ່ ສປປລາວ

### 3.1.1 . ສະພາບລວມແລະໝາກຜົນຂອງການພັດທະນາກະສິກຳ

ການກະສິກຳແມ່ນຂະແໜງການເສດຖະກິດທີ່ສຳຄັນຂອງ ສ. ປ. ປ.ລາວ ຊຶ່ງກວມລວມຢ່າງກ້ວາງຂວາງ ຫລາຍກິດຈະການ ນັບຕັ້ງແຕ່ການຜະລິດຕາມທຳມະຊາດພໍກຸ້ມກິນ ໄປຈົນເຖິງການຜະລິດອຸດສະຫະ ກຳ-ກະສິກຳ. ໃນປີ 1999 ຂະແໜງການດັ່ງກ່າວ ໄດ້ກວມເອົາປະມານ 53% ຂອງລວມຍອດຜະລິດຕະ ພັນພາຍໃນ (GDP). ເຂົ້າຍັງເປັນພືດທີ່ສຳຄັນກວມເອົາ 20% ຂອງ GDP ຂອງຊາດ ແລະ 53% ຂອງຍອດລວມຜົນຜະລິດກະສິກຳແຕ່ສັດສ່ວນດັ່ງກ່າວກໍ່ມີທ່າລຸດລົງ. ການຜະລິດສັດແມ່ນອັນດັບຮອງ ລົງມາໃນປີ 1999 ກວມເອົາ 34% ຂອງການຜະລິດໃນຂະແໜງການກະສິກຳ, ແລະ ພືດ ສິນຄ້າໄດ້ ກວມເອົາປະມານ 14% . ຫລາຍກ່ວາ 80% ຂອງພົນລະເມືອງແມ່ນອາໃສຢູ່ໃນຊົນນະບົດ ແລະ ມີອາ ຊີບກະສິກຳລວມທັງການລ້ຽງສັດ, ປ່າໄມ້ແລະການປະມົງ.

**ຕາຕະລາງ 3.1 ລວມຍອດພາຍໃນຜະລິດຕະພັນ1999**

| ສັດສ່ວນຂອງGDP | 1999 (ລ້ານກີບ) | ເປີເຊັນຂອງGDP | |
|---|---|---|---|
| ກະສິກຳ(ໃນນັ້ນ) | 5541.551 | 53,4% | (100%) |
| ເຂົ້າ | 2132 727 | 20.5% | 38.5% |
| ພືດຜັກ | 120 625 | 1.2% | 2.2% |
| ພືດສິນຄ້າ | 796 592 | 7.7% | 14.4% |
| ສັດ | 1889 621 | 18.2% | 34.1% |
| ປະມົງ | 78 098 | 0.8% | 1.4% |
| ປ່າໄມ້ | 523 888 | 5% | 9.4% |
| ອຸດສະຫະກຳ | 2 333 009 | 22.5% | |
| ບໍລິການ | 2.421 964 | 23.4% | |
| ອື່ນໆ | 74 989 | 0.7% | |
| ລວມ | 10.374 513 | 100% | |

*ເປີເຊັນສັດສ່ວນຂອງກະສິກຳໃນ GDP ນອນໃນວົງເລັບ

**<u>ໝາກຜົນ ຂອງການຈັດຕັ້ງປະຕິບັດຜ່ານມາ</u>**

ໃນໄລຍະຜ່ານມາການຜະລິດກະສິກຳ ແມ່ນບໍ່ສາມາດຕອບສະໜອງໄດ້ ທັນກັບເວລາການຂະຫຍາຍຕົວ ຂອງພົນລະເມືອງ ແລະ ບໍ່ສາມາດສົ່ງເປັນສິນຄ້າຂາອອກໄດ້ ຢ່າງສະໝ່ຳສະເໝີ. ການຜະລິດສະບຽງຕໍ່ ກັບຄົນແມ່ນໄດ້ຫລຸດລົງໃນແຕ່ລະປີ. ສະພາບແວດລ້ອມຂອງການຜະລິດຍັງບໍ່ໄດ້ເອື້ອອຳນວຍໃຫ້ແກ່ ການເຕີບໃຫ່ຍທາງດ້ານກະສິກຳນີ້ກໍ່ຍ້ອນການຄ້າຂາຍຜົນຜະລິດກະສິກຳຍັງບໍ່ດີ, ທາງຂົນສົ່ງບໍ່ສະດວກ, ພະຍາດສັດລະບາດ,ລະບົບການຄົ້ນຄວ້າທົດລອງແລະສົ່ງເສີມຍັງອ່ອນນ້ອຍ. ນັບແຕ່ປີ 1990 ແລະ ພິ ເສດນັບແຕ່ປີ 1996 ເປັນຕົ້ນມາ, ສະພາບການຜະລິດແມ່ນໄດ້ດີຢ່າງເຫັນໄດ້ຊັດເຈນ. ທັງຫມົດນີ້ສ່ວນ ໜຶ່ງກໍ່ຍ້ອນການມີແນວທາງປ່ຽນແປງໃໝ່ທີ່ໃຊ້ກົນໄກເສດຖະກິດຕະຫລາດ ແລະ ສ່ວນນຶ່ງກໍ່ຍ້ອນໝາກ ຜົນຂອງການເລັ່ງລັດລົງທຶນສ້າງຊົນລະປະທານອັນເຮັດໃຫ້ການຜະລິດເຂົ້າລະດູແລ້ງພັດພື້ນເປັນຂະ

ບວນດີ. ສັດສ່ວນຂອງການຜະລິດກະສິກຳຕໍ່ GDP ລວມແມ່ນໄດ້ຄ່ອຍຫລຸດລົງແລະກໍ່ມີການປ່ຽນແປງຍ້ອນສະພາບຂອງດິນຟ້າອາກາດ. ຄາດວ່າສັດສ່ວນດັ່ງກ່າວຈະມີການຫລຸດຖອຍລົງເປັນລຳດັບຍ້ອນວ່າການຂະຫຍາຍຕົວທາງດ້ານຕົວເມືອງ ແລະ ອຸດສາຫະກຳເບົາ ແລະ ການບໍລິການ. ແຕ່ສຳລັບປະເທດລາວການຫລຸດລົງຂອງສັດສ່ວນ GDP ຂອງກະສິກຳຊ້າ ກໍ່ຍ້ອນສັດສ່ວນການຂະຫຍາຍຕົວຂອງຂະແໜງການຍ່ອຍກະສິກຳຂະຫຍາຍຊ້າ. ໂດຍສະເພາະກ່ອນປີ 1997 ສະບຽງອາຫານຕໍ່ຫົວຄົນແມ່ນໄດ້ເພີ່ມຂຶ້ນພຽງເລັກນ້ອຍບາງໆປີກໍ່ຫລຸດລົງ.

**ໝາກຜົນປະຕິບັດຂອງຂະແໜງການຍ່ອຍ.**

ໃນຂົງເຂດກະສິກຳ ແລະ ປ່າໄມ້, ການປະກອບສ່ວນຂອງຂະແໜງປ່າໄມ້ ໄດ້ມີການເຄັ່ງຕຶງຢ່າງຫລວງຫລາຍສົມຄວນໃນໄລຍະ 10 ປີທີ່ຜ່ານມາອັນນີ້ກໍ່ຍ້ອນນະໂຍບາຍໃນການຄຸດຄົ້ນໄມ້ ແລະ ລາຄາຂອງໄມ້ທ່ອນແລະ ໄມ້ເລື່ອຍ. ການປະກອບສ່ວນຂອງປ່າໄມ້ແມ່ນໄດ້ຫລຸດລົງແຕ່ປີ 1996. ການລ້ຽງສັດ ແລະ ການລ້ຽງປາໄດ້ເພີ່ມຂຶ້ນຢ່າງໄວວາແຕ່ວ່າໃນປະຈຸບັນແມ່ນມີທ່າອ່ຽງຫລຸດລົງ ຍ້ອນມີການສົ່ງອອກຂາຍຕ່າງປະເທດ ທີ່ບໍ່ເປັນທາງການ.

**ຕາຕະລາງ3..2. ອັດຕາການເຕີບໃຫຍ່ຂອງຂະແໜງການຍ່ອຍ 1994 - 99 ໃນລາຄາປີ 1999.**

| | 1995 | 1996 | 1997 | 1998 | 1999 | ສະເລ່ຍ |
|---|---|---|---|---|---|---|
| ເຂົ້າ | 0.1 | 0.3 | 16.2 | 1.3 | 15.1 | 6.4 |
| ພືດສິນຄ້າ | 6.0 | 10.1 | 9.8 | 17.9 | 15.8 | 9.5 |
| ສັດ | 3.7 | 2.8 | 2.4 | 2.5 | 1.7 | 1.5 |
| ປາ | 3.0 | 5.3 | 5.0 | 5.0 | 5.0 | 5.5 |
| ລວມ | 3.1 | 2.8 | 7.0 | 3.1 | 8.2 | 4.8 |

**ເຂົ້າ ແລະ ການລ້ຽງສັດ.**

ການຜະລິດເຂົ້າແຕ່ປີ 1990-1996 ໄດ້ຫລຸດລົງແຕ່ວ່ານັບແຕ່ປີ 1996 ໄດ້ເພີ່ມຂຶ້ນຢ່າງໄວວາຍ້ອນການລົງທຶນໃສ່ຊົນລະປະທານ ແລະ ສະພາບດິນຟ້າອາກາດອຳນວຍ. ສະພາບການດັ່ງກ່າວ ຈະສືບຕໍ່ໃນໄລຍະຕໍ່ໄປ ຖ້າອາກາດອຳນວຍການລ້ຽງສັດກໍ່ເພີ່ມຂຶ້ນຄືກັນໂດຍສະເພາະສັດໃຫ່ຍ, ໝູ ແລະ ສັດປີກ. ເບິ່ງລວມແລ້ວຄາດວ່າຖ້າດິນຟ້າອາກາດອຳນວຍການຜະລິດ ຈະເພີ່ມຂຶ້ນໄວວາກວ່າພົນລະເມືອງ ແລະ ສາມາດຄ້ຳປະກັນສະບຽງອາຫານ.

**ການຜະລິດພືດສິນຄ້າ**

ພືດສິນຄ້າເປັນຕົ້ນແມ່ນກາເຟ, ອ້ອຍ, ຢາສູບ, ຖົ່ວດິນແລະຝ້າຍ, ແມ່ນໄດ້ເພີ່ມຂຶ້ນຢ່າງສະໝ່ຳ ສະເໝີທັງເນື້ອທີ່ ແລະ ຜະລິດຕະພາບ. ສະເລ່ຍໃນ 5ປີ ຜ່ານມາແມ່ນຂຶ້ນປະມານ10%. ຄາດວ່າການເພີ່ມຂຶ້ນຂອງຜະລິດຕະພາບຈະເປັນດ້ານດີໃນຕໍ່ໜ້າ.

### 3.1.2 ຍຸດທະສາດຂອງລັດຖະບານຕໍ່ຂະແໜງການກະສິກຳ.

ຈຸດປະສົງລວມຂອງການພັດທະນາແມ່ນເພື່ອ ໃຫ້ປະເທດລາວຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາໃນປີ 2020 ດ້ວຍການພັດທະນາທີ່ຍືນນານ ແລະ ສະເໝີພາບ. ແຜນພັດທະນາເສດຖະກິດສັງຄົມຂອງ

ລັດຖະບານໃນແຜນການ 5 ປີຄັ້ງທີ IV (1996 - 2000) ປະກອບດ້ວຍກັນທັງໝົດ 8 ແຜນງານຄື : i) ແຜນງານຜະລິດສະບຽງ. ii) ແຜນງານຜະລິດສິນຄ້າ. iii) ແຜນງານຢຸດຕິຖາງປ່າເຮັດໄຮ່. iv) ແຜນການພັດທະນາພື້ນຖານໂຄງລ່າງ. v) ຄຸ້ມຄອງເສດຖະກິດສັງຄົມ ແລະ ການຮ່ວມມືກັບຕ່າງປະເທດ. vi) ພັດທະນາຊົນນະບົດ. vii) ພັດທະນາຊັບພະຍາກອນມະນຸດ. ແລະ viii) ພັດທະນາການບໍລິການ. ການຈັດຕັ້ງແຜນງານດັ່ງກ່າວໄດ້ເຮັດເປັນຂັ້ນຕອນແລະໃນແຜນ 2000 - 2005 ກໍມີແຜນງານດັ່ງກ່າວນີ້ ( ໃຫ້ເບິ່ງ 2.2 ) .

ຂະແໜງກະສິກຳແລະປ່າໄມ້ໄດ້ຮັບຜິດຊອບທັງໝົດ 8 ແຜນງານແຕ່ບໍ່ໄດ້ເນັ້ນໜັກລົງເລິກປານໃດກ່ຽວກັບແຜນງານກໍ່ສ້າງພື້ນຖານໂຄງລ່າງ ແລະ ການພັດທະນາການບໍລິການ. ໃນປີ 1998, ໂດຍອີງໃສ່ 8 ແຜນງານດັ່ງກ່າວກະຊວງກະສິກຳ ແລະ ປ່າໄມ້ໄດ້ຜັນຂະຫຍາຍມາເປັນ 6 ແຜນງານແລະເປັນໂຄງການຈັດຕັ້ງປະຕິບັດ. ແຜນການດັ່ງກ່າວ ມີດັ່ງນີ້: (i) ແຜນງານຜະລິດສະບຽງ, (ii) ຊຸກຍູ້ການຜະລິດສິນຄ້າ, (iii) ຢຸດຕິການຖາງປ່າເຮັດໄຮ່, (iv) ພັດທະນາຊົນລະປະທານ, (v) ແຜນງານຄົ້ນຄວ້າທົດລອງກະສິກຳ-ປ່າໄມ້ ແລະ (vi) ແຜນງານພັດທະນາຊັບພະຍາກອນມະນຸດ.

ວິໄສທັດຮອດປີ 2020 ຊຶ່ງໄດ້ຜ່ານກອງປະຊຸມໂຕະມົນໃນເດືອນທັນວາປີ 1999 ແມ່ນພື້ນຖານໃນການພັນຂະຫຍາຍແຜນຈັດຕັ້ງປະຕິບັດໃນຕໍ່ໜ້າ. ວິໄສທັດຍຸດທະສາດດັ່ງກ່າວໄດ້ສະແດງໃຫ້ເຫັນສອງເຂດທີ່ມີວິທີການແຕກຕ່າງກັນອັນໄດ້ແກ່ເຂດທົ່ງພຽງລຽບລຳນ້ຳຂອງ ແລະ ເຂດພູດອຍ. ຕັ້ງແຕ່ປີ 1994 ເປັນຕົ້ນມາສອງເຂດດັ່ງກ່າວໄດ້ມີການພັດທະນາທີ່ຕ່າງອອກຈາກກັນ. ເຂດທົ່ງພຽງໄດ້ມີການພັດທະນາເຂົ້າໄປຫາການຜະລິດສິນຄ້າ. ສ່ວນເຂດພູດອຍຊຶ່ງກວມເອົາ 80% ຂອງເນື້ອທີ່ທົ່ວປະເທດຍັງເຮັດການຜະລິດແບບທຳມະຊາດກຸ້ມຕົນເອງເປັນສ່ວນໃຫຍ່ ແລະ ມີຄວາມທຸກຈົນໃນເຂດຊົນນະບົດ. ດັ່ງນັ້ນສອງເຂດດັ່ງກ່າວຈຶ່ງມີຍຸດທະສາດການພັດທະນາທີ່ແຕກຕ່າງກັນແຕ່ທັງສອງຍຸດທະສາດທັງສອງກໍ່ແນ່ໃສ່ເພື່ອການພັດທະນາການຜະລິດສິນຄ້າໃນອານາຄົດ. ຍຸດທະສາດໃນແຕ່ລະເຂດມີດັ່ງຕໍ່ໄປນີ້:

ສຳລັບເຂດທົ່ງພຽງລຽບນ້ຳຂອງຍຸດທະສາດແມ່ນຮັກສາ ແລະ ເລັ່ງລັດການຂະຫຍາຍຕົວການເຮັດກະເສດສຸມ, ປູກພືດຫລາຍຊະນິດ, ແລະຍົກຜະລິດຕະພາບຕໍ່ເນື້ອທີ່, ເພີ່ມມູນຄ່າເພີ່ມດ້ວຍການປຸງແຕ່ງແລະຂະຫຍາຍການຕະຫລາດ. ກົນໄກການຕະຫລາດໄດ້ມີການຂະຫຍາຍຕົວດີສົມຄວນໃນເຂດດັ່ງກ່າວ. ບັນດານະໂຍບາຍຍຸດທະສາດຄວນຈະສະໜັບສະໜູນທ່າອ່ຽງໃນເຂດດັ່ງກ່າວ ແລະ ຄ່ອຍຂະຫຍາຍຕົວເຂົ້າໃນເຂດພູດອຍ.

ສຳລັບເຂດພູດອຍບັນຫາ ແມ່ນ ມີຄວາມແຕກຕ່າງກັນເນື່ອງຈາກການໄປມາຫາສູ່ກັນບໍ່ສະດວກ, ມີຄວາມທຸກຈົນ, ການເງິນທຶນຮອນຂາດເຂີນແລະຂາດປັດໃຈອື່ນໆ. ບັນຫາໃຫຍ່ອັນນຶ່ງກໍ່ຄືການຫັນປ່ຽນ ການຖາງປ່າເຮັດໄຮ່ເລື່ອນຍ້າຍ ທີ່ມີຜົນຜະລິດຕ່ຳ ເພື່ອໃຫ້ມາເປັນລະບົບການຜະລິດທີ່ຈະສາມາດຄົງທີ່ໄດ້, ເພີ່ມການຜະລິດຂອງຊັບພະຍາກອນ, ປັບປຸງເສດຖະກິດສັງຄົມໃຫ້ດີຂຶ້ນຮັກສາໄດ້ສະພາບແວດລ້ອມ ແລະ ຊັບພະຍາກອນທຳມະຊາດ. ເນື່ອງຈາກປະຊາຊົນໄດ້ເພີ່ມການຜະລິດໃນປະຈຸບັນບໍ່ສາມາດຈະແກ້ໄຂຄວາມທຸກຈົນຕໍ່ໄປອີກໄດ້.

ດັ່ງນັ້ນ, ວິໄສທັດຍຸດທະສາດໃນສອງເຂດເປັນອັນສະເພາະຊຶ່ງສັງລວມໄວ້ໃນຕາຕະລາງ 3.3. ສະຫລຸບແລ້ວວິໄສຍຸດທະສາດໄດ້ສັງລວມອອກເປັນ 7 ຫົວເລື່ອງໃຫຍ່ທີ່ຕິດພັນໂດຍກົງກັບແຜນງານເສດຖະກິດແຫ່ງຊາດຄື:

1) ການຫັນເປັນແຜນການ: ການວາງແຜນຂອງກະຊວງກະສິກຳ ແລະ ການກະຈາຍອຳນາດ.

2) ການພັດທະນາຊັບພະຍາກອນມະນຸດ.

3) ການປັບປຸງລະບຽບການທຸລະກິດ.

4) ການຄ້າຕ່າງປະເທດ.

5) ການຫັນປ່ຽນເຂດທົ່ງພຽງ.

6) ການພັດທະນາເຂດດິນຄອຍຊັນ ແລະ ການຄຸ້ມຄອງສະພາບແວດລ້ອມ ແລະ ການຍຸດຕິຖາງປ່າເຮັດໄຮ່.

7) ຊົນລະປະທານ.

**ຕາຕະລາງ 3.3 ແນວຄິດສະເພາະການພັດທະນາເຂດທົ່ງພຽງແລະພູດອຍ.**

| ຍຸດທະສາດເຂດທົ່ງພຽງ | ຍຸດທະສາດເຂດພູດອຍ |
|---|---|
| 1) ປັບປຸງລະບົບການຜະລິດເຮັດເປັນຟາມເລັ້ງລັດການເຮັດກະເສດສຸມ, ປູກພືດສິນຄ້າ, ລ້ຽງສັດແລະ ການປະມົງ.<br>2) ຂະຫຍາຍ ແລະ ສຸມໃສ່ການສ້າງມູນຄ່າເພີ່ມ ດ້ວຍ ທຸລະກິດການປຸງແຕ່ງດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດໃນຂົງເຂດການປຸງແຕ່ງຜະລິດຕະພັນກະສິກຳ.<br>3) ພາກລັດ ແລະ ເອກກະຊົນສົມທົບກັນຄົ້ນຄວ້າການຕະຫລາດ, ລະບົບຂໍ້ມູນຂ່າວສານໃຫ້ມີເຊື່ອມຕໍ່ກັບຕະຫລາດໃນຂົງເຂດພາກພື້ນຕິດພັນກັນລະຫວ່າງຜູ້ຜະລິດ, ຜູ້ຂາຍຍົກແລະຂາຍຍ່ອຍໃນທົ່ວພາກພື້ນ.<br>4) ສ້າງຄວາມເຂັ້ມແຂງແລະຂະຫຍາຍສິນເຊື່ອໃນຊົນນະບົດໂດຍມີການແກ້ງແຍ້ງ ຖືກຕອງຕາມກົດໝາຍ ແລະ ກົນໄກຕະຫລາດ.<br>5) ພັດທະນາມາດຕະຖານສິນຄ້າໃຫ້ເປັນທີ່ຍອມຮັບຂອງສາກົນ.<br>6) ສ້າງຄວາມເຂັ້ມແຂງ ແລະ ສະໜັບສະໜູນການປ່ອຍທຶນໃຫ້ຊົນນະບົດກໍ່ຄືການທຸລະກິດການປຸງແຕ່ງຂອງທະນາຄານການຄ້າຂອງລັດກໍ່ຄືຂອງເອກກະຊົນ.<br>7) ປັບປຸງສອມແປງແລະຂະຫຍາຍລະບົບຊົນລະປະທານພ້ອມກັບການເຮັດກະເສດສຸມໃນລະດູແລ້ງໂດຍສະເພາະໃຫ້ມີສ່ວນຮ່ວມຈາກປະຊາຊົນ. | 1) ການວາງແຜນນຳໃຊ້ດິນໃຫ້ຖືກຕ້ອງໂດຍອີງໃສ່ຄວາມຄອຍຊັນຄວາມອາດສາມາດຂອງດິນແລະ ເສດຖະກິດສັງຄົມ.<br>2) ສົ່ງເສີມການມອບດິນ, ນຳໃຊ້ດິນແບບມີສ່ວນຮ່ວມຂອງປະຊາຊົນ ແລະ ອອກໃບຕາດິນ.<br>3) ຄຸ້ມຄອງຊັບພະຍາກອນທຳມະຊາດທຸ່ມປະຊາຊົນ.<br>4) ພັດທະນາການເຮັດຟາມແບບປະສົມປະສານຫລາຍຮູບຫລາຍສີທັງກະສິກຳແລະປ່າໄມ້ໂດຍວິທີການສາທິດຜົນສຳເລັດຈາກການຄົ້ນຄວ້າທົດລອງ.<br>5) ຂະຫຍາຍຊົນລະປະທານຂະໜາດນ້ອຍໂດຍປະຊາຊົນຄຸ້ມຄອງ.<br>6) ສ້າງລະບົບການສົ່ງເສີມຖືກກັບຕົວຈິງຕາມຄວາມຕ້ອງການຂອງປະຊາຊົນ.<br>7) ຄຸ້ມຄອງການນຳໃຊ້ດິນໃຫ້ຍືນນານດ້ວຍກັນການເຊາະເຈື່ອນ, ປູກປ່າ, ຟື້ນຟູປ່າແລະຮັກສາປ່າສະຫງວນ.<br>8) ສົ່ງເສີມການສະສົມທຶນຮອນ ແລະ ລົງທຶນໃນຊົນນະບົດ.<br>9) ສົ່ງເສີມພັດທະນາລະບົບການເງິນໃຫ້ທັນຕາວຕາມກົນໄກຂອງຕະຫລາດແຕ່ຄວນມີການຖົມຂຸມໃນເຂດທຸກຍາກຂາດເຂີນ.<br>10) ສ້າງຄວາມເຂັ້ມແຂງທາງດ້ານຄວາມສາມາດແລະລະບຽບກົດໝາຍໃຫ້ທະນາຄານການຄ້າຂອງລັດໃນການບໍລິການການຄ້າແລະການທະນາຄານ.<br>11) ເປີດກວ້າງຕະຫລາດຊຸມຊົນໃຫ້ມີທາງເຂົ້າເຖິງ ປັບປຸງແລະຂະຫຍາຍຂ່າວສານການຕະຫລາດ. |

ແຫ່ງຂໍ້ມູນ: ວິໄສທັດຍຸດທະສາດຂອງລັດຖະບານກ່ຽວກັບການພັດທະນາຂະແໜງການກະສິກຳ, ກະຊວງກະສິກຳປ່າໄມ້, ທັນວາ 1999.

## 3.2. ສະພາບເງື່ອນໄຂແລະຂໍ້ຈຳກັດຂອງການກະສິກຳລາວ.

### 3.2.1. ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ.

(1) **<u>ຊັບພະຍາກອນນ້ຳ</u>**

ປະລິມານນ້ຳຝົນຕົກໃນປະເທດລາວມີປະມານ 1,300-3,300 ໃນທົ່ວປະເທດ. ປະລິມານນ້ຳຝົນຫລາຍກວ່າ 2,400 ມມ ມີຢູ່ສອງເຂດຄື: (i) ພາກເຫນືອ ແລະ ຕາເວັນອອກຂອງແຂວງວຽງຈັນແລະພື້ນທີ່ພາກຕາເວັນຕົກຂອງແຂວງບໍລິຄຳໄຊ (ii) ພູພຽງບໍລິເວນ. ໄຊຍະບູລີ ແລະ ແຂວງຫລວງພະບາງມີປະລິມານນ້ຳຝົນ 1,300 ມມ/ປີ. ປັດຈຸບັນມີສະຖານີອຸຕຸ 35 ແຫ່ງແລະສະຖານີເກັບນ້ຳຝົນ 135 ສະຖານີ. ໃນຈຳນວນດັ່ງກ່າວ 40% ແມ່ນເຮັດວຽກປົກກະຕິສ່ວນທີ່ເຫລືອໂດຍສະເພາະເຂດພູດອຍພາກເຫນືອເຮັດວຽກບໍ່ຄ່ອຍປົກກະຕິ.

ຊັບພະຍາກອນນ້ຳໃນປະເທດລາວມີຄວາມຫມາຍສຳຄັນ ບໍ່ສະເພາະແຕ່ລາວແຕ່ຍັງຈຳເປັນສຳລັບທົ່ວເຂດພາກພື້ນ. ປະເທດລາວເກືອບທັງຫມົດນອນໃນອ່າງແມ່ນ້ຳຂອງມີ 24 ແມ່ນ້ຳສຳຄັນ ຊຶ່ງເປັນສາຂານ້ຳຂອງ. ສ່ວນອ່າງໃຫ່ຍສອງອ່າງ, ມີເນື້ອທີ່ເທົ່າກັບ 10% ຂອງເນື້ອທີ່ປະເທດລາວ, ແມ່ນຢູ່ອ່າງເກັບນ້ຳຂອງປະເທດຫວຽດນາມ. ມີສະຖານທີ່ແທກນ້ຳ 89 ແຫ່ງໃນນ້ຳຂອງແລະບັນດາສາຂາຕ່າງໆແຕ່ວ່າປະມານ 30% ແມ່ນບໍ່ເຮັດວຽກປົກກະຕິ. ການບັນທຶກ ລະບົບນ້ຳໃນສາຂາແມ່ນ້ຳຂອງແມ່ນສັ້ນ ແລະ ລວງຍາວບໍ່ສະຫມ່ຳສະເຫມີ. ສ່ວນໃຫ່ຍສະຖານີແມ່ນຕັ້ງຢູ່ໃກ້ກັບປາກນ້ຳ. ໃນປັດຈຸບັນການວັດແທກຄາດຄະເນປະລິມານນ້ຳໄຫລອອກໃນທົ່ວປະເທດຍັງບໍ່ທັນຊັດເຈນ.

ຢ່າງໃດກໍ່ດີ, ໄດ້ມີຄວາມພະຍາຍາມສັງລວມກ່ຽວກັບນ້ຳໄຫລໂດຍອີງໃສ່ສັດສ່ວນການໄຫລຜ່ານ, ການໄຫລຜ່ານທາງຫນ້າດິນຕ່າງໆ. ໂດຍສະເລ່ຍການໄຫລຫນີຂອງນ້ຳຄາດຄະເນປະມານ 0,55, ແຕ່ກໍ່ມີຄວາມແຕກຕ່າງລະຫວ່າງ 0.2 - 0.8 ດັ່ງນັ້ນປະລິມານນ້ຳໄຫລອອກ (run off) ຢູ່ປະເທດລາວຈະມີປະມານ 229,900 ລ້ານ ແມັດກ້ອນໃນນີ້ໄຫລອອກຈາກສາຂານ້ຳຂອງປະມານ 214,500 ລ້ານແມັດກ້ອນ. ການໄຫລຂອງນ້ຳປະຈຳເດືອນແມ່ນຂຶ້ນກັບລະດູປະລິມານນ້ຳຝົນ, 80% ແມ່ນໃນລະດູຝົນ ( ມິຖຸນາ-ຕຸລາ) ແລະ 20% ໃນລະດູແລ້ງ (ພະຈິກ - ເມສາ) ບາງສາຍນ້ຳໃນເຂດພາກກາງ ແລະ ພາກໃຕ້ມີປະລິມານນ້ຳໄຫລແຕ່ 10 - 15% ຂອງບໍລິມາດນ້ຳລວມປີດັ່ງນັ້ນຈຶ່ງເຮັດໃຫ້ມີການຂາດເຂີນນ້ຳຊົນລະປະທານລະດູແລ້ງ.

(2) **<u>ຊັບພະຍາກອນປ່າໄມ້.</u>**

ເນື້ອທີ່ປ່າໄມ້ໄດ້ຄ່ອຍຫລຸດລົງໃນ 20 ປີຜ່ານມາປະມານ 1.5 ລ້ານເຮັກຕາ ຫລື 8% ນັບແຕ່ປີ 1982, ຍ້ອນການຂະຫຍາຍເນື້ອທີ່ກະສິກຳ(0,5 ລ້ານເຮັກຕາ) ການຂຸດຄົ້ນໄມ້ ແລະ ການຖາງປ່າເຮັດໄຮ່. ສິ່ງທີ່ເຮັດໃຫ້ການປ່ຽນແປງການນຳໃຊ້ດິນນີ້ກໍ່ຍ້ອນການເພີ່ມຂື້ນຂອງພົນລະເມືອງ ແລະ ຄວາມທຸກຍາກ. ການຜະລິດກະສະກຳເພີ້ມຂື້ນ ແຕ່ບໍ່ທວງທັນກັບການຂະຫຍາຍຕົວຂອງພົນລະເມືອງ ດັ່ງນັ້ນ, ຈຶ່ງເກັບກ່ຽວຜະລິດຕະພັນຈາກໄມ້ເພື່ອໄດ້ເງິນສົດຊື້ເຂົ້າກິນ. ລັດຖະບານໄດ້ມີການສົ່ງເສີມ ໃຫ້ມີການຂາຍໄມ້ເລື່ອຍໄມ້ແປຮູບເພື່ອໃຫ້ໄດ້ເງິນຕາຊື້ເຂົ້າ.

ໃນບົດລາຍງານກົມປ່າໄມ້ 1992[1] ຄາດຄະເນເນື້ອທີ່ປູກພືດຖາວອນ ແລະ ການເຮັດໄຮ່ດັ່ງ ໄດ້ສະແດງໃນຕາຕະລາງ3.4. 1ການນຳໃຊ້ດິນ 1982 ແລະ 1989 (000 ເຮັກຕາ)

| ການນຳໃຊ້ດິນກະສິກຳ | 1982 | 1989 |
|---|---|---|
| ດິນກະສິກຳຖາວອນ | 708.1 | 849.5 |
| ເນື້ອທີ່ໄຮ່ເລື່ອນລອຍ | 597.4 | 625.6 |
| ລວມ | 1.3061 | 1475.1 |

ໃນປີ 2000 ການນຳໃຊ້ດິນທັງຫມົດສັງລວມໄດ້ 1.130.000 ເຮັກຕາແລະ 680.000 ເຮັກຕາ ລວມເປັນ 1,810,000 ເຮັກຕາຖ້າສົມທຽບໃສ່ການເພີ້ມຂື້ນຂອງປະຊາກອນ ແລະ ສິດໃນການນຳໃຊ້ທີ່ດິນ ໃນໄລຍະຊຸມປີ 1982 ແລະ 1989 ແລະ ຂໍ້ມູນຈາກການສຳຫຼວດເນື້ອທີ່ດິນທີ່ປະຕິບັດຜ່ານມາ ຖ້າສົມທຽບເບິ່ງແລ້ວເຫັນວ່າມີຄວາມແຕກຕ່າງກັນລະຫວ່າງສະຖິຕິກະສິກຳ ແລະ ສຳນະໂນກະສິກຳ.
ເຖິງວ່າທີ່ດິນ 680.000 ຮ.ຕ ຈະກວມເອົາດິນປ່າເຫລົ່ານັ້ນກໍຕາມ ແຕ່ກໍຍັງສູງກ່ວາສະຖິຕິທີ່ສຳຫຼວດ ກະສຳກຳຂອງກະຊວງກະສິກຳເຖິງ 4-5 ທົບ (152.000ຮ.ຕ). ໃນປີ 2000, ຄາດວ່າມີປະມານ 340.000 ຄອບຄົວທີ່ຢູ່ເຂດພູດອຍຊົນນະບົດ (2.06 ລ້ານຄົນ) ແຕ່ຈຳນວນດັ່ງກ່າວເຂົາເຈົ້າກໍມີນາປູກເຂົ້າຢູ່ບາງແຫ່ງ. ດັ່ງນັ້ນເນື້ອທີ່ເຂົ້າໄຮ່ຕໍ່ຄອບຄົວຈະມີປະມານ 0,45 ຮ.ຕ ສົມທຽບຢູ່ທົ່ງພຽງ ຄອບຄົວນຶ່ງຈະມີປະມານ 1,28 ຮ.ຕ ຊຶ່ງຫລາຍກ່ວາດິນປູກເຂົ້າໄຮ່ 3 ເທື່ອ. ເບິ່ງອີດ້ານນຶ່ງຜົນຜະລິດ ເຂົ້າໄຮ່ຍັງຫຼຸດເຂົ້ານາເປັນເຄິ່ງ. ດັ່ງນັ້ນ, ຄວນກວດຄືນຕົວເລກດັ່ງກ່າວ ເພື່ອການຕີລາຄາໃຫ້ຖືກຕ້ອງແລ້ວຈຶ່ງຈະມີຂໍ້ແນະນຳທີ່ເຫມາະສົມ. ມີຄວາມຕ້ອງການອັນຮີບດ່ວນ ທີ່ຈະເກັບກຳຂໍ້ມູນສະຖິຕິ ເພື່ອສາມາດບົ່ງນະຕິການພັດທະນາໃຫ້ເໝາະສົມ.

ເນື້ອທີ່ປ່າໄມ້ສ່ວນໃຫຍ່ແມ່ນມີຄວາມສຳຄັນຕໍ່ການລ້ຽງສັດ ເຊັ່ນ ງົວ, ຄວາຍ, ແບ້ ແລະ ເປັນແຫລ່ງອາຫານໃຫ້ຫມູ. ດັ່ງນັ້ນ ນະໂຍບາຍຂອງລັດຖະບານຈຶ່ງເລັ່ງໃສ່ເຂດນີ້ດ້ວຍການເພີ່ມຈຳນວນສັດ ແລະ ປັບປຸງທົ່ງຫຍ້າ ພ້ອມກັນນັ້ນກໍເປັນເນື້ອທີ່ທີ່ໃຫ້ອາຫານ ແລະ ເຄື່ອງປ່າຂອງດົງໃຫ້ແກ່ຄອບຄົວ. ດ້ວຍເຫດຜົນດັ່ງກ່າວ ປ່າໄມ້ທຳມະຊາດແມ່ນມີບົດບາດສຳຄັນໃນການເຮັດການກະສິກຳແບບປະສົມປະສານ.

(3). <u>ດິນ</u>

ດິນປະເທດລາວສ່ວນໃຫຍ່ເປັນດິນສົ້ມ ແລະ ຂາດທາດອາຫານ ແລະ ອິນຊີວັດຖຸ. ທັງຫມົດມີດ້ວຍກັນ 38 ຫມວດ ອີງຕາມການໄດ້ແບ່ງຂອງລະບົບ FAO-UNESCO. ໃນນັ້ນ 5 ຫມວດແມ່ນກວມເອົາ 74% ຂອງເນື້ອທີ່ 9 ຫມວດ Ferric acrisol (28%), Humic acrisols (20%), Ferric alisols (11%), Humic alisols (7%) ແລະ Ferric lixisols (8%). ໂດຍທົ່ວໄປແລ້ວແມ່ນດິນສົ້ມ (PH 4.0) ຊັ້ນດິນປູກຝັງບາງດິນທີ່ເຫມາະສົມກັບການປູກຝັງມີ Luvisols (10%), Dystic cambisols (5,0%) Entric cambisols (4.2%), Leptosols (1,9%), Fluvisols (1,3%) ແລະ Gleysols (0,5%). ລວມທັງຫມົດດິນດັ່ງກ່າວມີ 4.8 ລ້ານ ຮ.ຕ ທີ່ມີຄວາມຄ້ອຍຊັນຫລຸດ 30%. ດິນດັ່ງກ່າວແມ່ນຢູ່ຕາມທົ່ງພຽງທີ່ນອນຢູ່ໃນອ່າງແມ່ນ້ຳຂອງ ແລະ ແມ່ນ້ຳສາຍສຳຄັນ ທີ່ປະກອບມີທາດອິນຊີຄົບຖ້ວນ ແລະ ເປັນດິນດີ.

[1] ປ່າໄມ້ ແລະ ການນຳໃຊ້ທີ່ດິນຢູ່ ສປປລາວ ບົດລາຍງານສຸດທ້າຍຂອງການສຳຫຼວດປ່າໄມ້ທົ່ວປະເທດ ( ບົດທີ 5 )

(4). **ຊັບພະຍາກອນທຳມະຊາດ ທີ່ສາມາດເປັນປັດໃຈການຜະລິດກະສິກຳ**

ມີແຫລ່ງຊັບພະຍາກອນທຳມະຊາດທີ່ມີຄວາມສຳຄັນຕໍ່ການກະສິກຳ ເຊັ່ນ ຫີນປູນ (Ca), ຫີນກາວ (Ca), ໂດໂລໄມ (Ca/Mg), Sylvite (K) ແລະ ຫີນຟົສເຟັດ (P). ເວລາເອົາຫີນປູນລົງໃສ່ປັບປຸງດິນຈະເຮັດໃຫ້ຄວາມສົ້ມນ້ອຍລົງ ພືດດູດອາຫານໄດ້ດີ. ຄຽງຄູ່ກັນນັ້ນ ກໍຍັງມີຝຸ່ນອິງຄະທາດຕ່າງໆ ເຊັ່ນ ຝຸ່ນຄອກ ຝຸ່ນບົ່ມ ຝຸ່ນຂຽວ. ນອກນັ້ນຍັງມີພືດຫຼາຍຊະນິດ ທີ່ຮັສາມີໄຖເຊນ ລວມທັງຝຸ່ນບົ່ມ ແລະ ຝຸ່ນພັກ ທີ່ມາຈາກເສດຂອງສັດ ແລະ ພືກ ຫຼືວ່າ ເຈັ່ງທີ່ສາມາດທົດແທນທາດ NPK –ໄດ້ແມ່ນມີຢູ່ຫຼາຍແຫ່ງ.

(5). **ສິ່ງແວດລ້ອມ**

ພື້ນທີ່ຂອງປະເທດລາວປົກຄຸມດ້ວຍປ່າໄມ້ 10.7 ລ້ານ ຮ.ຕ ຫລື 45% ແລະ ດິນທີ່ຈະເປັນປ່າໄດ້ 10 ລ້ານ ຮ.ຕ ອັນເຮັດໃຫ້ປະເທດລາວອຸດົມສົມບູນໄປດ້ວຍຊີວະນາໆພັນ ແລະ ເປັນນຶ່ງໃນປະເທດອາຊີຕາເວັນອອກສ່ຽງໃຕ້ ທີ່ມີປ່າໄມ້ດົງດິບ. ດັ່ງນັ້ນເບິ່ງໃນແງ່ຂອງສິ່ງແວດລ້ອມໂລກແລ້ວ ລາວເປັນປະເທດທີ່ສຳຄັນຫລາຍ. ດັ່ງນັ້ນລັດຖະບານລາວຈຶ່ງປະກາດເຂດປ່າສະຫງວນ 20 ແຫ່ງກວມເອົາ 3,3 ລ້ານ ຮ.ຕ ແລະ ກໍມີສັດທີ່ຫາຍາກ ເຊັ່ນໂຕ<u>ເສົາລາ</u> ສ່ວນດ້ານພືດພັນຕ່າງໆຍັງບໍ່ທັນໄດ້ຄົ້ນຄ້ວາລະອຽດ.

ໃນຊ່ວງໄລຍະປີ 1999 - 2000 ຄາດວ່າມີປະມານ 335.000 ຮ.ຕ ດິນປ່າໄມ້ໄດ້ຖືກຊັບຊ່າວເປັນດິນກະສິກຳ ແລະ 37.000 ຮ.ຕ ເປັນທົ່ງຫຍ້າ ແລະ ປະມານ 33.000 ຮ.ຕ ເປັນອ່າງເຂື່ອນໄຟຟ້າ ແລະ ມີດິນຈຳນວນນຶ່ງຖືກຖິ້ມເປັນດິນປຸກສ້າງ. ດັ່ງນັ້ນ ມີປະມານ 405.000 ຮ.ຕ ດິນປ່າໄມ້ໄດ້ຖືກນຳໃຊ້ໃນການກະສິກຳ ແລະ ອື່ນໆ.

ເນື້ອທີ່ບາງຈຳນວນແມ່ນນອນໃນເຂດດິນຄ້ອຍຊັນໃກ້ກັບແຄມແມ່ນ້ຳ ແລະ ກໍມີບາງຈຳນວນບຸກລຸກປ່າສະຫງວນ ແລະ ເຂດປົກປັກຮັກສາແຫຼ່ງນ້ຳ. ດັ່ງນັ້ນຈຶ່ງມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການເຮັດການກະສິກຳດັ່ງກ່າວຕ້ອງໄດ້ມີການປັບປຸງ:

- ການເຮັດ ກະສິກຳຢູ່ໃນເຂດຄ້ອຍຊັນສູງໂດຍບໍ່ມີວິທີການຢ່າງລະມັດລະວັງ ເຊັ່ນ ການເຮັດນາຂັ້ນໃດ ຫລື ໄຖອ້ອມທາງຂວາງແບບໄປຕາມແນວລະດັບ.
- ການບໍ່ປູກຕົ້ນໄມ້ກັນເຈື່ອນ ຫລື ຫຍ້າກັນເຈື່ອນ.
- ການເຮັດກະສິກຳຢູ່ໃກ້ກັບຄັນນ້ຳເຮັດໃຫ້ຕາຝັ່ງເຈື່ອນ ແລະ ກໍເຮັດໃຫ້ຕົ້ນໄມ້ແຄມສູນເສັຽ.
- ການບໍ່ມີແຜນການຂະຫຍາຍເນື້ອທີ່ກະສິກຳ ເຮັດໃຫ້ສູນເສັຽປ່າໄມ້ທີ່ມີຄຸນຄ່າ.
- ການເຮັດນາຢູ່ເຂດດິນທາມ.
- ການນຳໃຊ້ຊີນລະປະທານບໍ່ຖືກຕ້ອງເຮັດໃຫ້ດິນເຄັມເກີດຂຶ້ນ.
- ການຈູດທົ່ງຫຍ້າລ້ຽງງົວ-ຄວາຍເຮັດໃຫ້ໄຟໄໝ້ທຳລາຍບ່ອນຢູ່ຂອງສັດປ່າ ແລະ
- ເຮັດໃຫ້ມີການນຳໃຊ້ດິນຫມູນວຽນສັ້ນເຂົ້າ.

ດັ່ງນັ້ນຈຶ່ງມີຄວາມຈຳເປັນທີ່ຈະຕ້ອງເຮັດຄູ່ມື ປົດສະເຕີໂຄສະນາການໃຊ້ດິນຖືກຕ້ອງໃຫ້ທຸກພາກສ່ວນໄດ້ຮູ້ນຳ.

### 3.2.2 ສະຖາບັນການຄຸ້ມຄອງແລະ ການຈັດຕັ້ງ

(1). **ການຈັດຕັ້ງຢູ່ສູນກາງ**

ມີຫລາຍອົງການຈັດຕັ້ງຢູ່ໃນລະດັບຂັ້ນສູນກາງທີ່ພົວພັນກັບວຽກງານກະສິກຳ ແລະ ພັດທະນາຊົນນະບົດ. ຄະນະກຳມະການແຜນການແຫ່ງລັດຊຶ່ງເປັນເສນາທິການໃຫ້ແກ່ສະພາລັດຖະມົນຕີ ໃນການປະສານງານວຽກງານພັດທະນາ ແລະວາງງົບປະມານ ແລະກຽມບົດແນະນຳກ່ຽວກັບການສະເໜີໂຄງການຕ່າງໆ. ຄະນະກຳມະການ ແລະການຮ່ວມມື ເປັນຜູ້ສັງລວມແຜນການຕ່າງໆຈາກຜູ້ໃຫ້ທຶນ ແລະປະສານງານການຊ່ວຍເຫລືອຕ່າງໆ. ຄະນະຊີ້ນຳພັດທະນາຊົນນະບົດ ແມ່ນອົງການຈັດຕັ້ງທີ່ຊີ້ນຳແຜນງານຈຸດສຸມພັດທະນາຊົນນະບົດ. ກະຊວງກະສິກຳ ແລະປ່າໄມ້ມີໜ້າທີ່ຮັບຜິດຊອບການສ້າງແຜນຍຸດທະສາດ ແລະການສ້າງແຜນການຜະລິດ ແລະ ກະສິກຳອອກກົດໝາຍລະບຽບການກ່ຽວກັບກະສິກຳແລະປ່າໄມ້ ແລະເຮັດການຄົ້ນຄ້ວາທາງເຕັກນິກກະສິກຳ ແລະປ່າໄມ້. ທັງໝົດມີຢູ່ 11 ອົງການທີ່ຢູ່ພາຍໃຕ້ ກະຊວງກະສິກຳ ແລະ ປ່າໄມ້ ດັ່ງທີ່ໄດ້ສະແດງໃນຮູບ.




ຮູບ 3.1 ໂຄງຮ່າງການຈັດຕັ້ງ ກະຊວງ ກະສິກຳ ແລະ ປ່າໄມ້

ຕາຕະລາງ 3.5. ໜ້າທີ່ຂອງບັນດາກົມແລະສະຖາບັນຂອງກະຊວງກະສິກຳ ແລະປ່າໄມ້

| ການຈັດຕັ້ງ | ໜ້າທີ່ |
|---|---|
| ຫ້ອງການ | - ເຕົ້າໂຮມສັງລວມສະຫລຸບວຽກງານປະຈຳອາທິດ ປະຈຳເດືອນ ປະຈຳງວດ ແລະປະຈຳປີໃຫ້ແກ່ກະຊວງ.<br>- ສຶກສາເອກະສານວິຊາການຕ່າງໆ ກົດໝາຍ,ນະໂຍບາຍແລະລະບຽບການເພື່ອສະເໜີຕໍ່ລັດຖະມົນຕີ.<br>- ສຶກສາແລະຮັບຮອງເອົາເອກະສານແລະລະບຽບການທີ່ໄດ້ສະເໜີມາຈາກກະສິກຳແຂວງ ກະສິກຳເມືອງ ກ່ອນຍື່ນສະເໜີໃຫ້ລັດຖະມົນຕີຮັບຮອງ.<br>- ປະສານງານກັບອົງການຈັດຕັ້ງຕ່າງໆແລະອົງການ NGO ໃນວຽກງານກະສິກຳ. |
| ກົມຈັດຕັ້ງແລະພະນັກງານ | - ສຶກສາແນວຄິດການເມືອງໃຫ້ພະນັກງານ<br>- ຕິດຕາມວຽກງານພັກແລະລາຍງານໃຫ້ຄະນະພັກກະຊວງ<br>- ຊຸກຍູ້ຕິດຕາມອົງການຈັດຕັ້ງມະຫາຊົນ<br>- ປະສານງານກັບກົມອື່ນໆເພື່ອເປີດກອງປະຊຸມ ແລະການຝຶກອົບຮົມທາງດ້ານວິຊາການທາງພາຍໃນ ແລະນອກປະເທດ<br>- ປະຕິບັດນະໂຍບາຍສະຫວັດດີການໃຫ້ແກ່ພະນັກງານ |
| ກົມແຜນການ | - ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກແລະລັດກ່ຽວກັບດ້ານກະສິກຳ<br>- ວາງແຜນການລະຍະຍາວ ແລະແຜນການ 5ປີ<br>- ວາງແຜນແລະຄຸ້ມຄອງແຜນການງົບປະມານການເງິນຂອງວຽກງານກະສິກຳໃນທົ່ວປະເທດ<br>- ປະສານງານກັບກະຊວງການເງິນເພື່ອຊຸກຍູ້ການຈັດຕັ້ງປະຕິບັດງົບປະມານປະຈຳປີ |
| ກົມກວດກາ | - ກວດກາພັກ ແລະການຈັດຕັ້ງຂອງລັດທີ່ຢູ່ໃນກະຊວງກະສິກຳ<br>- ຕິດຕາມການຈັດຕັ້ງປະຕິບັດໂຄງການພັດທະນາກະສິກຳຕ່າງໆຕີລາຄາເງິນໄດ້ຮັບແລະການໃຊ້ຈ່າຍທຶນຮອນ |
| ກົມປູກຝັງ | - ກົມປູກຝັງ ສຶກສາແລະນຳສະເໜີນະໂຍບາຍການພັດທະນາການປູກຝັງລະຍະສັ້ນ ລະຍະກາງ ລະຍະຍາວ ແລະແຜນການ 5ປີ<br>- ວິໄຈສະພາບການຜະລິດ, ເສດຖະກິດສັງຄົມແລະການຕະຫລາດເພື່ອການພັດທະນາກະສິກຳ<br>- ສຶກສານະໂຍບາຍເພື່ອສະໜັບສະໜູນທຸລະກິດກະສິກຳແລະກຸ່ມຜູ້ຜະລິດ ຄຸ້ມຄອງການຝຶກອົບຮົມກ່ຽວກັບການສົ່ງເສີມ ການຜະລິດຂອງກຸ່ມຊາວນາ ການຜະລິດທຸລະກິດກະສິກຳ<br>ເສດຖະກິດແລະການຕະຫລາດ.<br>- ປະຕິບັດລະບຽບການການຜະລິດ ການຕະຫລາດກ່ຽວກັບກົນຈັກກະສິກຳ ແລະຊາເຂົ້າກະສິກຳ<br>- ສຶກສາແລະວາງແຜນການນຳໃຊ້ດິນ, ການປ້ອງກັນພືດແລະການຄອບຄອງທີ່ດິນ |
| ກົມຊົນລະປະທານ | - ສຶກສາປະຕິບັດລະບຽບການແລະວາງແຜນເພື່ອຕິດຕາມການພັດທະນາຊົນລະປະທານ ລະບົບລະບາຍນ້ຳ ແລະການຕ້ານແລ້ງຕ້ານຖ້ວມ<br>- ສ້າງຕັ້ງລະບຽບການແລະມາດຕະຖານເຕັກນິກຕ່າງໆສຳລັບການສຳລວດແລະອອກແບບ<br>- ຕິດຕາມແລະກວດກາ ຕີລາຄາວຽກງານກໍ່ສ້າງ<br>- ສຶກສາ ແລະອອກລະບຽບການກ່ຽວກັບການຄຸ້ມຄອງແລະນຳໃຊ້ລະບົບຊົນລະປະທານ<br>- ຕິດຕາມກຸ່ມນຳໃຊ້ນ້ຳ<br>- ວາງລະບຽບການກ່ຽວກັບການນຳໃຊ້ກົນຈັກໃນການກໍ່ສ້າງສ້ອມແປງລະບົບຊົນລະປະທານ |
| ກົມອຸຕຸແລະອຸທົກກະສາດ | - ພະຍາກອນອາກາດແທກລະດັບນ້ຳ ແລະອອກຂ່າວ<br>- ສະຫລຸບແລະວິເຄາະ ແລະເຜີຍແຜ່ຂໍ້ມູນດ້ານອຸຕຸນິຍົມ ແລະອຸທົກກະສາດ ສຳລັບການວາງແຜນພັດທະນາເສດຖະກິດທົ່ວປະເທດ |
| ກົມປ່າໄມ້ | - ວາງແຜນລະຍະສັ້ນ ລະຍະກາງ ແລະລະຍະຍາວເພື່ອພັທະນາວຽກງານປ່າໄມ້ໃຫ້ຖືກຕ້ອງຕາມນະໂຍບາຍຂອງລັດຖະບານແລະຕາມຍຸດທະສາດຂອງການພັດທະນາປ່າໄມ້<br>- ຕິດຕາມຕີລາຄາບັນດາໂຄງການພັດທະນາປ່າໄມ້<br>- ສ້າງກົດໝາຍແລະລະບຽບຂອງຂະແໜງການປ່າໄມ້<br>- ຄຸ້ມຄອງການປູກໄມ້, ການສົ່ງເສີມແລະອຸດສະຫະກຳໄມ້<br>- ຈັດຕັ້ງປະຕິບັດແຜນການຄຸ້ມຄອງຮັກສາປ່າສະຫງວນແລະພັດທະນາແຫລ່ງນ້ຳ<br>- ຫລຸດຜ່ອນການຖາງປ່າເຮັດໄຮ່ແລະຈັດສັນອາຊີບຄົງທີ່ |

| | |
|---|---|
| ກົມລ້ຽງສັດແລະການປະມົງ | - ວາງແຜນລະຍະສັ້ນ ລະຍະກາງ ລະຍະຍາວ ເພື່ອພັດທະນາວຽກງານລ້ຽງສັດແລະການປະມົງໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກແລະລັດ<br>- ອອກລະບຽບການແລະສ້າງມາດຕະຖານເຕັກນິກກ່ຽວກັບການລ້ຽງສັດແລະການປະມົງ<br>- ຖ່າຍທອດເຕັກໂນໂລຊີກ່ຽວກັບການລ້ຽງສັດ ແລະການປຸງແຕ່ງ<br>- ຕິດຕາມແລະຊຸກຍູ້ສູນຜະລິດພັນສັດ ສູນຝຶກອົບຮົມ ແລະທຸລະກິດທີ່ກ່ຽວກັບການລ້ຽງສັດ |
| ສະຖາບັນຄົ້ນຄ້ວາກະສິກຳແລະປ່າໄມ້ | - ເພື່ອສຶກສາຊັບພະຍາກອນທຳມະຊາດ ແລະເສດຖະກິດສັງຄົມເພື່ອເຮັດແຜນແມ່ບົດຂອງການນຳໃຊ້ດິນແລະການພັດທະນາກະສິກຳປ່າໄມ້ໂດຍການຈັດແບ່ງເຂດ<br>- ສຶກສາແລະຄົ້ນຄ້ວາທົດລອງວຽກງານກະສິກຳແລະປ່າໄມ້ເພື່ອສະໜັບສະໜູນການກະສິກຳຮອບດ້ານ ການຜະລິດສະບຽງ ແລະການຜະລິດສິນຄ້າ<br>- ເຜີຍແຜ່ຂໍ້ມູນຂ່າວສານເຕັກໂນໂລຊີກ່ຽວກັບດ້ານກະສິກຳ ເພື່ອວາງແຜນບຸລະມະສິດ ແລະເພື່ອຮັບໃຊ້ການສົ່ງເສີມກະສິກຳ |
| ສະພາວິທະຍາສາດ | -ເພື່ອສະໜອງບໍລິການສົ່ງເສີມ ແລະ ເຜີຍແຜ່ເຕັກໂນໂລຢີດ້ານກະສິກຳ ແລະ ປ່າໄມ້ເພື່ອຜັນຂະຫຍາຍບັນດາເປົ້າໝາຍຂອງລັດຖະບານ<br>- ເພື່ອສຶກສາ ແລະ ນຳໃຊ້ບັນດາລະບຽບການ, ວິທີການ ແລະ ນະໂຍບາຍທີ່ກ່ຽວພັນເຖິງການການສົ່ງເສີມກະສິກຳ ແລະ ປ່າໄມ້<br>- ເພື່ອສະໜອງ ແລະ ຖ່າຍທອດເຕັກໂນໂລຢີທີ່ເໝາະສົມໃຫ້ແກ່ຜູ້ນຳໃຊ້ –ແລະ ເກັບກຳຜົນຮັບຄືນໜ້າສະຖາບັນຄົ້ນຄວ້າ<br>- –ເພື່ອສະໜອງການຝຶກອົບຮົມໃນລະດັບຕ່າງໆ<br>- –ເພື່ອສະໜອງວັດຖຸປັດໃຈ ການຜະລິດກະສິກຳ ແລະ ປ່າໄມ້ຖ້າຫາກຈຳເປັນ |

ແຫຼ່ງ: ກະຊວງກະສິກຳ ແລະປ່າໄມ້

(2). <u>ການຈັດຕັ້ງຢູ່ທ້ອງຖິ່ນ</u>

ເຈົ້າແຂວງເປັນຜູ້ຮັບຜິດຊອບໂດຍກົງຕໍ່ການປະຕິບັດ ວຽກການກະສິກຳປ່າໄມ້ໃນແຂວງຂອງຕົນ ສ່ວນກົມ ຫລື ພະແນກກະສິກຳຢູ່ໃນແຕ່ລະແຂວງເປັນຜູ້ໃຫ້ທີ່ປຶກສາດ້ານວຽກກະສິກຳ. ພະແນກກະສິກຳປ່າໄມ້ແຂວງ ແມ່ນຮັບຜິດຊອບໃນການວາງແຜນ ປະຕິບັດລະບຽບຫລັກການ ແລະກົດໝາຍສຳລັບຊຸກຍູ້ການຜະລິດຢູ່ໃນແຂວງຂອງຕົນ. ວຽກງານຕົ້ນຕໍຂອງພະແນກແມ່ນຕິດຕາມຄວາມຄືບໜ້າຂອງໂຄງການໂດຍສະເພາະໂຄງການຊົນລະປະທານ ແລະ ໃຫ້ການປຶກສາໃຫ້ແຂວງໃນການພັດທະນາຈຸດສຸມການຜະລິດທຸລະກິດກະສິກຳຢູ່ໃນແຂວງ. ພະແນກກະສິກຳ ແລະປ່າໄມ້ບໍ່ໄດ້ພົວພັນໂດຍກົງກັບການຄ້າ ແລະການສິນເຊື່ອກະສິກຳ. ພະແນກກະສິກຳມີດ້ວຍກັນ 6 ຂະແໜງ ເຊັ່ນ : (I) ມີຫ້ອງການ, (ii) ປູກຝັງສົ່ງເສີມ, (iii) ລ້ຽງສັດການປະມົງ, (iv) ການປ່າໄມ້, (v) ຊົນລະປະທານ, (vi) ອຸຕຸນິຍົມ ແລະອຸທົກກະສາດ. ຫົວໜ້າພະແນກກະສິກຳປ່າໄມ້ແຂວງ ມີໜ້າທີ່ຮັບຜິດຊອບຕໍ່ລັດມົນຕີ ແລະເຈົ້າແຂວງ.

ຫ້ອງການກະສິກຳປ່າໄມ້ເມືອງມີຢູ່ 5 ຂະແໜງຄື : (I) ບໍລິຫານ, (ii) ປູກຝັງ, (iii) ສົ່ງເສີມການລ້ຽງສັດ, (iv) ປະໂມງ, (v) ຊົນລະປະທານ, ຫົວໜ້າຫ້ອງການກະສິກຳປ່າໄມ້ເມືອງມີໜ້າທີ່ຮັບຜິດຊອບຕໍ່ເຈົ້າເມືອງ ແລະຫົວໜ້າພະແນກກະສິກຳປ່າໄມ້. ວຽກງານລັດຂອງພະນັກງານກະສິກຳເມືອງແມ່ນຕິດຕາມສົ່ງເສີມການຜະລິດການປູກເຂົ້າ, ການສັກຢາກັນພະຍາດສັດ, ການກວດກາ ແລະຕິດຕາມສະຖິຕິສັດ, ຕິດຕາມແລະກວດກາການກໍ່ສ້າງສ້ອມແປງຊົນລະປະທານ, ກວດການການປຸງແຕ່ງໂຮງເລື່ອຍກ່ຽວກັບການຜະລິດຕະພັນໄມ້, ຄຸ້ມຄອງສັດປ່າ ແລະອື່ນໆ.

ອຳນາດການປົກຄອງບ້ານແມ່ນມີໜ້າທີ່ຮັບຜິດຊອບແນະນຳລະບຽບການກົດໝາຍຂ່າວສານ ຫລືໂຄງການກ່ຽວກັບການກະສິກຳ ປ່າໄມ້ໃຫ້ແກ່ປະຊາຊົນ. ນາຍບ້ານມີໜ້າທີ່ຮັບຜິດຊອບຕໍ່ທ່ານເຈົ້າເມືອງ